# ສຳນວນຄະດີ ແພ່ງ ສຳລັບ ນັກສຶກສາ ແລະ ນັກຝຶກອົບຮົມ ກົດໝາຍ

# Civil Mock Case file for Legal Education and Training

ໂດຍ ກຸ່ມພັດທະນາການສຶກສາ ແລະ ຝຶກອົບຮົມໃນຂົງເຂດຍຸຕິທຳ
ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ

ໂດຍການຮ່ວມມືກັນລະຫວ່າງ ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ,
ກະຊວງຍຸຕິທຳ, ອົງການໄອຍະການປະຊາຊົນ, ສານປະຊາຊົນ
ກັບ ອົງການຮ່ວມມືສາກົນ ຍີ່ປຸ່ນ (JICA)

Copyright by JICA

ປີ 2018

# ຄຳນຳ

ສຳນວນຄະດີຈຳລອງ ມີຄວາມສຳຄັນຕໍ່ການພັດທະນາການສຶກສາກົດໝາຍ ຢູ່ສະຖາບັນການສຶກສາຕ່າງໆ, ເຮັດໃຫ້ເຂົ້າໃຈເປັນເອກະພາບທາງດ້ານທິດສະດີກົດໝາຍ, ລະບຽບການ, ຂັ້ນຕອນ ແລະ ວິທີການນຳໃຊ້ກົດໝາຍ ຢ່າງຖືກຕ້ອງ, ຊັດເຈນ, ຮັບປະກັນການສ້າງນັກກົດໝາຍໃຫ້ມີຄຸນນະພາບ.

ສະນັ້ນ, ມະຫາວິທະຍາໄລແຫ່ງຊາດ, ກະຊວງຍຸຕິທຳ, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ ໂດຍໄດ້ຮັບການສະໜັບສະໜູນຈາກອົງການໄຈກາ (JICA) ປະເທດຍີ່ປຸ່ນ ຂອງໂຄງການຮ່ວມມືພັດທະນາຊັບພະຍາກອນມະນຸດໃນຂົງເຂດຍຸຕິທຳ ຊຶ່ງແມ່ນກຸ່ມພັດທະນາການສຶກສາ ແລະ ຝຶກອົບຮົມ ໃນຂົງເຂດຍຸຕິທຳໄດ້ສ້າງສຳນວນຄະດີຈຳລອງນີ້ຂຶ້ນມາໂດຍມີເປົ້າໝາຍນຳໃຊ້ເປັນເອກະສານປະກອບການຮຽນ-ການສອນ ຢູ່ 4 ສະຖາບັນດັ່ງກ່າວ.

ສຳນວນຄະດີຈຳລອງນີ້ຖືກສ້າງຂຶ້ນໂດຍອີງໃສ່ເຫດການຄະດີຕົວຈິງທີ່ເກີດຂຶ້ນຢູ່ໃນສັງຄົມປັດຈຸບັນ. ສະນັ້ນ ຖ້າຊື່, ນາມສະກຸນ ລວມທັງຊື່ສະຖານທີ່ ຫາກກົງກັບຊື່, ນາມສະກຸນ ຂອງບຸກຄົນໃດບຸກຄົນໜຶ່ງ ຫຼື ສະຖານທີ່ໃດສະຖານທີ່ໜຶ່ງ ແມ່ນຂໍອະໄພໄວ້ນະທີ່ນີ້ດ້ວຍ.

**ຄະນະຊີ້ນຳໂຄງການ,**

Copyright by JICA

# ຄໍາເຫັນຂອງຄະນະຊ່ຽວຊານ

ມະຫາວິທະຍາໄລແຫ່ງຊາດ ແລະ ຄະນະນິຕິສາດ ແລະ ລັດຖະສາດ (ຕໍ່ໄປເອີ້ນວ່າ: "ສະຖາບັນສຶກສາກົດໝາຍ" ), ສະຖາບັນຍຸຕິທໍາແຫ່ງຊາດ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມສານຂອງສານປະຊາຊົນສູງສຸດ ແລະ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ຂອງໄອຍະການປະຊາຊົນສູງສຸດ (ຕໍ່ໄປຈະເອີ້ນວ່າ: "ສະຖາບັນຝຶກອົບຮົມຕໍ່ເນື່ອງ") ຂອງລາວ ໄດ້ພັດທະນາລະບົບການສຶກສາໃນຂົງເຂດຍຸຕິທໍາ ໂດຍໄດ້ປະສານງານກັນຢ່າງສອດຄ່ອງ ແລະ ດໍາເນີນວຽກງານຢ່າງເປັນຂັ້ນຕອນ. ສະຖາບັນສຶກສາກົດໝາຍ, ສະຖາບັນຍຸຕິທໍາແຫ່ງຊາດ ແລະ ສະຖາບັນຝຶກອົບຮົມຕໍ່ເນື່ອງໄດ້ແບ່ງໜ້າທີ່ຮັບຜິດຊອບໃນການກໍານົດບົດບາດ ເພື່ອໃຫ້ຄວາມຮູ້ ແລະ ຝຶກອົບຮົມ ຕາມລະດັບຂອງແຕ່ລະສະຖາບັນ. ໃນນັ້ນ, ແຕ່ລະສະຖາບັນໄດ້ແບ່ງໜ້າທີ່ຮັບຜິດຊອບກັນຄື: ລະດັບສະຖາບັນສຶກສາກົດໝາຍແມ່ນສຸມໃສ່ການຮຽນຮູ້ດ້ານທິດສະດີກົດໝາຍ, ລະດັບສະຖາບັນຍຸຕິທໍາແຫ່ງຊາດແມ່ນສຸມໃສ່ພາກທິດສະດີ 40 ສ່ວນຮ້ອຍ, ພາກປະຕິບັດຕົວຈິງ 60 ສ່ວນຮ້ອຍ ແລະ ລະດັບສະຖາບັນຝຶກອົບຮົມຕໍ່ເນື່ອງແມ່ນສຸ່ມໃສ່ພາກທິດສະດີ 10 ສ່ວນຮ້ອຍ, ພາກປະຕິບັດຕົວຈິງ 90 ສ່ວນຮ້ອຍ. ຫຼັກສູດຕ່າງໆເຊັ່ນ ວິທີການສິດສອນ ໃນລະດັບຂອງແຕ່ລະສະຖາບັນ ແມ່ນໄດ້ຮັບການປະສານງານ ໂດຍໄດ້ແລກປ່ຽນຂໍ້ມູນກັນລະຫວ່າງພາກສ່ວນທີ່ກ່ຽວຂ້ອງ, ໄດ້ກໍານົດ ແລະ ດໍາເນີນວຽກງານ ຫຼັງການພິຈາລະນາຢ່າງເປັນປົກກະຕິ ຕາມການແບ່ງໜ້າທີ່ຮັບຜິດຊອບດັ່ງທີ່ໄດ້ກ່າວມານີ້ ກໍຖືວ່າ ເປັນການດໍາເນີນວຽກງານຢ່າງເປັນຂັ້ນຕອນ ຊຶ່ງມີຄວາມສໍາຄັນໃນການສ້າງນັກວິຊາຊີບກົດໝາຍໃຫ້ມີຄວາມສະດວກລາບລື່ນ.

ພ້ອມກັນນັ້ນ, ຍັງສາມາດສັງລວມໄດ້ຄວາມສາມາດພື້ນຖານທີ່ນັກວິຊາຊີບກົດໝາຍຄວນມີ, ດັ່ງລຸ່ມນີ້:

1. ຄວາມເຂົ້າໃຈດ້ານທິດສະດີ ກ່ຽວກັບກົດໝາຍພື້ນຖານ.
2. ຄວາມເຂົ້າໃຈດ້ານການອະທິບາຍມາດຕາ (ປະເດັນຫຼັກຂອງເນື້ອໃນມາດຕາ) ກ່ຽວກັບກົດໝາຍພື້ນຖານ
3. ຄວາມເຂົ້າໃຈ ກ່ຽວກັບການດໍາເນີນຄະດີ ( ທາງແພ່ງ ແລະ ອາຍາ)
4. ຄວາສາມາດເກັບກໍາຂໍ້ມູນ, ຫຼັກຖານທີ່ຈໍາເປັນ
5. ຄວາມສາມາດຢືນຢັນຄວາມຈິງໂດຍອີງໃສ່ຫຼັກຖານ
6. ຄວາມສາມາດສືບຫາຄວາມຈິງທີ່ຈໍາເປັນ ເພື່ອແກ້ໄຂຄະດີ (ເຫດການ)
7. ຄວາມສາມາດສະຫຼຸບໄດ້ ໂດຍການນໍາເອົາຄວາມຈິງໄປໃຊ້ໃນບັນທັດຖານ (ເນື້ອໃນມາດຕາ)

ສິ່ງເຫຼົ່ານີ້ຄືຄວາມສາມາດ. ສະຫຼຸບໄດ້ວ່າ, ສະຖາບັນສຶກສາກົດໝາຍ, ສະຖາບັນຍຸຕິທາແຫ່ງຊາດ, ສະຖາບັນຝຶກອົບຮົມຕໍ່ເນື່ອງ ມີຄວາມຈໍາເປັນຕ້ອງໄດ້ເລີ່ມສ້າງສາຍອາຊີບທີ່ເປັນ ນັກວິຊາຊີບກົດໝາຍ ໂດຍການສົ່ງເສີມຄວາມສາມາດຂ້າງເທິງນີ້ໃຫ້ແກ່ນັກຮຽນ ແລະ ຜູ້ເຂົ້າຝຶກອົບຮົມ.

ໂດຍມີ ສື່ການຮຽນການສອນສໍານວນຄະດີຈໍາລອງ ເປັນສື່ການຮຽນການສອນທີ່ມີປະສິດທິຜົນ ເພື່ອສ້າງໃຫ້ມີຄວາມສາມາດດັ່ງທີ່ໄດ້ກ່າວມາຂ້າງເທິງ. ສື່ການຮຽນການສອນນີ້ໄດ້ນໍາໃຊ້ ບົດບັນທຶກເຫດການສຸດທ້າຍທີ່ເກີດຂຶ້ນ (ບັນທຶກການຕັດສິນຄະດີຂັ້ນສຸດທ້າຍຕ່າງໆ) ມາເປັນວັດຖຸດິບ ແລະ ໄດ້ດັດແປງຂໍ້ມູນສ່ວນບຸກຄົນ, ຄວາມຈິງ ແລະ ຫຼັກຖານຕ່າງໆ ປັບໃຊ້ເປັນສື່ການຮຽນການສອນ. ສື່ການຮຽນການສອນສໍານວນຄະດີຈໍາລອງໄດ້ຮັບການສ້າງຂຶ້ນ ເພື່ອໃຫ້ເກີດປະສິດທິຜົນໂດຍສະເພາະ ເຮັດໃຫ້ເປັນສື່ການຮຽນການສອນທີ່ຈະພັດທະນາຄວາມສາມາດໃນຂໍ້ 4 ເຖິງ 7 ຂ້າງເທິງ ໃຫ້ມີປະສິດທິຜົນ, ເປັນສື່ການຮຽນການສອນທີ່ສາມາດຝຶກຝົນທັກສະການຄິດ ແລະ ທັກສະການອະທິບາຍ ໃຫ້ກັບນັກຮຽນ ແລະ ຜູ້ຝຶກອົບຮົມ ຊຶ່ງເປັນຜູ້ນໍາໃຊ້. ນອກຈາກນີ້, ຍັງເປັນສື່ການຮຽນການສອນ ທີ່ຈະຊ່ວຍໃນການຮຽນຮູ້ດ້ານທິດສະດີ ແລະ ເສີມສ້າງຄວາມເຂົ້າໃຈໃນຂັ້ນຕອນການດໍາເນີນຄະດີ. ຈາກການນໍາໃຊ້ສື່ການຮຽນການສອນນີ້ ຍັງຈະເປັນປະໂຫຍດໃຫ້ແກ່ການພັດທະນາທັກສະຄວາມສາມາດໃນຂໍ້ 1 ເຖິງ 3 ຂ້າງເທິງອີກດ້ວຍ.

ທາງໂຄງການ, ໂດຍມີກຸ່ມພັດທະນາການສຶກສາ ແລະ ຝຶກອົບຮົມໃນຂົງເຂດຍຸຕິທໍາ ເປັນໃຈກາງ ຫວັງຢ່າງຍິ່ງວ່າ ສໍານວນຄະດີຈໍາລອງທາງແພ່ງ 1 ເຫຼັ້ມ ແລະ ທາງອາຍາ 2 ເຫຼັ້ມ ທີ່ໄດ້ຖືກພັດທະນາຂຶ້ນມາໃຫ້ເປັນຕົ້ນແບບນີ້ ຈະໃຫ້ຄວາມຮູ້ ຊຶ່ງໄດ້ຈາກການສ້າງວຽກງານດັ່ງກ່າວ ແລະ ຫວັງວ່າໃນອະນາຄົດ ສໍານວນຄະດີຈໍາລອງອີກຫຼາກຫຼາຍປະເພດ ຈະໄດ້ຮັບການພັດທະນາຂຶ້ນ ຈາກການນໍາເອົາຄະດີປະເພດຕ່າງໆ ທີ່ເໝາະສົມກັບລະດັບຄວາມສາມາດຮັບໄດ້ຂອງນັກຮຽນ ກໍຄື ຜູ້ເຂົ້າຝຶກອົບຮົມ ມາປັບໃຊ້ ເພື່ອໃຫ້ມີການນໍາໃຊ້ກັນຢ່າງມີປະສິດທິຜົນ ອີກດ້ວຍ.

**ຄະນະຊ່ຽວຊານປະຈໍາໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທໍາ (ໄລຍະ 2)**

Copyright by JICA

## ຄົ້ນຄວ້າ ແລະ ຮຽບຮຽງເອກະສານໂດຍ :

### ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

| | | |
|---|---|---|
| 1. | ຮສ. ວຽງວິໄລ ທ່ຽງຈັນໄຊ | ຄະນະບໍດີ |
| 2. | ຮສ. ບຸນທ່ຽງ ພິມມະຈັນ | ຮອງຄະນະບໍດີ |
| 3. | ປທ. ວິໄຊ ສີຫາປັນຍາ | ຫົວໜ້າພາກວິຊາກົດໝາຍແພ່ງ |
| 4. | ປທ. ນາງ ວິໄລ ລັງກາວົງ | ຫົວໜ້າພາກວິຊາລັດຖະສາດ |
| 5. | ປອ. ນາງ ດວງມາລາ ຄໍາສິງກາ | ຫົວໜ້າພະແນກວິຊາການ |
| 6. | ປທ. ນາງ ແກ້ວພິລາ ອານຸວົງ | ຫົວໜ້າໜ່ວຍວິຊາກົດໝາຍແພ່ງ |

### ສະຖາບັນຍຸຕິທໍາແຫ່ງຊາດ ກະຊວງຍຸຕິທໍາ

| | | |
|---|---|---|
| 1. | ປທ. ບຸນຕາ ສ.ຜາບມີໄຊ | ຫົວໜ້າສະຖາບັນ |
| 2. | ປອ. ຈອມຄໍາ ບຸບຜາລີວັນ | ຫົວໜ້າກົມສົ່ງເສີມລະບົບຍຸຕິທໍາ |
| 3. | ປທ. ແສງພະຈັນ ວົງໂພທອງ | ຮອງຫົວໜ້າຫ້ອງການກະຊວງຍຸຕິທໍາ |
| 4. | ປທ. ນາງ ເພັດສະໄໝ ໄຊມຸງຄຸນ | ຮອງຫົວໜ້າສະຖາບັນ |
| 5. | ປທ. ນາງ ປາດຖະໜາ ບຸນເພັງ | ຫົວໜ້າພະແນກຄຸ້ມຄອງວິຊາການ |
| 6. | ປທ. ນາງ ມະນີຈັນ ພິລາພັນ | ທະນາຍຄວາມ |

### ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ ອົງການໄອຍະການປະຊາຊົນສູງສຸດ

| | | |
|---|---|---|
| 1. | ປທ. ນາງ ພອນເພັດ ອູ່ນແກ້ວ | ຫົວໜ້າສະຖາບັນ |
| 2. | ປທ. ນາງ ບົວຄໍາ ປະດັບດີ | ຮອງຫົວໜ້າກົມກວດກາ |
| 3. | ປທ. ດາບສະດາຈັນ ວົງໄຊ | ຫົວໜ້າຫ້ອງການສະຖາບັນ |
| 4. | ປຕ. ຄໍາອອນ ນາມມຸວົງ | ຫົວໜ້າພະແນກຝຶກອົບຮົມ |
| 5. | ປຕ. ນາງ ວຽງສະຫວັນ ແສງສຸລິຍາ | ຮອງຫົວໜ້າພະແນກຄົ້ນຄວ້າຫຼັກສູດ ແລະ ຂໍ້ມູນຂ່າວສານ |

### ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ ສານປະຊາຊົນສູງສຸດ

| | | |
|---|---|---|
| 1. | ປທ. ບຸນຂວາງ ທະວິສັກ | ຮອງປະທານສານປະຊາຊົນສູງສຸດ |
| 2. | ປທ. ສີສະຫວັນ ຫຼວງລາດ | ຜູ້ພິພາກສາ, ຫົວໜ້າສະຖາບັນ |
| 3. | ປທ. ໂພເງິນ ຈັນທະນະຄອນ | ຜູ້ພິພາກສາຄະນະສານການຄ້າ |
| 4. | ປທ. ທິບພະສອນ ລາດວົງໄຊ | ຮອງຫົວໜ້າສະຖາບັນ |
| 5. | ປຕ. ສຸລິນທອນ ພິມມະຈັນ | ຮອງຫົວໜ້າ ພະແນກຄົ້ນຄວ້າ, ຂໍ້ມູນຂ່າວສານ ແລະ ຫ້ອງສະໝຸດ |
| 6. | ປຕ. ນາງ ດາວອນ ຄໍາສີ | ຜູ້ຊ່ວຍຜູ້ພິພາກສາ |

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສານປະຊາຊົນ ເຂດ 2 ແຂວງ ວຽງຈັນ.

# ເສື້ອປົກຮູບຄະດີ

| ລ/ດ | ລາຍການເອກະສານ | ເລກທີ | ລົງວັນທີ | ມາຈາກ | ສະບັບ | ໃບ | ລຳດັບ ເອກະ ສານ |
|---|---|---|---|---|---|---|---|
| 1 | ໃບຕາດິນ | | 9/1/2012 | | 1 | 1 | 5 |
| 2 | ຈົດໝາຍທາງເອເລັກໂຕຣນິກ | | 19/2/2012 | | 1 | 1 | 6 |
| 3 | ຈົດໝາຍທາງເອເລັກໂຕຣນິກ | | 20/2/2012 | | 1 | 1 | 7 |
| 4 | ຈົດໝາຍທາງເອເລັກໂຕຣນິກ | | 5/3/2012 | | 1 | 1 | 8 |
| 5 | ຈົດໝາຍທາງເອເລັກໂຕຣນິກ | | 6/3/2012 | | 1 | 1 | 9 |
| 6 | ຈົດໝາຍທາງເອເລັກໂຕຣນິກ | | 6/3/2012 | | 1 | 1 | 10 |
| 7 | ຈົດໝາຍທາງເອເລັກໂຕຣນິກ | | 30/3/2012 | | 1 | 1 | 11 |
| 8 | ຈົດໝາຍທາງເອເລັກໂຕຣນິກ | | 3/5/2012 | | 1 | 1 | 12 |
| 9 | ຈົດໝາຍທາງເອເລັກໂຕຣນິກ | | 7/5/2012 | | 1 | 1 | 13 |
| 10 | ຈົດໝາຍທາງເອເລັກໂຕຣນິກ | | 7/5/2012 | | 1 | 1 | 14 |
| 11 | ຈົດໝາຍທາງເອເລັກໂຕຣນິກ | | 19/5/2012 | | 1 | 1 | 15 |
| 12 | ຈົດໝາຍທາງເອເລັກໂຕຣນິກ | | 15/6/2012 | | 1 | 1 | 17 |
| 13 | ຈົດໝາຍທາງເອເລັກໂຕຣນິກ | | 15/6/2012 | | 1 | 1 | 18 |

Copyright by JICA

| | | | | | | | |
|---|---|---|---|---|---|---|---|
| 14 | ໃບແຕ່ງຕັ້ງທະນາຍຄວາມໂຈດ | | 18/10/2012 | | 1 | 1 | 2 |
| 15 | ໝາຍຮຽກ ຄັ້ງທີ I | XX5 | 19/11/2012 | | 1 | 1 | 19 |
| 16 | ໝາຍຮຽກ ຄັ້ງທີ I | XX6 | 19/11/2012 | | 1 | 1 | 20 |
| 17 | ໃບມອບສິດ | | 23/11/2012 | | | | 21 |
| 18 | ໝາຍຮຽກ ຄັ້ງທີ I | | 15/1/2013 | | 1 | 1 | 28 |
| 19 | ໝາຍຮຽກ ຄັ້ງທີ I | | 1/4/2013 | | 1 | 1 | 35 |
| 20 | ໝາຍຮຽກ ຄັ້ງທີ I | | 1/4/2013 | | 1 | 1 | 36 |
| 21 | ໝາຍຮຽກ ຄັ້ງທີ I | | 1/4/2013 | | 1 | 1 | 37 |

............, ວັນທີ ......./......./.......

ຈ່າສານ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສານປະຊາຊົນ ເຂດ 2 ແຂວງ ວຽງຈັນ.

# ເສື້ອປົກເນື້ອຄະດີ

| ລ/ດ | ລາຍການເອກະສານ | ເລກທີ | ລົງວັນທີ | ມາຈາກ | ສະບັບ | ໃບ | ລຳດັບເອກະສານ |
|---|---|---|---|---|---|---|---|
| 1 | ຄຳຮ້ອງຟ້ອງ | | 15/11/2012 | | 1 | 5 | 1 |
| 2 | ສັນຍາເຊົ່າຫ້ອງການ | | 7/12/2011 | | 1 | 4 | 3 |
| 3 | ໃບມອບ-ຮັບເງິນ | | 8/12/2011 | | 1 | 1 | 4 |
| 4 | ບົດບັນທຶກກອງປະຊຸມ | | 11/6/2012 | | 1 | 2 | 16 |
| 5 | ບົດບັນທຶກຮັບຊາບຄຳຮ້ອງຟ້ອງ | | 27/11/2012 | | 1 | 1 | 23 |
| 6 | ບົດບັນທຶກຮັບຊາບຄຳຮ້ອງຟ້ອງ | | 23/11/2012 | | 1 | 1 | 22 |
| 7 | ຄຳແກ້ຟ້ອງ | | 30/11/2012 | | 1 | 4 | 24 |
| 8 | ສັນຍາຊື້-ຂາຍ ທີ່ດິນ ແລະ ເຮືອນ | | 23/11/2012 | | 1 | 1 | 25 |
| 9 | ຄຳແກ້ຟ້ອງ | | 6/12/2012 | | 1 | 5 | 26 |
| 10 | ບົດບັນທຶກຄຳໃຫ້ການຄັ້ງທີ I | | 7/1/2013 | | 1 | 3 | 27 |
| 11 | ບົດບັນທຶກຄຳໃຫ້ການຄັ້ງທີ I | | 30/1/2013 | | 1 | 3 | 29 |
| 12 | ບົດບັນທຶກຄຳໃຫ້ການຄັ້ງທີ I | | 31/1/2013 | | 1 | 3 | 30 |
| 13 | ບົດບັນທຶກຄຳໃຫ້ການຄັ້ງທີ I | | 7/3/2013 | | 1 | 3 | 31 |
| 14 | ບົດສະຫຼຸບຄະດີແພ່ງ | | 20/3/2013 | | 1 | 3 | 32 |

............, ວັນທີ ......./......./.......

ຈ່າສານ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສານປະຊາຊົນ ເຂດ 2 ແຂວງ ວຽງຈັນ.

# ເສື້ອປົກປະຊຸມສານ

| ລ/ດ | ລາຍການເອກະສານ | ເລກທີ | ລົງວັນທີ | ມາຈາກ | ສະບັບ | ໃບ | ລຳດັບ ເອກະ ສານ |
|---|---|---|---|---|---|---|---|
| 1 | ໃບແຈ້ງຕອບຂອງຫົວໜ້າ ອົງການໄອຍະການ ເຂດ 2 ກ່ຽວກັບ ການຖະແຫຼງໃນທີ່ ປະຊຸມສານ | | 22/3/2013 | | 1 | 1 | 33 |
| 2 | ຂໍ້ຕົກລົງເອົາຄະດີອອກມາ ພິຈາລະນາໃນທີ່ປະຊຸມສານ | | 31/3/2013 | | 1 | 2 | 34 |
| 3 | ຄຳຖະແຫຼງຂອງອົງການໄອຍະ ການປະຊາຊົນເຂດ II | | 4/4/2013 | | 1 | 4 | 38 |
| 4 | ບົດບັນທຶກປະຊຸມສານ | | 4/4/2013 | | 1 | 3 | 39 |
| 5 | ຄຳຕັດສິນ | | 4/4/2013 | | 1 | 10 | 40 |

............, ວັນທີ ......./......./.......

ຈ່າສານ

Copyright by JICA

## ຕາຕະລາງທີ 1

| ບັນຊີເອກະສານ Document Inventory | | | | | | |
|---|---|---|---|---|---|---|
| ລ.ດ<br>No | ຊື່ເອກະສານ<br>Document title | ວັນ,ເດືອນ,ປີ<br>Preparation | ຜູ້ຮັບຜິດຊອບ<br>Author | ຜູ້ໃຫ້ການ<br>Deponent | ໜ້າ<br>Page | ໝາຍເຫດ<br>Remarke |
| 1 | ຄຳຮ້ອງຟ້ອງ | 15.11.2012 | ໂຈດ | | | ບໍລິສັດກໍ່ສ້າງສາກົນຈຳກັດ |
| 2 | ໃບແຕ່ງຕັ້ງທະນາຍຄວາມໂຈດ | 18.10.2012 | ໂຈດ | | | ທ້າວ ບຸນທັນ ຊະນະໃຈ<br>(ທະນາຍຄວາມໂຈດ) |
| 3 | ສັນຍາເຊົ່າຫ້ອງການ | 7.12.2011 | ນາງ ຄຳຫຼ້າ ຂາວດີ<br>ແລະ ນາງ ແຟນຕ້າ ລູຊີ | | | |
| 4 | ໃບມອບ-ຮັບເງິນ | 8.12.2011 | ນາງ ຄຳຫຼ້າ ຂາວດີ ແລະ<br>ທ້າວ ທອງດຳ ປະກາຍແສງ | | | |
| 5 | ໃບຕາດິນ | 9.1.2012 | ຫົວໜ້າຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນ | | | ອອກຊື່ ທ້າວ ທອງດຳ ປະກາຍແສງ |
| 6 | ຈົດໝາຍທາງເອເລັກໂຕຣນິກ | 19.2.2012<br>(11:45) | ທ່ານ ດວງເດືອນ ນວນສະຫວ່າງ<br>(ຫຼານທ້າວ ຄຳສີ ແສງຈັນເພັງ) | | | |
| 7 | ຈົດໝາຍທາງເອເລັກໂຕຣນິກ | 20.2.2012<br>(9:00) | ນາງ ແຟນຕ້າ ລູຊີ<br>(ບໍລິສັດກໍ່ສ້າງສາກົນຈຳກັດ) | | | |
| 8 | ຈົດໝາຍທາງເອເລັກໂຕຣນິກ | 5.3.2012<br>(19:12) | ທ້າວ ລຳເງິນ ຜາຕັ້ງ (ຫົວໜ້າການເງິນ<br>ແລະບໍລິຫານ ບໍລິສັດກໍ່ສ້າງສາກົນຈຳກັດ) | | | |
| 9 | ຈົດໝາຍທາງເອເລັກໂຕຣນິກ | 6.3.2012<br>(8:02) | ນາງ ແຟນຕ້າ ລູຊີ | | | |
| 10 | ຈົດໝາຍທາງເອເລັກໂຕຣນິກ | 6.3.2012<br>(9:13) | ທ້າວ ດວງເດືອນ ນວນສະຫວ່າງ | | | |
| 11 | ຈົດໝາຍທາງເອເລັກໂຕຣນິກ | 30.3.2012<br>(16:06) | ທ້າວ ລຳເງິນ ຜາຕັ້ງ | | | |
| 12 | ຈົດໝາຍທາງເອເລັກໂຕຣນິກ | 3.5.2012<br>(8:03) | ທ້າວ ລຳເງິນ ຜາຕັ້ງ | | | |
| 13 | ຈົດໝາຍທາງເອເລັກໂຕຣນິກ | 7.5.2012<br>(17:50) | ທ້າວ ດວງເດືອນ ນວນສະຫວ່າງ | | | |
| 14 | ຈົດໝາຍທາງເອເລັກໂຕຣນິກ | 7.5.2012<br>(21:34) | ນາງ ແຟນຕ້າ ລູຊີ | | | |

Copyright by JICA

| | | | | | | |
|---|---|---|---|---|---|---|
| 15 | ຈົດໝາຍທາງເອເລັກໂຕຣນິກ | 9.5.2012<br>(10:25) | ທ້າວ ລຳເງິນ ຍາຕັ້ງ | | | |
| 16 | ບົດບັນທຶກກອງປະຊຸມ | 11.6.2012 | ທ້າວ ລຳເງິນ ຍາຕັ້ງ<br>ແລະ ນ. ແຟນຕ້າ ລູຊີ | | | |
| 17 | ຈົດໝາຍທາງເອເລັກໂຕຣນິກ | 15.6.2012<br>(8:01) | ນາງ ຄຳຫຼ້າ ຂາວດີ | | | ນາງ ຄຳຫຼ້າ ຂາວດີ ໃຊ້ອີເມວຂອງ ທ້າວ ດວງເດືອນ |
| 18 | ຈົດໝາຍທາງເອເລັກໂຕຣນິກ | 15.6.2012<br>(9:35) | ນາງ ແຟນຕ້າ ລູຊີ | | | |
| 19 | ໝາຍຮຽກ ຄັ້ງທີ I | 19.11.2012<br>ເລກທີ xx5 | ນາງ ດອກໄມ້ ຈັນມະນີ (ຈ່າສານ) | ນາງ ຄຳຫຼ້າ ຂາວດີ | | |
| 20 | ໝາຍຮຽກ ຄັ້ງທີ I | 19.11.2012<br>ເລກທີ xx6 | ນາງ ດອກໄມ້ ຈັນມະນີ (ຈ່າສານ) | ທ້າວ ທອງດຳ<br>ປະກາຍແສງ | | |
| 21 | ໃບມອບສິດ | 23.11.2012 | ນາງ ຄຳຫຼ້າ ຂາວດີ | | | ທ້າວ ທຸມແພງ ສັນຕິສຸກ (ຜູ້ຮັບ) |
| 22 | ບົດບັນທຶກການຮັບຊາບຄຳຮ້ອງຟ້ອງ | 23.11.2012 | ນາງ ດອກໄມ້ ຈັນມະນີ (ຈ່າສານ) | | | ທ້າວ ທຸມແພງ ສັນຕິສຸກ (ຜູ້ຮັບ) |
| 23 | ບົດບັນທຶກການຮັບຊາບຄຳຮ້ອງຟ້ອງ | 27.11.2012 | ນາງ ດອກໄມ້ ຈັນມະນີ (ຈ່າສານ) | | | ທ້າວ ທອງດຳ ປະກາຍແສງ (ຜູ້ຮັບຊາບ) |
| 24 | ຄຳແກ້ຟ້ອງ | 30.11.2012 | ທ້າວ ທອງດຳ ປະກາຍແສງ<br>(ຈຳເລີຍທີ 2) | | | |
| 25 | ສັນຍາຊື້ຂາຍທີ່ດິນ ແລະ ເຮືອນ | 23.11.2011 | ນາງ ຄຳຫຼ້າ ຂາວດີ<br>ແລະ ທ້າວ ທອງດຳ ປະກາຍແສງ | | | ເອກະສານຄັດຕິດມາກັບຄຳແກ້ຟ້ອງ |
| 26 | ຄຳແກ້ຟ້ອງ | 6.12.2012 | ນາງ ຄຳຫຼ້າ ຂາວດີ<br>(ຈຳເລີຍທີ 1) | | | |
| 27 | ບົດບັນທຶກຄຳໃຫ້ການ ຄັ້ງທີ I | 7.1.2013<br>(10:30) | ນາງ ຈັນເພັງ ສະຫວ່າງ (ຜູ້ພິພາກສາ)<br>ແລະ ນາງ ດອກໄມ້ ຈັນມະນີ (ຈ່າສານ) | ທ້າວ ບຸນທັນ<br>ຊະນະໃຈ | | |
| 28 | ໝາຍຮຽກຄັ້ງທີ I | 15.1.2013 | ນາງ ດອກໄມ້ ຈັນມະນີ (ຈ່າສານ) | ນາງ ຄຳຫຼ້າ ຂາວດີ | | |
| 29 | ບົດບັນທຶກຄຳໃຫ້ການ ຄັ້ງທີ I | 30.1.2013<br>(9:00) | ນາງ ຈັນເພັງ ສະຫວ່າງ (ຜູ້ພິພາກສາ)<br>ແລະ ນາງ ດອກໄມ້ ຈັນມະນີ (ຈ່າສານ) | ທ້າວ ທຸມແພງ<br>ສັນຕິສຸກ | | |

Copyright by JICA

| | | | | | | |
|---|---|---|---|---|---|---|
| 30 | ບົດບັນທຶກຄຳໃຫ້ການ ຄັ້ງທີ I | 31.1.2013<br>(13:00) | ນາງ ຈັນເພັງ ສະຫວ່າງ (ຜູ້ພິພາກສາ)<br>ແລະ ນາງ ດອກໄມ້ ຈັນມະນີ (ຈ່າສານ) | ທ້າວ ທອງດຳ<br>ປະກາຍແສງ | | |
| 31 | ບົດບັນທຶກຄຳໃຫ້ການຊ້ອງໜ້າ ຄັ້ງທີ I | 7.3.2013<br>(9:30) | ນາງ ຈັນເພັງ ສະຫວ່າງ (ຜູ້ພິພາກສາ)<br>ແລະ ນາງ ດອກໄມ້ ຈັນມະນີ (ຈ່າສານ) | ທ້າວ ບຸນທັນ<br>ຊະນະໃຈ | | |
| 32 | ບົດສະຫຼຸບຄະດີແພ່ງ | 20.3.2013 | ນາງ ຈັນເພັງ ສະຫວ່າງ<br>(ຜູ້ພິພາກສາ) | | | |
| 33 | ໃບແຈ້ງຕອບຂອງຫົວໜ້າອົງການ ອຍກ ເຂດ 2 ກ່ຽວກັບການຖະແຫຼງທີ່ປະຊຸມຄະນະສານແພ່ງ | 22.3.2013 | ນາງ ຄຳແດງ ແສງຈັນ<br>(ຫົວໜ້າອົງການໄອຍະການປະຊາຊົນ ເຂດ II) | | | |
| 34 | ຂໍ້ຕົກລົງເອົາຄະດີອອກມາພິຈາລະນາໃນທີ່ປະຊຸມສານ | 31.3.2013 | ທ່ານ ຈັນນະຄອນ ທອງປັນຍາ<br>ຫົວໜ້າຄະນະສານແພ່ງ | | | |
| 35 | ໝາຍຮຽກໂຈດ ຄັ້ງທີ I | 1.4.2013 | ນາງ ດອກໄມ້ ຈັນມະນີ (ຈ່າສານ) | | | |
| 36 | ໝາຍຮຽກຈຳເລີຍ ຄັ້ງທີ I | 1.4.2013 | ນາງ ດອກໄມ້ ຈັນມະນີ (ຈ່າສານ) | | | ຈຳເລີຍທີ 1 |
| 37 | ໝາຍຮຽກຈຳເລີຍ ຄັ້ງທີ I | 1.4.2013 | ນາງ ດອກໄມ້ ຈັນມະນີ (ຈ່າສານ) | | | ຈຳເລີຍທີ 2 |
| 38 | ຄຳຖະແຫຼງຂອງຫົວໜ້າອົງການໄອຍະການປະຊາຊົນເຂດ II | 4.4.2013 | ນາງ ຄຳແດງ ແສງຈັນ<br>(ຫົວໜ້າອົງການໄອຍະການປະຊາຊົນ ເຂດ II) | | | |
| 39 | ບົດບັນທຶກປະຊຸມສານ | 4.4.2013 | ນາງ ດອກໄມ້ ຈັນມະນີ (ຈ່າສານ) | | | |
| 40 | ຄຳຕັດສິນຄະດີແພ່ງ | 4.4.2013 | ທ່ານ ຈັນນະຄອນ ທອງປັນຍາ<br>ປະທານຄະນະສານຕັດສິນ | | | |

Copyright by JICA

Copyright by JICA

# ລຳດັບເຫດການ (ຕາຕະລາງທີ 2)

| ລ.ດ<br>No | ວັນທີຂອງເຫດການ<br>Date | ເນື້ອໃນຂອງເຫດການ<br>Event | ຫຼັກຖານ<br>Evidence | ໝາຍເຫດ<br>Remarke |
|---|---|---|---|---|
| 1 | 23.10.2009 | ບໍລິສັດກໍ່ສ້າງສາກົນຈຳກັດ ແລະ ນາງ ຄຳຫຼ້າ ຂາວດີ ໄດ້ເຮັດສັນຍາເຊົ່າຫ້ອງການສະບັບເບື້ອງຕົ້ນ ກຳນົດເວລາ 2 ປີ ນັບແຕ່ວັນທີ 1 ມັງກອນ 2010 ເຖິງ 31 ທັນວາ 2011. | | |
| 2 | 23.11.2011 | ນາງ ຄຳຫຼ້າ ຂາວດີ ໄດ້ເຮັດສັນຍາຊື້-ຂາຍທີ່ດິນ ແລະ ເຮືອນ ກັບ ທ້າວ ທອງດຳ ປະກາຍແສງ | ສັນຍາຊື້-ຂາຍທີ່ດິນ ແລະ ເຮືອນ | |
| 3 | 7.12.2011 | ນາງ ຄຳຫຼ້າ ຂາວດີ (ຕາງໜ້າ ທ້າວ ຄຳສີ ແສງຈັນເພັງ) ໄດ້ເຮັດສັນຍາເຊົ່າຫ້ອງການ ກັບ ນາງ ແຟນຕ້າ ລູຊີ (ຜູ້ອຳນວຍການບໍລິສັດກໍ່ສ້າງສາກົນຈຳກັດ) | ສັນຍາເຊົ່າຫ້ອງການ | |
| 4 | | ພາຍຫຼັງໄດ້ເຮັດສັນຍາເຊົ່າເຮືອນແລ້ວ ນາງ ຄຳຫຼ້າ ຂາວດີ ໄດ້ຮັບເງິນຈຳນວນ 24.000 ໂດລາສະຫະລັດ ຈາກບໍລິສັດເປັນຄ່າເຊົ່າໜຶ່ງປີ, ຫຼັງຈາກນັ້ນ ນາງ ຄຳຫຼ້າ ຂາວດີ ໄດ້ມອບເງິນຈຳນວນ 20.000 ໂດລາ ໃຫ້ທ້າວ ທອງດຳ ປະກາຍແສງ, ສ່ວນ 4.000 ໂດລາ ຜູ້ກ່ຽວເອົາໄວ້ເພື່ອໄປແລ່ນເອກະສານໂອນກຳມະສິດທີ່ດິນ. | ບົດບັນທຶກຄຳໃຫ້ການ ທ້າວ ທຸມແພງ ສັນຕິສຸກ ແລະ ທ້າວ ທອງດຳ ປະກາຍແສງ | |
| 5 | 19.2.2012 | ທ້າວ ທອງດຳ ປະກາຍແສງ ຜູ້ຊື້ເຮືອນໄດ້ແຈ້ງຕໍ່ໂຈດ ວ່າຜູ້ກ່ຽວເປັນເຈົ້າຂອງເຮືອນ ແລະ ບໍ່ເຫັນດີໃຫ້ໂຈດເຊົ່າຕໍ່ | ຈົດໝາຍທາງເອເລັກໂຕຣນິກ ເວລາ 11:45 | |
| 6 | 3.5.2012 | ໂຈດໄດ້ແຈ້ງໃຫ້ ນາງ ຄຳຫຼ້າ ຂາວດີ ຮູ້ວ່າຈະຍ້າຍອອກ ຍ້ອນວ່າສັນຍາ ທີ່ ນາງ ຄຳຫຼ້າ ຂາວດີ ເຮັດຂຶ້ນນັ້ນເປັນສັນຍາຕົວະຍົວະຫຼອກລວງ | ຈົດໝາຍທາງເອເລັກໂຕຣນິກ ເວລາ 8:03 | |
| 7 | 1.7.2012 | ໂຈດໄດ້ຍ້າຍອອກຈາກເຮືອນ ແລະ ທວງເອົາເງິນທີ່ຕົນໄດ້ຈ່າຍລ່ວງໜ້າໄປແລ້ວ ຈຳນວນ 24.000 ໂດລາສະຫະລັດ ແຕ່ຖືກ ນາງ ຄຳຫຼ້າ ຂາວດີ ປະຕິເສດ | ບົດບັນທຶກຄຳໃຫ້ການຂອງໂຈດ | |

ເອກະສານລຳດັບທີ 1

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄຳຮ້ອງຟ້ອງ

ຮຽນ: ທ່ານປະທານສານປະຊາຊົນເຂດ II ແຂວງ ວຽງຈັນ.

ຂ້າພະເຈົ້າ ~~ທ້າວ/ນາງ~~ ບໍລິສັດກໍ່ສ້າງສາກົນຈຳກັດ ອາຍຸ…….. ປີ, ສັນຊາດ…. , ອາຊີບ…… ມີສຳນັກງານຕັ້ງຢູ່ ເຮືອນເລກທີ xxx , ໜ່ວຍ xxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງວຽງຈັນ ໂດຍແມ່ນ ທ່ານ ນາງ ແຟນຕ້າ ລູຊີ ເປັນຜູ້ອຳນວຍການ…..……………………………...……ໂຈດ

ທ່ານ ບຸນທັນ ຊະນະໃຈ ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ ເປັນຜູ້ຕາງໜ້າໂຈດ.

**ມີຈຸດປະສົງຮ້ອງຟ້ອງ ☑ ບຸກຄົນ, € ອົງການຈັດຕັ້ງ, € ວິສະຫະກິດ ດັ່ງລຸ່ມນີ້:**

1. ~~ທ້າວ~~/ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ເຮືອນເລກທີxxx, ໜ່ວຍxxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ, ໂທລະສັບ xxxxxxx ຈຳເລີຍທີ 1;
2. ທ້າວ/~~ນາງ~~ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ເຮືອນເລກທີ xxx, ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງວຽງຈັນ. ໂທລະສັບ xxxxxxx ຈຳເລີຍທີ 2.

**ກ່ຽວເລື່ອງ**: ທວງເອົາເງິນຄ່າເຊົ່າເຮືອນທີ່ໄດ້ຈ່າຍລ່ວງໜ້າຄືນ.

**ມູນຄ່າການຮ້ອງຟ້ອງ**:

ຈຳນວນເງິນ 24.000 ໂດລາສະຫະລັດ, ທີ່ດິນ……………ຕອນ……………………… ເນື້ອທີ່………………………………..ມູນຄ່າ……………………………………………… ອື່ນໆ………………………………………………………………………………

**(ບອກລາຍລະອຽດຈຳນວນສິ່ງຂອງທີ່ຮ້ອງຟ້ອງ ແລະ ຕີລາຄາເປັນເງິນ).**

Copyright by JICA

# I. ເນື້ອໃນການຮ້ອງຟ້ອງ

## ກ. ໃຫ້ເລົ່າປະຫວັດຄວາມເປັນມາຂອງເລື່ອງໂດຍຫຍໍ້

1. ໃນວັນທີ 23 ຕຸລາ 2009 ບໍລິສັດກໍ່ສ້າງສາກົນຈຳກັດ ໄດ້ເຮັດສັນຍາເຊົ່າຫ້ອງການ ກັບທ້າວ ຄຳສີ ແສງຈັນເພັງ ຊຶ່ງຫ້ອງການດັ່ງກ່າວຕັ້ງຢູ່ໜ່ວຍ xxx, ບ້ານວຽງແກ້ວ, ເມືອງວັງວຽງ, ແຂວງວຽງຈັນ,ໃບຕາດິນເລກທີ xxx, ໃນກຳນົດເວລາ ສອງປີ ເລີ່ມແຕ່ວັນທີ 1 ມັງກອນ 2010 ຫາວັນທີ 31 ທັນວາ 2011. ຈຸດປະສົງຂອງການເຊົ່າ ແມ່ນເພື່ອນຳໃຊ້ເປັນຫ້ອງການບໍລິຫານຂອງບໍລິສັດກໍ່ສ້າງສາກົນຈຳກັດ, ທາງບໍລິສັດໄດ້ຈ່າຍຄ່າເຊົ່າ 1.500 ໂດລາສະຫະລັດ ຕໍ່ເດືອນ ສຳລັບການເຊົ່າໄລຍະສອງປີ ລວມເປັນເງິນທັງໝົດ 36.000 ໂດລາສະຫະລັດ, ຄູ່ສັນຍາທັງສອງຝ່າຍໄດ້ປະຕິບັດສັນຍາສະບັບດັ່ງກ່າວຢ່າງຖືກຕ້ອງ, ຄົບຖ້ວນ.

2. ຫຼັງຈາກສັນຍາສະບັບທຳອິດສິ້ນສຸດແລ້ວ ຜູ້ໃຫ້ເຊົ່າໄດ້ສະເໜີຂຶ້ນລາຄາເຊົ່າເປັນ 2.000 ໂດລາສະຫະລັດຕໍ່ເດືອນ ສຳລັບການເຊົ່າໄລຍະສອງປີ ນັບແຕ່ວັນທີ 1 ມັງກອນ 2012 ເຖິງ ວັນທີ 31 ທັນວາ 2013 ໂດຍມີການເຊັນສັນຍາ ໃນວັນທີ 7 ທັນວາ 2011 ແລະ ບໍລິສັດກໍ່ສ້າງສາກົນຈຳກັດ ກໍຕົກລົງຮັບເອົາການສະເໜີເງື່ອນໄຂດັ່ງກ່າວ ດ້ວຍຄວາມເຊື່ອໝັ້ນວ່າ ຜູ້ໃຫ້ເຊົ່າຈະປະຕິບັດສັນຍາ ດ້ວຍຄວາມຈິງໃຈແລະ ບໍລິສຸດໃຈ ຊຶ່ງທາງບໍລິສັດໄດ້ຈ່າຍຄ່າເຊົ່າລ່ວງໜ້າເປັນເວລາໜຶ່ງປີແຕ່ວັນທີ 1 ມັງກອນ ເຖິງ ວັນທີ 31 ທັນວາ 2012 ເປັນເງິນຈຳນວນ 24.000 ໂດລາສະຫະລັດ ແລະຈະຈ່າຍຄ່າເຊົ່າປີທີສອງ ໃນຕົ້ນເດືອນມັງກອນ 2013 ຕາມການຕົກລົງໃນສັນຍາ (ເບິ່ງເອກະສານລຳດັບທີ 3 ສັນຍາເຊົ່າຫ້ອງການ).

3. ໃນວັນທີ 13 ພະຈິກ 2012 ທ້າວ ທອງດຳ ປະກາຍແສງ ເຈົ້າຂອງເຮືອນຜູ້ໃໝ່ ໄດ້ແຈ້ງທາງໂທລະສັບ ໃຫ້ທະນາຍຄວາມຂອງໂຈດຊາບວ່າ ນາງ ຄຳຫຼ້າ ຂາວດີ ຜູ້ຕາງໜ້າເຈົ້າຂອງເຮືອນຜູ້ເກົ່າ ໄດ້ເຮັດສັນຍາຊື້ຂາຍເຮືອນ ພ້ອມດ້ວຍສິດນຳໃຊ້ທີ່ດິນ (ທີ່ດິນບ່ອນຫ້ອງການຂອງບໍລິສັດຕັ້ງຢູ່) ໃຫ້ແກ່ຕົນແລ້ວ ຕັ້ງແຕ່ວັນທີ 23 ພະຈິກ 2011 ຜ່ານມາ. ສະນັ້ນ, ສາມາດຕີຄວາມໝາຍໄດ້ວ່າ ນາງຄຳຫຼ້າ ຂາວດີ ໄດ້ຕົວະຍົວະຫຼອກລວງບໍລິສັດ ໃຫ້ເຮັດສັນຍາສະບັບໃໝ່ ເພື່ອສ້າງຜົນປະໂຫຍດໃຫ້ແກ່ຕົນ ທັງໆທີ່ຮູ້ແລ້ວວ່າຕົນເອງບໍ່ມີສິດ ແລະ ບໍ່ໄດ້ຮັບການມອບສິດ ຈາກເຈົ້າຂອງເຮືອນຜູ້ໃໝ່ໃນການເຈລະຈາ ແລະ ເຮັດສັນຍາດັ່ງກ່າວ.

4. ໃນວັນທີ 19 ກຸມພາ 2012 ຝ່າຍຜູ້ໃຫ້ເຊົ່າໄດ້ແຈ້ງທາງຈົດໝາຍເອເລັກໂຕຣນິກ ເຖິງບໍລິສັດ ວ່າ ທ້າວ ຄຳສີ ແສງຈັນເພັງ ໄດ້ຂາຍເຮືອນເຊົ່າດັ່ງກ່າວໃຫ້ແກ່ ທ້າວ ທອງດຳ ປະກາຍແສງແລ້ວໂດຍທີ່ສັນຍາເຊົ່າຍັງບໍ່ທັນສິ້ນສຸດ ແລະ ບໍ່ໄດ້ແຈ້ງໃຫ້ແກ່ຜູ້ເຊົ່າຊາບລ່ວງໜ້າແຕ່ຢ່າງໃດ (ເບິ່ງເອກະສານລຳດັບທີ 4 ໜັງສືແຈ້ງທາງເອເລັກໂຕຣນິກ ຂອງທ້າວ ດວງເດືອນ ນວນສະຫວ່າງ).

5. ທ້າວ ທອງດຳ ປະກາຍແສງ ເຈົ້າຂອງເຮືອນເຊົ່າຄົນໃໝ່ບໍ່ຍອມຮັບຮູ້ສິດ ແລະ ຜົນປະໂຫຍດ ຂອງຜູ້ເຊົ່າຕາມຫຼັກການທີ່ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາປີ 2008 ໂດຍໄດ້ແຈ້ງໃຫ້ ບໍລິສັດ ຍົກຍ້າຍອອກຈາກເຮືອນເຊົ່າດັ່ງກ່າວ ໃນວັນທີ 31 ທັນວາ 2012 ເຫັນວ່າ ບໍ່ສອດຄ່ອງກັບສັນຍາທີ່ໄດ້ເຊັນກັນກ່ອນໜ້ານີ້ ກັບ ນາງ ຄຳຫຼ້າ ຂາວດີ ຊຶ່ງສັນຍາເຊົ່າດັ່ງກ່າວມີກຳນົດເວລາສອງປີ ຄື ນັບແຕ່ວັນທີ 1 ມັງກອນ 2012 ເຖິງ ວັນທີ 31

Copyright by JICA

ທັນວາ 2013. ດ້ວຍເຫດຜົນດັ່ງກ່າວ ບໍລິສັດຈຶ່ງໄດ້ພະຍາຍາມຕິດຕໍ່ກັບ ທ້າວ ດວງເດືອນ ນວນສະຫວ່າງ (ຜົວຂອງ ນາງ ຄຳຫຼ້າ) ແລະ ນາງ ຄຳຫຼ້າ ຂາວດີ (ຜູ້ຕາງໜ້າ) ທີ່ເປັນຫຼານຂອງ ທ້າວ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນເຊົ່າ ເພື່ອຖາມເຖິງບັນຫາຕ່າງໆທີ່ເກີດຂຶ້ນ ແຕ່ຖືກປະຕິເສດຈາກພວກກ່ຽວ (ເບິ່ງເອກະສານລຳດັບທີ 7 ແລະ 11).

6. ໃນວັນທີ 4 ມິຖຸນາ 2012 ທາງບໍລິສັດ ໄດ້ສົ່ງຈົດໝາຍທາງການເລກທີ xxx ເຖິງ ນາງ ຄຳຫຼ້າ ຂາວດີ ເພື່ອແຈ້ງວ່າຈະຍ້າຍອອກຈາກເຮືອນເຊົ່າໃນວັນທີ 1 ກໍລະກົດ 2012 ແລະ ທວງເອົາຄ່າເຊົ່າຄືນ ສຳລັບໄລຍະເດືອນກໍລະກົດຫາເດືອນທັນວາ ເປັນເງິນຈຳນວນ 12.000 ໂດລາສະຫະລັດ.

ໃນວັນທີ 15 ມິຖຸນາ 2012 ທ້າວ ດວງເດືອນ ນວນສະຫວ່າງ ໄດ້ສົ່ງຈົດໝາຍທາງເອເລັກໂຕຣນິກ ເຖິງ ບໍລິສັດ ເພື່ອແຈ້ງວ່າ ຕົນສາມາດຕິດຕໍ່ກັບ ທ້າວ ຄຳສີ ແສງຈັນເພັງ ໄດ້ແລ້ວ ແລະທ້າວ ຄຳສີ ແສງຈັນເພັງ ກໍໄດ້ປະຕິເສດທີ່ຈະສົ່ງເງິນຄືນໃຫ້ຜູ້ເຊົ່າ ເນື່ອງຈາກວ່າເງິນຈຳນວນດັ່ງກ່າວໄດ້ມອບໃຫ້ ທ້າວ ທອງດຳ ປະກາຍແສງ ແລ້ວ ແລະ ຜູ້ກ່ຽວຈະສົ່ງເງິນຄືນແຕ່ 6.000 ໂດລາສະຫະລັດເທົ່ານັ້ນ ໂດຍບໍ່ມີເຫດຜົນຊຶ່ງການກະທຳດັ່ງກ່າວເປັນການລະເມີດສັນຍາ ແລະ ກົດໝາຍ (ເບິ່ງເອກະສານລຳດັບທີ 15).

7. ທ້າວ ດວງເດືອນ ນວນສະຫວ່າງ ໄດ້ແຈ້ງທາງຈົດໝາຍເອເລັກໂຕຣນິກ ວ່າ ທ້າວ ຄຳສີ ແສງຈັນເພັງ ໄດ້ມອບເງິນໃຫ້ ທ້າວ ທອງດຳ ປະກາຍແສງ ທີ່ເປັນເຈົ້າຂອງເຮືອນໃໝ່ແລ້ວ ແລະ ທ້າວ ທອງດຳ ປະກາຍແສງ ກໍໄດ້ນຳໃຊ້ເງິນດັ່ງກ່າວໄປເຊົ່າເຮືອນຢູ່ໃນເວລາລໍຖ້າຍົກຍ້າຍເຂົ້າຢູ່ອາໄສໃນທີ່ດິນ ແລະ ເຮືອນເຊົ່າ ທີ່ຜູ້ກ່ຽວໄດ້ຊື້ເອົານັ້ນ ແລະ ບໍ່ຍອມຮັບຮູ້ສິດຂອງບໍລິສັດທີ່ເປັນຜູ້ເຊົ່າຊຶ່ງຍັງມີສິດຄອບຄອງ ແລະ ນຳໃຊ້ເຮືອນດັ່ງກ່າວ.

8. ໃນວັນທີ 11 ມິຖຸນາ 2012 ບໍລິສັດ ໄດ້ເຊີນເຈົ້າຂອງເຮືອນມາປະຊຸມເພື່ອປຶກສາຫາລື ແລະ ແກ້ໄຂຂໍ້ຂັດແຍ່ງ, ເຈົ້າຂອງເຮືອນເຊົ່າໄດ້ສະເໜີໃຫ້ເຮັດບົດບັນທຶກກອງປະຊຸມ ແລະ ເຊັນກັນທັງສອງຝ່າຍ ເພື່ອເປັນຫຼັກຖານ, ຫຼັງຈາກນັ້ນ ບໍລິສັດໄດ້ສົ່ງບົດບັນທຶກດັ່ງກ່າວ ໃຫ້ເຈົ້າຂອງເຮືອນເຊັນແຕ່ຖືກປະຕິເສດ (ເບິ່ງເອກະສານລຳດັບທີ 16).

9. ບໍລິສັດກໍ່ສ້າງສາກົນຈຳກັດ ເປັນຝ່າຍໄດ້ຮັບຄວາມເສັຍປະໂຫຍດຈາກການລະເມີດສັນຍາຂອງຝ່າຍຈຳເລີຍ ຈຶ່ງບໍ່ມີທາງເລືອກອື່ນ ນອກຈາກການນຳໃຊ້ສິດຂອງຕົນຕາມສັນຍາ ແລະ ຕາມຫຼັກການທີ່ກຳນົດໄວ້ໃນມາດຕາ 24 ວັກ 3 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ 2008 ໃນການປະຕິເສດຮັບເອົາການປະຕິບັດສັນຍາທີ່ບໍ່ຄົບຖ້ວນ ແລະ ຖືກຕ້ອງ ຂອງຝ່າຍຈຳເລີຍ ຈຶ່ງໄດ້ຍ້າຍອອກຈາກເຮືອນເຊົ່າ ແລະ ຂໍເງິນຄ່າເຊົ່າທີ່ໄດ້ຈ່າຍລ່ວງໜ້າໄປແລ້ວນັ້ນຄືນ ເພື່ອທີ່ຈະນຳເງິນດັ່ງກ່າວໄປຈ່າຍຄ່າເຊົ່າຫ້ອງການຫຼັງໃໝ່ ແລະ ດຳເນີນການທາງກົດໝາຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

**ຂ. ເຫດຜົນຂອງການຮ້ອງຟ້ອງ (ອະທິບາຍລະອຽດ)**

- ສັນຍາເຊົ່າໃໝ່ສະບັບລົງວັນທີ 7 ທັນວາ 2011 ແມ່ນເຮັດຂຶ້ນດ້ວຍການຕົວະຍົວະຫຼອກລວງ ຊຶ່ງເຮັດໃຫ້ບໍລິສັດເປັນຝ່າຍໄດ້ຮັບຄວາມເສັຍປະໂຫຍດຈາກການລະເມີດສັນຍາຂອງຝ່າຍຈຳເລີຍ;

Copyright by JICA

- ຝ່າຍຈຳເລີຍປະຕິບັດສັນຍາບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບສັນຍາທີ່ໄດ້ຕົກລົງກັນ. ດັ່ງນັ້ນ, ທາງບໍລິສັດຈຶ່ງໄດ້ຍ້າຍອອກຈາກເຮືອນເຊົ່າ ແລະ ຂໍເງິນຄ່າເຊົ່າທີ່ໄດ້ຈ່າຍລ່ວງໜ້າໄປແລ້ວນັ້ນຄືນ ເພື່ອຈະນຳເງິນດັ່ງກ່າວໄປຈ່າຍຄ່າເຊົ່າຫ້ອງການຫຼັງໃໝ່ ແລະ ຮ້ອງຟ້ອງເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

**ຄ. ເອກະສານອ້າງອີງ, ພະຍານ ແລະ ຫລັກຖານຕ່າງໆ:**

- ສັນຍາເຊົ່າຫ້ອງການ;
- ໜັງສືແຈ້ງທາງເອເລັກໂຕຣນິກຂອງ ທ້າວ ດວງເດືອນ ນວນສະຫວ່າງ;
- ໜັງສືແຈ້ງຕອບທາງເອເລັກໂຕຣນິກ ສະບັບລົງວັນທີ 06 ມີນາ 2012 ແລະ ສະບັບວັນທີ 07 ພຶດສະພາ 2012;
- ໜັງສືແຈ້ງຕອບທາງເອເລັກໂຕຣນິກ ສະບັບລົງວັນທີ 15 ມິຖຸນາ 2012;
- ບົດບັນທຶກກອງປະຊຸມ;

ຖ້າຫາກມີພະຍານໃຫ້ບອກຊື່ ແລະ ນາມສະກຸນ, ນ້ຳເບີໂທລະສັບ ແລະ ທີ່ຢູ່ໃຫ້ຈະແຈ້ງ.

## II. ຂໍ້ສະເໜີເພື່ອໃຫ້ສານພິຈາລະນາ

1. ສະເໜີໃຫ້ສານພິຈາລະນາກ່ຽວກັບການເຮັດສັນຍາດ້ວຍການຕົວະຍົວະຫຼອກລວງ ແລະ ການລະເມີດສັນຍາເຊົ່າຂອງຝ່າຍຈຳເລີຍ ໂດຍອີງໃສ່ເນື້ອໃນ ແລະ ເງື່ອນໄຂທີ່ໄດ້ຕົກລົງໄວ້ໃນສັນຍາເຊົ່າ;

2. ສະເໜີໃຫ້ສານພິຈາລະນາຕັດສິນໃຫ້ຈຳເລີຍທີ 1 ສົ່ງເງິນຄ່າເຊົ່າທັງໝົດ 24.000 ໂດລາສະຫະລັດ ພ້ອມດ້ວຍດອກເບ້ຍ 12% ຕໍ່ປີຕາມອັດຕາດອກເບ້ຍທີ່ກູ້ຢືມເງິນທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ຄ່າປ່ອຍການຊັບ 3% ຕໍ່ປີ ຄືນໃຫ້ແກ່ບໍລິສັດ (ໂຈດ);

3. ສະເໜີໃຫ້ສານພິຈາລະນາອອກຄຳສັ່ງອາຍັດຊັບສິນ ທີ່ເປັນທີ່ດິນ ແລະ ເຮືອນເຊົ່າ ເພື່ອບໍ່ໃຫ້ມີການເຂົ້າຄອບຄອງ, ຊື້ຂາດ, ຂາຍ, ມອບ ຫຼື ໂອນກຳມະສິດ ຫຼື ບັນຊີທະນາຄານຂອງຈຳເລີຍທັງສອງ ເພື່ອຮັບປະກັນການຊຳລະຄ່າເຊົ່າ ທີ່ໂຈດໄດ້ຈ່າຍລ່ວງໜ້າ ແລະ ຄ່າເສຍຫາຍທີ່ເກີດຂຶ້ນໃຫ້ແກ່ຜູ້ເຊົ່າ ແລະ ສະເໜີໃຫ້ປະຕິບັດພາງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງບໍລິສັດຈົນກວ່າຈະສາມາດປະຕິບັດຄຳຕັດສິນໃຫ້ສຳເລັດ.

ຂ້າພະເຈົ້າຂໍຮັບປະກັນວ່າ ສິ່ງທີ່ຂ້າພະເຈົ້າເລົ່າມາຂ້າງເທິງນັ້ນ ມີມູນຄວາມຈິງ

- ຈະໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກຮອບດ້ານຕໍ່ການດຳເນີນຄະດີຂອງສານ;
- ຖ້າຫາກບໍ່ມີມູນຄວາມຈິງຂໍໃຫ້ສານຊັດມ້ຽນສຳນວນຄະດີ, ເສຍສິດໃນການຮ້ອງຟ້ອງ ແລະ ຮັບຜິດຊອບຕາມກົດໝາຍໂດຍບໍ່ມີການຮ້ອງຂໍຕໍ່ວ່າໃດໆ.

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ຍື່ນຄຳຮ້ອງຟ້ອງສະບັບນີ້ມາຍັງທ່ານ ເພື່ອພິຈາລະນາຕັດສິນຕາມກົດໝາຍດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

Copyright by JICA

ໝາຍເຫດ: ກ່ອນຈະຂຽນເນື້ອໃນເຂົ້າໃສ່ຮ່າງຄໍາຮ້ອງຟ້ອງ ໃຫ້ຂຽນໃສ່ເຈ້ຍໃບອື່ນກ່ອນ, ຈາກນັ້ນ ກວດຄືນ ເມື່ອເຫັນວ່າຖືກຕ້ອງ ຈຶ່ງຂຽນ ຫຼື ພິມໃສ່ຮ່າງນີ້ໃຫ້ສະອາດຈະແຈ້ງ.

ທີ່ ແຂວງວຽງຈັນ, ວັນທີ 15 ພະຈິກ 2012

ຜູ້ຮ້ອງຟ້ອງ

(ເຊັນ ແລະ ແປະໂປ້ມືຂວາ ພ້ອມທັງຂຽນຊື່ແຈ້ງ)

ບຸນທັນ ຊະນະໃຈ



ທີ່ ແຂວງວຽງຈັນ, ວັນທີ 15 ພະຈິກ 2012

ເຫັນ ແລະ ຢັ້ງຢືນຈາກນາຍບ້ານ

ເຊັນ ແລະ ປະທັບຕາ




ໝັ້ນ ຍືນຍົງ

Copyright by JICA

ເອກະສານລຳດັບທີ 1

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄຳຮ້ອງຟ້ອງ (ສຳລັບການຝຶກອົບຮົມ)

ຮຽນ: ..................................................................

ຂ້າພະເຈົ້າ ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ.... , ອາຊີບ.......... ເຮືອນເລກທີ..... , ໜ່ວຍ........, ບ້ານ.........., ເມືອງ............., ແຂວງ........................ໂຈດ

ຂ້າພະເຈົ້າ ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ.... , ອາຊີບ.......... ເຮືອນເລກທີ........., ໜ່ວຍ......., ບ້ານ.........., ເມືອງ...., ແຂວງ.......... ເປັນຜູ້ຕາງໜ້າໂຈດ.

ຂ້າພະເຈົ້າ ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ.... , ອາຊີບ.......... ເຮືອນເລກທີ........, ໜ່ວຍ........., ບ້ານ.........., ເມືອງ............., ແຂວງ....................ຈຳເລີຍ

ຂ້າພະເຈົ້າ ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ.... , ອາຊີບ.......... ເຮືອນເລກທີ........., ໜ່ວຍ....., ບ້ານ.........., ເມືອງ...., ແຂວງ.......... ເປັນຜູ້ຕາງໜ້າຈຳເລີຍ.

ກ່ຽວເລື່ອງ: ...........................................

ມູນຄ່າການຮ້ອງຟ້ອງ:........................ , ທີ່ດິນ...............ຕອນ....................................

ເນື້ອທີ່.....................................ມູນຄ່າ.......................................................

ອື່ນໆ.........................................................................................

(ບອກລາຍລະອຽດຈຳນວນສິ່ງຂອງທີ່ຮ້ອງຟ້ອງ ແລະ ຕີລາຄາເປັນເງິນ).

I. ເນື້ອໃນການຮ້ອງຟ້ອງ

ກ. ໃຫ້ເລົ່າປະຫວັດຄວາມເປັນມາຂອງເລື່ອງໂດຍຫຍໍ້

..........................................................................................................

..........................................................................................................

..........................................................................................................

ຂ. ເຫດຜົນຂອງການຮ້ອງຟ້ອງ (ອະທິບາຍລະອຽດ)

..........................................................................................................

..........................................................................................................

..........................................................................................................

Copyright by JICA

ຄ. ເອກະສານອ້າງອີງ, ພະຍານ ແລະ ຫລັກຖານຕ່າງໆ:

.......................................................................................................................................

.......................................................................................................................................

.......................................................................................................................................

II. ຂໍ້ສະເໜີເພື່ອໃຫ້ສານພິຈາລະນາ

.......................................................................................................................................

.......................................................................................................................................

.......................................................................................................................................

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ຍື່ນຄຳຮ້ອງຟ້ອງສະບັບນີ້ມາຍັງທ່ານ ເພື່ອພິຈາລະນາຕັດສິນຕາມກົດໝາຍດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ໝາຍເຫດ: ກ່ອນຈະຂຽນເນື້ອໃນເຂົ້າໃສ່ຮ່າງຄຳຮ້ອງຟ້ອງ ໃຫ້ຂຽນໃສ່ເຈ້ຍໃບອື່ນກ່ອນ, ຈາກນັ້ນກວດຄືນ ເມື່ອເຫັນວ່າຖືກຕ້ອງ ຈຶ່ງຂຽນ ຫຼື ພິມໃສ່ຮ່າງນີ້ໃຫ້ສະອາດຈະແຈ້ງ.

ທີ່........., ວັນທີ..........ເດືອນ.....ປີ.....

ຜູ້ຮ້ອງຟ້ອງ

(ເຊັນ ແລະ ແປະໂປ້ມືຂວາ ພ້ອມທັງຂຽນຊື່ແຈ້ງ)

ທີ່......., ວັນທີ......ເດືອນ........ປີ.......

ເຫັນ ແລະ ຢັ້ງຢືນຈາກນາຍບ້ານ

ເຊັນ ແລະ ປະທັບຕາ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາທະນາຍຄວາມ
ແຫ່ງ ສປປລາວ

ເລກທີ xxx /ສທຄ
ວັນທີ 18 ຕຸລາ 2012

# ໃບແຕ່ງຕັ້ງທະນາຍຄວາມ

- ອີງຕາມ ກົດໝາຍວ່າດ້ວຍທະນາຍຄວາມ ສະບັບເລກທີ 010/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມ ກົດລະບຽບພາຍໃນຂອງສະພາທະນາຍຄວາມສະບັບເລກທີ 186/ກຍ, ລົງວັນທີ 25 ມິຖຸນາ 2010.
- ອີງຕາມ ການຕົກລົງເຫັນດີ ລະຫວ່າງ ລູກຄວາມກັບທະນາຍຄວາມ.

ຂ້າພະເຈົ້າ ນາງ ແຟນຕ້າ ລູຊີ (ຕາງໜ້າບໍລິສັດກໍ່ສ້າງສາກົນຈຳກັດ), ຕູ້ ປ.ນ.xxx, ຢູ່ ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ, ສປປ ລາວ, ເບີໂທລະສັບ xxxx, ເບີແຟັກ xxxx, ຕູ້ ປ.ນ xxx ແຕ່ງຕັ້ງ ທ້າວ ບຸນທັນ ຊະນະໃຈ ທະນາຍຄວາມຂອງບໍລິສັດຈຳປາເມືອງລາວຈຳກັດ ຕາມ ໃບອະນຸຍາດວ່າຄວາມເລກທີ xxx, ລົງວັນທີ 2 ມິຖຸນາ 2011, ເບີໂທລະສັບ xxxx ເປັນຜູ້ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຂ້າພະເຈົ້າຕາມກົດໝາຍ ໃນຂັ້ນຕອນຂອງການດຳເນີນຄະດີ ຂອງສານຂັ້ນຕົ້ນ.

**ກ່ຽວເລື່ອງ:** ທວງເອົາເງິນຄ່າເຊົ່າເຮືອນທີ່ໄດ້ຈ່າຍລ່ວງໜ້າຄືນ.

**ລະຫວ່າງ:**

- ບໍລິສັດກໍ່ສ້າງສາກົນຈຳກັດ............................................................ (ໂຈດ);
- ນາງ ຄຳຫຼ້າ ຂາວດີ, ອາຊີບ ນັກທຸລະກິດ, ຕາງໜ້າໃຫ້ກັບເຈົ້າຂອງເຮືອນເຊົ່າ ທ່ານ ຄຳສີ ແສງຈັນເພັງ.............................................................................................(ຈຳເລີຍ).

ການສິ້ນສຸດການແຕ່ງຕັ້ງໃຫ້ເປັນຜູ້ຕາງໜ້າ ແມ່ນພາຍຫຼັງສຳເລັດຢູ່ໃນຂັ້ນທີ່ຕົກລົງນຳກັນເທິງນີ້, ຖ້າມີການຍົກເລີກກ່ອນກຳນົດເວລາ ທັງສອງຝ່າຍຕ້ອງມີເອກະສານຢັ້ງຢືນຢ່າງເປັນລາຍລັກອັກສອນ.

ສະນັ້ນ, ຈຶ່ງໄດ້ເຮັດໃບແຕ່ງຕັ້ງສະບັບນີ້ໄວ້ເພື່ອເປັນຫຼັກຖານ.

| ຜູ້ແຕ່ງຕັ້ງ | ຮັບຮູ້ ແລະ ຢັ້ງຢືນຈາກ ສທຄ | ທະນາຍຄວາມ |
|---|---|---|
| ຕາປະທັບ ບໍລິສັດ | ຕາປະທັບ ສທຄ | ຕາປະທັບ ບໍລິສັດທີ່ປຶກສາກົດໝາຍ |
| ແຟນຕ້າ ລູຊີ | ລັດສີ ຈະເລີນ | ບຸນທັນ ຊະນະໃຈ |

Copyright by JICA

# <u>ສັນຍາເຊົ່າຫ້ອງການ</u>

ລະຫວ່າງ

ທ້າວ ຄຳສີ ແສງຈັນເພັງ ເຮືອນເລກທີ xxx, ບ້ານວຽງແກ້ວ, ໜ່ວຍ xxx, ເມືອງວັງວຽງ, ແຂວງວຽງຈັນ, ສປປ ລາວ. ເບີໂທລະສັບ xxxxxxxx, ເຈົ້າຂອງເຮືອນເຊົ່າຕໍ່ໄປນີ້ເອີ້ນວ່າ **"ຜູ້ໃຫ້ເຊົ່າ"** ຕາງໜ້າໂດຍ ນາງ ຄຳຫຼ້າ ຂາວດີ, ເບີໂທລະສັບ xxxxxxxx

ແລະ

ນາງ ແຟນຕ້າ ລູຊີ ຜູ້ອຳນວຍການບໍລິສັດກໍ່ສ້າງສາກົນຈຳກັດ ເບີໂທລະສັບ xxxxxxxx ຕໍ່ໄປນີ້ເອີ້ນວ່າ **"ຜູ້ເຊົ່າ"**

ຄູ່ສັນຍາທັງສອງຝ່າຍໄດ້ຕົກລົງກັນຢ່າງເປັນເອກະພາບດັ່ງຕໍ່ໄປນີ້:

**ມາດຕາ 1** ເຮືອນເຊົ່າດັ່ງກ່າວເປັນເຮືອນສອງຊັ້ນ ຊຶ່ງຕັ້ງຢູ່ໜ່ວຍxx, ວຽງແກ້ວ, ເມືອງວັງວຽງ, ແຂວງ

ວຽງຈັນ, ໃບຕາດິນເລກທີ xxx.

ເຮືອນປະກອບມີດັ່ງນີ້:

ອາຄານໃຫຍ່

- ຫ້ອງໃຫຍ່ 1 ຫ້ອງ, ຫ້ອງຂະໜາດກາງ 5 ຫ້ອງ, ຫ້ອງນ້ອຍ 1 ຫ້ອງ, ຫ້ອງເກັບເຄື່ອງ 1 ຫ້ອງ ແລະ ຫ້ອງນ້ຳ 3 ຫ້ອງ;
- ແອ 8 ໜ່ວຍ, ພັດລົມດູດອາກາດ 5 ໜ່ວຍ.

ສ່ວນຕໍ່ເຕີມ

- ຫ້ອງປະຊຸມ 1 ຫ້ອງ(ຂະໜາດ 5ມx16ມ), ຫ້ອງ 3 ຫ້ອງ ແລະ ຫ້ອງນ້ຳ 3 ຫ້ອງ;
- ແອ 5 ໜ່ວຍ ແລະ ພັດລົມດູດອາກາດ 2 ໜ່ວຍ;
- ໝໍ້ນັບໄຟ 1 ໜ່ວຍ;
- ກົງເຕີນ້ຳ 1 ໜ່ວຍ.

**ມາດຕາ 2** ເຮືອນຈະຖືກນຳໃຊ້ເປັນຫ້ອງການບໍລິຫານຂອງບໍລິສັດກໍ່ສ້າງສາກົນຈຳກັດ ແລະ ໂຄງການ ອື່ນໆ ທີ່ຈະເກີດຂຶ້ນ.

**ມາດຕາ 3** ຄ່າເຊົ່າເຮືອນທີ່ສົມບູນ (ປະກອບດ້ວຍເຮືອນ, ສ່ວນຕໍ່ເຕີມ, ສວນ ແລະ ອື່ນໆ) ແມ່ນ 2.000 ໂດລາສະຫະລັດຕໍ່ເດືອນ ຊຶ່ງເລີ່ມຈາກວັນທີ 01 ມັງກອນ 2012 ເຖິງວັນທີ 31 ທັນວາ 2013. ບໍລິສັດກໍ່ສ້າງສາກົນຈຳກັດ ຈະຈ່າຍຄ່າເຊົ່າໃຫ້ກັບຜູ້ໃຫ້ເຊົ່າດ້ວຍແຊັກ ໃນມື້ເລີ່ມປະຕິບັດສັນຍາ ນັບແຕ່ວັນທີ 1 ມັງກອນ 2012;

ຄ່າເຊົ່ານີ້ຕ້ອງຈ່າຍລ່ວງໜ້າກ່ອນໜຶ່ງປີ ຊຶ່ງລວມເປັນເງິນຈຳນວນ 24.000 ໂດລາສະຫະລັດ ໃນເວລາທີ່ມີການເຊັນສັນຍາ (ບໍ່ໃຫ້ກາຍວັນທີ 31 ທັນວາ 2011);

ພາສີອາກອນທີ່ກ່ຽວຂ້ອງກັບເຮືອນເຊົ່າ ໃຫ້ເປັນຄວາມຮັບຜິດຊອບຂອງຜູ້ໃຫ້ເຊົ່າ.

**ມາດຕາ 4** ຜູ້ໃຫ້ເຊົ່າຕ້ອງຮັບຜິດຊອບຄ່າໃຊ້ຈ່າຍໃນການສ້ອມແປງເຮືອນ (ລະບົບໄຟຟ້າ, ນ້ຳປະປາ ແລະ ອື່ນໆ) ທີ່ເກີດຈາກການຕິດຕັ້ງບໍ່ໄດ້ມາດຕະຖານ ຫຼື ເຫດສຸດວິໄສ. ຜູ້ເຊົ່າຕ້ອງບຳລຸງຮັກສາສິ່ງຂອງເຄື່ອງໃຊ້ຕ່າງໆໃຫ້ຢູ່ໃນສະພາບທີ່ດີ ແລະ ສາມາດໃຊ້ງານໄດ້ຕະຫຼອດເວລາ

Copyright by JICA

ແລະ ຕ້ອງຮັບຜິດຊອບຕໍ່ຄ່າສ້ອມແປງນ້ອຍ ທີ່ເກີດຈາກການນຳໃຊ້ ເຊັ່ນ ການທາສີພາຍໃນເຮືອນ, ປຸ່ມດອກໄຟ ແລະ ກ໋ອກນ້ຳ.

**ມາດຕາ 5** ຜູ້ເຊົ່າຕ້ອງຈ່າຍຄ່າ ໄຟຟ້າ, ນ້ຳປະປາ, ຂີ້ເຫຍື້ອ, ໂທລະສັບ ແລະ ໃຊ້ຈ່າຍເພີ່ມເຕີມອື່ນໆ ທີ່ກ່ຽວຂ້ອງກັບການນຳໃຊ້ຂອງຜູ້ເຊົ່າ.

**ມາດຕາ 6** ຜູ້ເຊົ່າມີສິດຕົບແຕ່ງ ແລະ ສ້ອມແປງເຮືອນທັງພາຍໃນ ແລະ ພາຍນອກໄດ້ ໂດຍເປັນຄ່າໃຊ້ຈ່າຍຂອງຜູ້ເຊົ່າເອງ. ສຳລັບການສ້ອມແປງໃຫຍ່ ຜູ້ເຊົ່າຕ້ອງໄດ້ຂໍອະນຸຍາດຈາກຜູ້ໃຫ້ເຊົ່າກ່ອນ, ຜູ້ເຊົ່າຕ້ອງຮັກສາເຮືອນ ແລະ ສວນ ໃຫ້ຢູ່ໃນສະພາບດີຕະຫຼອດເວລາຂອງການເຊົ່າ.

**ມາດຕາ 7** ຜູ້ເຊົ່າມີສິດເຄື່ອນຍ້າຍຊັບສິນຂອງຕົນເອງ ເຊັ່ນ ແອເຢັນ ຍົກເວັ້ນສິ່ງຂອງທີ່ຕິດພັນກັບສິ່ງປູກສ້າງ ເຊັ່ນ ສາຍໄຟຟ້າ ແລະ ຕູ້ປັກສຽບ ທີ່ໄດ້ມີການຕິດຕັ້ງໄວ້ພາຍໃນເຮືອນເຊົ່າ ແລະ ຕ້ອງໄດ້ເຮັດອະນາໄມຄືນໃນເວລາທີ່ສັນຍາສິ້ນສຸດ, ກໍລະນີທີ່ຜູ້ເຊົ່າຫາກສ້າງຄວາມເສຍຫາຍຕໍ່ເຮືອນ ແລະ ອຸປະກອນເຄື່ອງໃຊ້ພາຍໃນເຮືອນຍ້ອນການນຳໃຊ້ຜິດວິທີ ຜູ້ເຊົ່າຕ້ອງຮັບຜິດຊອບຕໍ່ຄ່າສ້ອມ ແປງທັງໝົດ.

**ມາດຕາ 8** ຄ່າບຳລຸງຮັກສາ ຫຼື ຄ່າສ້ອມແປງ ເນື່ອງຈາກຄວາມບົກພ່ອງໃນການກໍ່ສ້າງ, ສົງຄາມ ແລະ ຜົນຈາກໄພທຳມະຊາດ ເຊັ່ນ ໄພນ້ຳຖ້ວມ, ຟ້າຜ່າ, ໄຟໄໝ້, ພະຍຸ ແລະ ແຜ່ນດິນໄຫວ ໃຫ້ເປັນຄວາມຮັບຜິດຊອບຂອງຜູ້ໃຫ້ເຊົ່າ.

**ມາດຕາ 9** ສັນຍາເຊົ່າສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ມັງກອນ 2012 ແລະ ຈະສິ້ນສຸດໃນວັນທີ 31 ທັນວາ 2013. ຖ້າຜູ້ເຊົ່າຫາກມີຈຸດປະສົງເຊົ່າຕໍ່ອີກໜຶ່ງປີ, ຜູ້ກ່ຽວຕ້ອງເກັບຮັກສາກະແຈເຮືອນທັງໝົດໄວ້ ຈົນກວ່າສັນຍາຈະສິ້ນສຸດ.

**ມາດຕາ 10** ສັນຍາເຊົ່າສະບັບນີ້ ອາດຈະມີການຍົກເລີກກ່ອນມື້ສິ້ນສຸດສັນຍາ ໃນກໍລະນີດັ່ງຕໍ່ໄປນີ້:

ກ. ມີການຕົກລົງກັນລະຫວ່າງ ຄູ່ສັນຍາທັງສອງຝ່າຍ;

ຂ. ເນື່ອງຈາກເຫດສຸດວິໄສ ທີ່ເກີດຂຶ້ນທາງທຳມະຊາດ ຊຶ່ງອາດຈະມີປະກາດ ຫຼື ບໍ່ມີ; ການຮຸກຮານ ຫຼື ສົງຄາມ, ການກໍ່ການປະຕິວັດ, ການກໍ່ກະບົດ, ການລຸກຮື້ ຫຼື ການກໍ່ຈາລະຈົນ ຫຼື ເກີດມີຄວາມບໍ່ສະຫງົບ, ການທຳລາຍ, ເກີດອຸປະຕິເຫດທາງດ້ານອຸຕຸນິຍົມວິທະຍາ, ມີລັງສີຮົ່ວໄຫຼ ຫຼື ມີການປົນເປື້ອນ ທີ່ເກີດຈາກກິດຈະກຳທາງດ້ານພະລັງງານ ຫຼື ສິ່ງເສດເຫຼືອນິວເຄຍ, ລະເບີດກຳມັນຕະພາບລັງສີ ຫຼື ການລະເບີດຂອງສານພິດອື່ນໆ, ການປະກອບລະເບີດນິວເຄຍ ແລະ ສ່ວນປະກອບຂອງວັດຖຸດັ່ງກ່າວ ຫຼື ການກະທຳອື່ນ, ເຫດການອື່ນ ຫຼື ສະຖານະການອື່ນທີ່ຄ້າຍ ຄື ໄພພິບັດທາງທຳມະຊາດ, ສະຖານະການທີ່ເກີດຂຶ້ນ ທີ່ນອກເໜືອການຄວບຄຸມຂອງຄູ່ສັນຍາ;

ຄ. ບໍລິສັດກໍ່ສ້າງສາກົນຈຳກັດ ໄດ້ຍ້າຍອອກຈາກແຂວງວຽງຈັນ ເນື່ອງຈາກສັນຍາການເຮັດວຽກ ທີ່ແຂວງວຽງຈັນ ສິ້ນສຸດ;

ງ. ມີຄວາມຈຳເປັນທາງດ້ານເຕັກນິກ (ເກີດເຫດການທາງດ້ານເຕັກນິກຂະໜາດໃຫຍ່ ຫຼື ເພື່ອການກໍ່ສ້າງໃໝ່ ຫຼື ການທັບມ້າງ ຫຼື ເພື່ອຈຸດປະສົງອື່ນໆ);

Copyright by JICA

ຈ. ຖ້າຫາກຄຸນນະພາບຂອງທີ່ຢູ່ອາໄສ ຫຼື ການເຂົ້າເຖິງເຮືອນເຊົ່າ ບໍ່ສາມາດເປັນທີ່ຍອມຮັບໄດ້ (ຄວາມປອດໄພ, ສຽງລົບກວນ, ມົນລະພິດ, ຖະໜົນເປ່ເພ);

ສ. ຖ້າຫາກວ່າຜູ້ໃຫ້ເຊົ່າ/ຜູ້ເຊົ່າ ໄດ້ລະເມີດມາດຕາ 4 ແລະ 5 ຂອງສັນຍາສະບັບນີ້;

ຊ. ບໍ່ຈ່າຍຄ່າເຊົ່າເປັນເວລາ ສາມສິບວັນລັດຖະການ.

**ມາດຕາ 11** ຖ້າຄູ່ສັນຍາມີຈຸດປະສົງທີ່ຈະຍົກເລີກສັນຍາສະບັບນີ້ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຄູ່ສັນຍາອີກຝ່າຍໜຶ່ງຊາບລ່ວງໜ້າສາມເດືອນ ແລະ ຕ້ອງປະຕິບັດຕາມເງື່ອນໄຂດັ່ງຕໍ່ໄປນີ້:

1) ຜູ້ເຊົ່າຕ້ອງຈ່າຍຄ່າ ໄຟຟ້າ, ນ້ຳ, ໂທລະສັບ ກ່ອນທີ່ຈະຍ້າຍອອກຈາກເຮືອນເຊົ່າ;

2) ຜູ້ເຊົ່າຕ້ອງອະນຸຍາດໃຫ້ຜູ້ໃຫ້ເຊົ່າເຂົ້າໄປໃນເຮືອນເຊົ່າເພື່ອກວດກາສະພາບເຄື່ອງໃຊ້ພາຍໃນເຮືອນ;

3) ຜູ້ໃຫ້ເຊົ່າຕ້ອງສົ່ງເງິນຄືນແກ່ຜູ້ເຊົ່າທີ່ໄດ້ຈ່າຍກ່ອນລ່ວງໜ້າ ໃນເວລາຜູ້ເຊົ່າບໍ່ໄດ້ຢູ່ເຮືອນເຊົ່າແລ້ວ;

4) ກໍລະນີທີ່ຜູ້ເຊົ່າຫາກຍົກເລີກສັນຍາໂດຍບໍ່ມີເຫດຜົນ (ເບິ່ງຕາມມາດຕາ 10), ຜູ້ໃຫ້ເຊົ່າອາດຈະຫັກຄ່າເຊົ່າທີ່ໄດ້ຈ່າຍລ່ວງໜ້ານັ້ນ ເທົ່າກັບຈຳນວນເງິນທີ່ຕ້ອງເສຍອາກອນໃຫ້ລັດ.

**ມາດຕາ 12** ຄູ່ສັນຍາຕ້ອງແກ້ໄຂຂໍ້ຂັດແຍ່ງ, ການຮຽກຮ້ອງທີ່ເກີດຂຶ້ນ ຫຼື ສິ່ງທີ່ພົວພັນກັບສັນຍາສະບັບນີ້ ຫຼື ການຕີຄວາມໝາຍຂອງສັນຍາສະບັບນີ້ ໂດຍສັນຕິວິທີ.

**ມາດຕາ 13** ສັນຍາສະບັບນີ້ສ້າງຂຶ້ນເປັນພາສາລາວ ແລະ ພາສາອັງກິດ ຊຶ່ງມີເນື້ອໃນດຽວກັນ, ແຕ່ລະສະບັບແມ່ນຖືກເກັບໄວ້ໂດຍຄູ່ສັນຍາ.

ແຂວງວຽງຈັນ, ວັນທີ 7 ທັນວາ 2011

ຄຳຫຼ້າ ຂາວດີ

ຜູ້ຕາງໜ້າທ້າວ ຄຳສີ ແສງຈັນພັງ (ຜູ້ໃຫ້

ຕາປະທັບ
ບໍລິສັດ

ແຟນຕ້າ ລູຊີ

ຜູ້ອຳນວຍການ ບໍລິສັດກໍ່ສ້າງສາກົນຈຳກັດ (ຜູ້ເຊົ່າ)

ແປໂດຍ: ນາງ ອ່ອນສີ ສີມະນີວົງ

ຢັ້ງຢືນການແປໂດຍ: ຫ້ອງການທະບຽນສານ, ພະແນກຍຸຕິທຳແຂວງວຽງຈັນ

ຄັ້ງວັນທີ 14 ພະຈິກ 2012 ເລກທີ xxx /ທທສ.

ເຊັນ ແລະ ປະທັບຕາ

ຕາປະທັບ
ທະບຽນສານ

ຍອດຊາຍ ໄມຕີຈິດ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບມອບ-ຮັບເງິນ

ໃນວັນທີ 8 ທັນວາ 2011, ທີ່ບ້ານວຽງແກ້ວ, ເມືອງວັງວຽງ, ແຂວງວຽງຈັນ ຂ້າພະເຈົ້າ ນາງ ຄຳຫຼ້າ ຂາວດີ ໄດ້ຮັບເງິນຄ່າເຊົ່າເຮືອນ ຈຳນວນ 24.000 ໂດລາສະຫະລັດຈາກບໍລິສັດກໍ່ສ້າງ ສາກົນຈຳກັດ ແລະ ໄດ້ມອບໃຫ້ ທ້າວ ທອງດຳ ປະກາຍແສງ ຈຳນວນ 20.000 ໂດລາສະຫະລັດ ເປັນທີ່ຮຽບຮ້ອຍແລ້ວ. ສ່ວນ 4.000 ໂດລາສະຫະລັດ ຂ້າພະເຈົ້າຈະນຳໄປແລ່ນເອກະສານໂອນໃບ ຕາດິນ.

ດັ່ງນັ້ນ, ຈຶ່ງເຮັດໜັງສືສະບັບນີ້ໄວ້ເປັນຫຼັກຖານ.

**ຜູ້ຮັບ** **ຜູ້ມອບ**

ທອງດຳ ປະກາຍແສງ ຄຳຫຼ້າ ຂາວດີ

**ພະຍານ**

1. ນ. ໃຈເພັດ ສູງສົ່ງ
2. ນ. ສາຍຝົນ ໃຈສະອາດ
3. ທ. ສົມຈິດ ສີທອນ

Copyright by JICA

ເອກະສານລຳດັບທີ 5

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມຄຸ້ມຄອງທີ່ດິນ ແລະ ເຮືອນ
ຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນ
ສະໝຸດຕາດິນເຫຼັ້ມທີ xx

# ໃບຕາດິນ

ລະຫັດ X X  X X X  X X
ແຂວງ ວຽງຈັນ
ເມືອງ ວັງວຽງ
ບ້ານ ວຽງແກ້ວ

ໃບທີ xxx ເລກທີ xxx

ອອກໃຫ້ແກ່ ທ້າວ ທອງດຳ ປະກາຍແສງ

ວັນເດືອນປີເກີດ 02/10/1964 ສັນຊາດ ລາວ ອາຊີບ ນັກທຸລະກິດ

ບ້ານຢູ່ປະຈຸບັນ ວຽງແກ້ວ ໜ່ວຍ x ເມືອງ ວັງວຽງ

ແຂວງ ວຽງຈັນ ຊື່ພໍ່ ທ. ທອງດີ ຊື່ແມ່ ນ. ທອງຂາວ

ສາມີ ຫລື ພັນລະຍາ

ທີ່ຕັ້ງຂອງດິນ: ຖະໜົນ ທາງຊ່ອມ ໜ່ວຍ xx ບ້ານ ວຽງແກ້ວ

ເນື້ອທີ່ຂອງດິນ xx ຮຕ xxxx ຕາແມດ

**ມາດຕາສ່ວນ** x/xxx ແຜນທີ່ດິນໃບທີ xxxx-xx-x-xx ເລກທີ xxx

## ແຜນທີ່ດິນ




ອອກໃຫ້ທີ່ ແຂວງ ວຽງຈັນ
ຫົວໜ້າພະແນກການເງິນ

ຕາປະທັບ

ທ່ານ ຈ່ອດ

ວັນທີ 09 ມັງກອນ 2012
ຫົວໜ້າຫ້ອງການຄຸ້ມຄອງ
ທີ່ດິນ ແລະ ເຮືອນ

ຕາປະທັບ

ທ່ານ ທັນສາ

Copyright by JICA

ຈາກ: ດວງເດືອນ ນວນສະຫວ່າງ
19 ກຸມພາ 2012, ເວລາ 11:45
ເຖິງ: ນາງ ແຟນຕ້າ ລູຊີ

ຂໍແຈ້ງໃຫ້ ທ່ານຊາບວ່າ ປັດຈຸບັນນີ້ເຮືອນທີ່ທ່ານເຊົ່າຢູ່ນັ້ນແມ່ນກຳມະສິດຂອງ ທ້າວ ທອງດຳ ປະກາຍແສງ ເຈົ້າຂອງເຮືອນເຊົ່າຄົນໃໝ່. ທ້າວ ຄຳສີ ແສງຈັນເພັງ (ລຸງຂອງຂ້າພະເຈົ້າ) ທີ່ເປັນເຈົ້າຂອງເຮືອນເຊົ່າຄົນເກົ່າໄດ້ຂາຍເຮືອນດັ່ງກ່າວໃຫ້ແກ່ ທ້າວ ທອງດຳ ປະກາຍແສງ ເປັນທີ່ຮຽບຮ້ອຍແລ້ວ.

ທ້າວ ທອງດຳ ປະກາຍແສງ ຜູ້ທີ່ເປັນເຈົ້າຂອງເຮືອນເຊົ່າຄົນໃໝ່ ມີຈຸດປະສົງ ຕ້ອງການພົບທ່ານ ແລະ ພະນັກງານບໍລິຫານຂອງທ່ານ ໃນມື້ອື່ນ, ວັນຈັນ 20 ກຸມພາ 2012 ເວລາ 9:00 ເຊົ້າ ທີ່ຫ້ອງການຂອງທ່ານ ເພື່ອທີ່ຈະແນະນຳຕົວຂອງລາວເອງ ກ່ຽວກັບເຈົ້າຂອງເຮືອນຄົນໃໝ່ ແລະ ລາວຕ້ອງການທີ່ຈະປຶກສາຫາລືເຖິງບັນຫາອື່ນໆ ທີ່ກ່ຽວກັບການເຊົ່າເຮືອນ.

ຂ້າພະເຈົ້າຂໍໂທດທີ່ຕ້ອງແຈ້ງກ່ຽວກັບການປ່ຽນແປງ ຢ່າງກະທັນຫັນໃຫ້ພວກທ່ານຊາບວ່າ ດຽວນີ້ພວກຂ້າພະເຈົ້າບໍ່ແມ່ນເຈົ້າຂອງເຮືອນອີກຕໍ່ໄປ ຊຶ່ງມັນຢູ່ນອກເໜືອການຄວບຄຸມຂອງພວກຂ້າພະເຈົ້າ.

ຂໍຂອບໃຈສຳລັບຄວາມຮ່ວມມືຂອງທ່ານ.

Copyright by JICA

ຈາກ : ນາງ ແຟນຕ້າ ລູຊີ
20 ກຸມພາ 2012, ເວລາ 9:00
ເຖິງ : ທ້າວ ດວງເດືອນ ນອນສະຫວ່າງ

ຂໍຂອບໃຈສຳລັບການແຈ້ງກ່ຽວກັບການປ່ຽນແປງ. ພວກເຮົາຫວັງວ່າເຈົ້າຂອງເຮືອນຜູ້ໃໝ່ຈະເຄົາລົບຕໍ່ການຕົກລົງໃນສັນຍາທີ່ໄດ້ເຊັນກັບລຸງຂອງທ່ານ;

ພວກເຮົາຈະຕິດຕໍ່ຫາ ທ່ານ ທອງດຳ ປະກາຍແສງ (ເຈົ້າມີຂໍ້ມູນເພື່ອໃຫ້ພວກເຮົາຕິດຕໍ່ກັບເຈົ້າຂອງເຮືອນເຊົ່າຄົນໃໝ່ ຫຼື ບໍ່).

ຮຽນມາດ້ວຍຄວາມນັບຖື

ນາງ ແຟນຕ້າ ລູຊີ

Copyright by JICA

ຈາກ: ທ້າວ ລຳເງິນ ຜາຕັ້ງ
5 ມີນາ 2012, ເວລາ 19:12
ເຖິງ: ທ້າວ ດວງເດືອນ ນວນສະຫວ່າງ

ຂ້ອຍໄດ້ສົ່ງຈົດໝາຍທາງເອເລັກໂຕຣນິກຫາທ່ານ ໃນນາມຕາງໜ້າຜູ້ອຳນວຍການບໍລິສັດກໍ່ສ້າງສາກົນຈຳກັດ ມີຄຳຖາມທີ່ຈະປຶກສາຫາລື ແລະ ໃຫ້ຄວາມກະຈ່າງແຈ້ງກ່ຽວກັບການປະຊຸມກັນໃນມື້ອື່ນ.

1. ພວກຂ້າພະເຈົ້າສາມາດເອົາເງິນຄືນໄດ້ບໍ ໃນຈຳນວນ 500 ໂດລາສະຫະລັດຕໍ່ເດືອນ ທີ່ພວກຂ້າພະເຈົ້າໄດ້ຈ່າຍເພີ່ມເຕີມ ຊຶ່ງຕາມສັນຍານັ້ນ ພວກຂ້າພະເຈົ້າກໍໄດ້ຈ່າຍເງິນເດືອນລະ 2.000 ໂດລາສະຫະລັດ ເພື່ອຄ້ຳປະກັນສຳລັບຄ່າເຊົ່າສອງປີ ?

2. ຖ້າພວກຂ້າພະເຈົ້າຈະຕັດສິນໃຈຍ້າຍອອກຈາກເຮືອນເຊົ່າ ເດືອນມິຖຸນາ ປີ 2012 ນີ້, ພວກຂ້າພະເຈົ້າຈະໄດ້ຮັບເງິນຄ່າເຊົ່າຫົກເດືອນທີ່ໄດ້ຈ່າຍລ່ວງໜ້າແລ້ວນັ້ນ ຄືນບໍ ?

3. ທ່ານມີຄຳແນະນຳ/ຂໍ້ສະເໜີເພີ່ມເຕີມຫຍັງບໍ ເພື່ອໃຫ້ພວກຂ້າພະເຈົ້າສືບຕໍ່ເຊົ່າເຮືອນຈົນສິ້ນສຸດສັນຍາເຊົ່າ ໃນປີ 2013 ?

Copyright by JICA

ຈາກ: ນາງ ແຟນຕ້າ ລູຊີ
6 ມີນາ 2012, ເວລາ 8:02
ເຖິງ: ທ້າວ ລຳເງິນ ຜາຕັ້ງ ແລະ ທ້າວ ດວງເດືອນ ບອນສະຫວ່າງ

ຂ້ອຍຂໍໂທດແທ້ໆ, ຂ້ອຍໄດ້ນັດປະຊຸມກັບລູກຄ້າ ໃນເວລາ 14:30, ພວກເຮົາສາມາດປະຊຸມກັນໃນເວລາ 15:00 ຂອງວັນທີ 7 ມີນາ 2012 ໄດ້ ຫຼື ບໍ?

ຂໍອະໄພໃນຄວາມບໍ່ສະດວກ

ນາງ ແຟນຕ້າ ລູຊີ

Copyright by JICA

ຈາກ: ທ້າວ ດວງເດືອນ ນວນສະຫວ່າງ
ວັນທີ 6 ມີນາ 2012, ເວລາ 9:13
ເຖິງ: ນາງ ແຟນຕ້າ ລູຊີ

ຂໍຂອບໃຈສຳລັບການແຈ້ງການປ່ຽນແປງເວລາປະຊຸມ. ດັ່ງທີ່ທ່ານຮູ້ ຂ້ອຍບໍ່ແມ່ນຜູ້ຕັດສິນໃຈກ່ຽວກັບບັນຫາທີ່ເກີດຂຶ້ນ, ດ້ວຍເຫດນັ້ນຂ້ອຍບໍ່ມີຄວາມສາມາດ ທີ່ຈະຕອບຄຳຖາມທີ່ທ່ານຖາມພາຍໃນມື້ອື່ນ ເນື່ອງຈາກຂ້ອຍຫາກໍແຈ້ງຂໍ້ມູນໃຫ້ເຈົ້າຂອງເຮືອນເຊົ່າຄົນເກົ່າ ແລະ ເຈົ້າຂອງເຮືອນເຊົ່າຄົນໃໝ່. ຈະເປັນການດີຖ້າຫາກວ່າພວກເຮົາສາມາດເລື່ອນເວລາໃນການປະຊຸມ ອອກໄປຈົນຮອດເວລາທີ່ຂ້າພະເຈົ້າໄດ້ຮັບຄຳຕອບຈາກພວກເຂົາ. ດັ່ງນັ້ນ, ແຜນຂອງພວກເຮົາທີ່ຈະປະຊຸມກັນໃນມື້ອື່ນ ກ່ຽວກັບຄຳຖາມທີ່ຈະນຳມາປຶກສາຫາລືກັນໃນວັນທີ 6 ມີນາ 2012 ເວລາ 15:00 ທີ່ຫ້ອງການບໍລິສັດກໍ່ສ້າງສາກົນຈຳກັດ ຈະມີການຍ້າຍມື້ປະຊຸມອອກໄປອີກທ່ານເຫັນດີບໍ

ຂໍຂອບໃຈສຳລັບຄວາມເຂົ້າອົກເຂົ້າໃຈສຳລັບການຮ່ວມມື

ທ້າວ ດວງເດືອນ ນວນສະຫວ່າງ

Copyright by JICA

ຈາກ: ທ້າວ ລຳເງິນ ຜາຕັ້ງ
30 ມີນາ 2012 ເວລາ 16:06
ເຖິງ: ທ້າວ ດວງເດືອນ ນອນສະຫວ່າງ

ຂ້າພະເຈົ້າໄດ້ສົ່ງຈົດໝາຍທາງເອເລັກໂຕຣນິກຫາທ່ານ ເພື່ອຢາກຮູ້ວ່າ ເປັນໄປໄດ້ບໍ ຖ້າພວກເຮົາຈະມີການປະຊຸມກັນກ່ອນປີໃໝ່ລາວ, ກະລຸນາແຈ້ງໃຫ້ພວກຂ້າພະເຈົ້າຊາບເຖິງວັນ ແລະ ເວລາທີ່ທ່ານມີຄວາມສະດວກ.

ຂໍຂອບໃຈເປັນຢ່າງສູງ

ທ້າວ ລຳເງິນ ຜາຕັ້ງ
(ຫົວໜ້າການເງິນ ແລະ ບໍລິຫານ)

Copyright by JICA

ຈາກ: ທ້າວ ລຳເງິນ ຜາຕັ້ງ
3 ພຶດສະພາ 2012 ເວລາ 8:03
ເຖິງ: ທ່ານ ດວງເດືອນ ນວນສະຫວ່າງ

ພວກຂ້າພະເຈົ້າແມ່ນລໍຖ້າການຕອບຄຳຖາມຂອງທ່ານ ຕັ້ງແຕ່ວັນທີ 5 ມີນາ 2012. ພວກຂ້າພະເຈົ້າ ພ້ອມທີ່ຈະພົບທ່ານ ແລະ ນາງ ຄຳຫຼ້າ ຂາວດີ ເພື່ອທີ່ຈະໄດ້ປຶກສາຫາລື ແລະ ຊີ້ແຈງກ່ຽວກັບບັນຫາທີ່ເກີດຂຶ້ນໄວທີ່ສຸດ ເທົ່າທີ່ຈະໄວໄດ້. ດັ່ງນັ້ນ, ພວກຂ້າພະເຈົ້າໄດ້ມີແຜນທີ່ຈະຍ້າຍອອກຈາກເຮືອນເຊົ່າດັ່ງກ່າວ ເພື່ອຈະໄດ້ຢູ່ຫ້ອງການໃໝ່ ໃນເດືອນມິຖຸນາ 2012 ນີ້.

ຂໍຂອບໃຈລ່ວງໜ້າສຳລັບການຕອບກັບທີ່ຮີບດ່ວນຂອງທ່ານ

ທ້າວ ລຳເງິນ ຜາຕັ້ງ
(ຫົວໜ້າການເງິນ ແລະ ບໍລິຫານ)

Copyright by JICA

ຈາກ: ທ້າວ ດວງເດືອນ ນວນສະຫວ່າງ

7 ພຶດສະພາ 2012 ເວລາ 17:50

ເຖິງ: ທ້າວ ລຳເງິນ ຜາຕັ້ງ ແລະ ນາງ ແຟນຕ້າ ລູຊີ

ຂໍຂອບໃຈສຳລັບການແຈ້ງເຕືອນຂອງທ່ານກ່ຽວກັບສັນຍາເຊົ່າ. ດັ່ງທີ່ຂ້ອຍໄດ້ກ່າວໄວ້ກ່ອນໜ້ານີ້, ຂ້ອຍ ແລະ ເມຍຂອງຂ້ອຍເປັນພຽງຜູ້ສົ່ງຂ່າວ ບໍ່ມີອຳນາດໃນການຕັດສິນໃຈໃນເລື່ອງທີ່ເກີດຂຶ້ນ. ສະນັ້ນ, ພວກຂ້າພະເຈົ້າບໍ່ສາມາດຕັດສິນໃຈໃດໆໄດ້. ປັດຈຸບັນນີ້ ນາງ ຄຳຫຼ້າ ຂາວດີ ແລະ ຂ້ອຍແມ່ນມາທ່ຽວຢູ່ ເມືອງລອນດອນ ແລະ ບໍ່ມີປະໂຫຍດປານໃດທີ່ຈະພົບຂ້ອຍເພື່ອເວົ້າເຖິງບັນຫາດັ່ງກ່າວ. ທາງທີ່ດີ ສຳລັບທ່ານຄວນຈະຕິດຕໍ່ຫາ ທ່ານ ສົມສະຫວັດ ຂາວດີ ຫຼື ເມຍຂອງລາວ ນາງ ພອນໄອລິນ ຂາວດີ ເພື່ອປຶກສາຫາລືເຖິງບັນຫາດັ່ງກ່າວ. ຂ້ອຍໄດ້ບອກພວກເຂົາແລ້ວສິ່ງທີ່ເຈົ້າຮ້ອງຂໍ ແລະ ສິ່ງທີ່ທ່ານຕ້ອງການປະຊຸມກັບພວກເຂົາ. ພວກເຂົາບອກວ່າ ບໍ່ມີບັນຫາຫຍັງກ່ຽວກັບການສົ່ງເງິນຄ່າເຊົ່າ ແລະ ປະຊຸມກັບທ່ານ. ສະນັ້ນ, ຖ້າພວກເຂົາຍັງບໍ່ໄດ້ຕິດຕໍ່ກັບທ່ານ ຫຼື ໄປພົບທ່ານ ກະລຸນາຕິດຕໍ່ຫາເຂົາທາງໂທລະສັບ xxxxxx ແລະ xxxxxx.

ເພື່ອເປັນຂໍ້ມູນໃຫ້ແກ່ທ່ານທີ່ບໍ່ກ່ຽວກັບບັນຫາເລື່ອງເຊົ່າຫ້ອງການ ຂ້ອຍມີຄວາມສົນໃຈຢາກພົບແລະ ປຶກສາກັບທ່ານທັງສອງ ກ່ຽວກັບສະຖານທີ່ເຊົ່າບ່ອນໃໝ່ ຖ້າທ່ານສົນໃຈ.

ຂໍໂທດທີ່ຂາດການຕິດຕໍ່ກັບທ່ານ ແລະ ການຕອບຈົດໝາຍທາງເອເລັກໂຕຣນິກທີ່ຊັກຊ້າຂອງຂ້າພະເຈົ້າ.

ທ້າວ ດວງເດືອນ ນວນສະຫວ່າງ

Copyright by JICA

ຈາກ: ນາງ ແຟນຕ້າ ລູຊີ
7 ພຶດສະພາ 2012, ເວລາ 21:34
ເຖິງ: ທ້າວ ລຳເງິນ ຜາຕັ້ງ

ເຈົ້າໄດ້ຕິດຕໍ່ຫາຜູ້ທີ່ ທ້າວ ດວງເດືອນ ນວນສະຫວ່າງ ໄດ້ແນະນຳແລ້ວບໍ ? ເຈົ້າມີຄວາມຄືບໜ້າແນວໃດ ກ່ຽວກັບການສົ່ງເງິນຄ່າເຊົ່າຄືນ ? ກະລຸນາແຈ້ງໃຫ້ຂ້ອຍຮູ້ແດ່.

ຖ້າພວກເຮົາມີຄວາມຈຳເປັນຕ້ອງປະຊຸມກັບພວກເຂົາເຈົ້າອີກ, ກະລຸນານັດປະຊຸມເປັນວັນທີ 15 ພຶດສະພາ 2012 ທີ່ຫ້ອງການຂອງພວກຂ້າພະເຈົ້າ.

ຮຽນມາດ້ວຍຄວາມນັບຖື

ນາງ ແຟນຕ້າ ລູຊີ

Copyright by JICA

ຈາກ: ທ້າວ ລຳເງິນ ຜາຕັ້ງ
9 ພຶດສະພາ 2012, ເວລາ 10:25
ເຖິງ: ນາງ ແຟນຕ້າ ລູຊີ

ພວກຂ້າພະເຈົ້າໄດ້ຕິດຕໍ່ທ່ານ ນາງ ຄຳຫຼ້າ ຂາວດີ (ເມຍຂອງ ທ້າວ ດວງເດືອນ ນວນສະຫວ່າງ) ແລະ ລາວກໍໄດ້ຢັ້ງຢືນວ່າ ລາວຈະມາພົບພວກເຮົາ ເວລາ 8:30 ຂອງວັນທີ 16 ພຶດສະພາ 2012 ທີ່ຫ້ອງການຂອງພວກເຮົາ.

ຮຽນມາດ້ວຍຄວາມນັບຖື

ທ້າວ ລຳເງິນ ຜາຕັ້ງ

Copyright by JICA

ບໍລິສັດກໍ່ສ້າງສາກົນຈຳກັດ

ບໍລິສັດກໍ່ສ້າງສາກົນຈຳກັດ
ຕູ້ ປ.ນ xxxx ວຽງແກ້ວ,
ເມືອງ ວັງວຽງ, ແຂວງວຽງຈັນ, ສປປ ລາວ
ໂທ: xxxxxxxx
ແຟັກ:xxxxxxxx

# ບົດບັນທຶກກອງປະຊຸມ

ຫົວຂໍ້ປະຊຸມ : ປຶກສາຫາລື ແລະໄກ່ເກ່ຍຂໍ້ຂັດແຍ່ງກ່ຽວກັບຄ່າເຊົ່າເຮືອນຂອງຫ້ອງການ ບໍລິສັດກໍ່ສ້າງສາກົນຈຳກັດ.

ວັນທີ : 11 ມິຖຸນາ 2012

ສະຖານທີ່ : ຫ້ອງປະຊຸມບໍລິສັດກໍ່ສ້າງສາກົນຈຳກັດ

ເວລາ : 14:00

ຜູ້ເຂົ້າຮ່ວມ ທັງໝົດຈຳນວນ 7 ທ່ານ ຄື:

ບໍລິສັດກໍ່ສ້າງສາກົນຈຳກັດ ປະກອບມີ: ນາງ ແຟນຕ້າ ລູຊີ (ອຳນວຍການ), ທ້າວ ລຳເງິນ ຜາຕັ້ງ (ຫົວໜ້າບໍລິຫານ ແລະ ການເງິນ), ທ້າວ ຄຳພອນ ຈັນມະນີ (ທີ່ປຶກສາດ້ານກົດໝາຍ), ຕໍ່ໄປນີ້ເອີ້ນວ່າ ຝ່າຍ ກ.

ເຈົ້າຂອງເຮືອນ ປະກອບມີ: ທ້າວ ດວງເດືອນ ນວນສະຫວ່າງ ແລະ ນາງ ຄຳຫຼ້າ ຂາວດີ (ຕາງໜ້າຄອບຄົວເຈົ້າຂອງເຮືອນເຊົ່າຜູ້ເກົ່າ), ທ້າວ ທອງດຳ ປະກາຍແສງ ພ້ອມດ້ວຍພັນລະຍາ (ເຈົ້າຂອງເຮືອນຜູ້ໃໝ່), ຕໍ່ໄປນີ້ເອີ້ນວ່າ ຝ່າຍ ຂ.

ຄວາມເປັນມາຂອງຂໍ້ຂັດແຍ່ງ ແລະ ລາຍລະອຽດທີ່ໄດ້ປຶກສາຫາລື ມີດັ່ງນີ້ :

1. ອີງຕາມສັນຍາເຊົ່າເຮືອນ ສະບັບລົງວັນທີ 7 ທັນວາ 2011 ລະຫວ່າງ ນາງ ຄຳຫຼ້າ ຂາວດີ (ຫຼານສາວ) ຕາງໜ້າ ທ້າວ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນ ແລະ ບໍລິສັດກໍ່ສ້າງສາກົນຈຳກັດ ຕາງໜ້າໂດຍນາງ ແຟນຕ້າ ລູຊີ, ຄ່າເຊົ່າແມ່ນ 2.000 ໂດລາສະຫາລັດຕໍ່ເດືອນ, ກຳນົດເວລາຂອງສັນຍາແມ່ນສອງປີ ເລີ່ມແຕ່ວັນທີ 1 ມັງກອນ 2012 ຫາ 31 ທັນວາ 2013, ຝ່າຍ ກ ໄດ້ຈ່າຍຄ່າເຊົ່າລ່ວງໜ້າສຳລັບປີທຳອິດ ໃນວັນທີ 9 ທັນວາ 2011 ເປັນເງິນຈຳນວນ 24.000 ໂດລາສະຫາລັດ;

2. ໃນວັນທີ 19 ກຸມພາ 2012 ຝ່າຍ ຂ ໄດ້ແຈ້ງໃຫ້ຝ່າຍ ກ ຊາບວ່າ ໄດ້ຂາຍທີ່ດິນ ແລະ ເຮືອນ ໃຫ້ເຈົ້າຂອງເຮືອນຜູ້ໃໝ່ ໃນຊ່ວງເວລາທີ່ສັນຍາເຊົ່າເຮືອນກັບຝ່າຍ ກ ຍັງບໍ່ທັນສິ້ນສຸດ ແລະ ຝ່າຍ ກ ໄດ້ແຈ້ງໃຫ້ເຈົ້າຂອງເຮືອນຜູ້ໃໝ່ຊາບວ່າ ຈະໄດ້ຍ້າຍອອກຈາກເຮືອນໃນເດືອນ ກໍລະກົດ 2012 ພ້ອມທັງຂໍເງິນຄ່າເຊົ່າທີ່ໄດ້ຈ່າຍລ່ວງໜ້າຄືນສຳລັບເດືອນ ກໍລະກົດ 2012 ຫາ ເດືອນ ທັນວາ 2012 ເປັນຈຳນວນ 12.000 ໂດລາສະຫະລັດ;

Copyright by JICA

3. ຝ່າຍ ກ ໄດ້ສົ່ງຈົດໝາຍທາງການເລກທີ 051, ລົງວັນທີ 4 ມິຖຸນາ 2012 ຫາ ຝ່າຍ ຂ ເພື່ອແຈ້ງໃຫ້ຊາບວ່າ ຈະຍ້າຍອອກຈາກເຮືອນເຊົ່າໃນເດືອນກໍລະກົດ 2012 ແລະ ຂໍເງິນຄ່າເຊົ່າທີ່ໄດ້ຈ່າຍລ່ວງໜ້າຄືນສຳລັບເດືອນ ກໍລະກົດ ຫາ ທັນວາ 2012 ຈຳນວນ 12.000 ໂດລາສະຫະລັດ ແລະ ຝ່າຍ ຂ ຕ້ອງໃຫ້ຄຳຕອບ ບໍ່ໃຫ້ກາຍວັນທີ 15 ມິຖຸນາ 2012 ກ່ອນທີ່ຝ່າຍ ກ ຈະນຳໃຊ້ສິດດຳເນີນການຕາມກົດໝາຍ;

4. ຝ່າຍ ຂ ເຫັນດີທີ່ຈະຕອບ ກ່ອນວັນທີ 19 ມິຖຸນາ 2012 ວ່າ ຈະຈ່າຍ ຫຼື ບໍ່ຈ່າຍຄ່າເຊົ່າສຳລັບຫົກເດືອນ ເປັນເງິນ 12.000 ໂດລາສະຫະລັດ ຄືນໃຫ້ແກ່ຝ່າຍ ກ ຕາມການສະເໜີ.

ດັ່ງນັ້ນ, ທັງສອງຝ່າຍຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານ ແລະ ເຮັດເປັນສອງສະບັບ ຊຶ່ງແຕ່ລະຝ່າຍຮັກສາໄວ້ຄົນລະສະບັບ.

| ຕາງໜ້າ ຝ່າຍ ກ | ຕາງໜ້າ ຝ່າຍ ຂ | ຜູ້ບັນທຶກ |
| --- | --- | --- |
| ຕາປະທັບ ບໍລິສັດ | ຄຳຫຼ້າ ຂາວດີ | ລຳເງິນ ຜາຕັ້ງ |
| ແຟນຕ້າ ລູຊີ | | |

Copyright by JICA

ຈາກ: ທ້າວ ດວງເດືອນ ນວນສະຫວ່າງ
ວັນທີ 15 ມິຖຸນາ 2012, ເວລາ 8:01
ເຖິງ: ນາງ ແຟນຕ້າ ລູຊີ

ຂໍແຈ້ງໃຫ້ທ່ານຊາບວ່າ ຂ້າພະເຈົ້າໄດ້ລາຍງານກ່ຽວກັບການປຶກສາຫາລືເຖິງບັນຫາຂອງພວກເຮົາໃຫ້ ທ່ານ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນເຊົ່າຄົນເກົ່າຊາບແລ້ວ, ລາວໄດ້ໃຫ້ຄຳຄິດເຫັນ ແລະ ແນະນຳດັ່ງນີ້ :

1. ລາວຍິນດີທີ່ຈະສົ່ງເງິນຄືນແກ່ທ່ານ ພຽງແຕ່ 6.000 ໂດລາສະຫະລັດ ເທົ່ານັ້ນ ດັ່ງທີ່ລາວໄດ້ກ່າວໄວ້ໃນກອງປະຊຸມຄັ້ງຫຼ້າສຸດຂອງພວກເຮົາແລ້ວວ່າ ລາວບໍ່ໄດ້ຮັບເງິນໃດໆຈາກທ່ານທີ່ເປັນຄ່າເຊົ່າ, ເງິນທັງໝົດນັ້ນແມ່ນໄດ້ສົ່ງໃຫ້ທ້າວ ທອງດຳ ປະກາຍແສງ ຜູ້ເປັນເຈົ້າຂອງເຮືອນຄົນໃໝ່ ແລະ ຜູ້ກ່ຽວກໍໄດ້ຍອມຮັບຕໍ່ທ່ານແລ້ວໃນກອງປະຊຸມ. ຄວາມເປັນຈິງແລ້ວ ພວກຂ້າພະເຈົ້າໄດ້ຂໍໃຫ້ລາວສົ່ງເງິນຄ່າເຊົ່າຈຳນວນດັ່ງກ່າວຄືນແກ່ທ່ານ, ແຕ່ວ່າລາວປະຕິເສດທີ່ຈະເຮັດແນວນັ້ນ, ລາວໄດ້ຈ່າຍເງິນຈຳນວນດັ່ງກ່າວເປັນຄ່າເຊົ່າເຮືອນສຳລັບເປັນທີ່ພັກອາໄສຂອງລາວເອງ ໃນໄລຍະລໍຖ້າການສິ້ນສຸດສັນຍາຂອງພວກເຮົາ;

2. ສາເຫດທີ່ເປັນແນວນັ້ນ ກໍເພາະວ່າທ້າວ ຄຳສີ ແສງຈັນເພັງ ແລະ ທ້າວ ທອງດຳ ປະກາຍແສງ ໄດ້ພິຈາລະນາວ່າ ທ່ານເປັນຜູ້ຕັດສິນໃຈຍົກເລີກສັນຍາເຊົ່າກ່ອນກຳນົດເວລາ ທີ່ໄດ້ຕົກລົງກັນໃນສັນຍາ ຄື ວັນທີ 31 ທັນວາ 2012 ແຕ່ພຽງຝ່າຍດຽວ, ທັງໆທີ່ທ່ານ ຄຳສີ ແສງຈັນເພັງ (ເຈົ້າຂອງເຮືອນເຊົ່າຄົນເກົ່າ) ແລະ ທ້າວ ທອງດຳ ປະກາຍແສງ (ເຈົ້າຂອງເຮືອນເຊົ່າຄົນໃໝ່) ກໍເຫັນດີ ແລະ ຈະສືບຕໍ່ປະຕິບັດຕາມສັນຍາທີ່ເຊັນກັນ ໂດຍປາສະຈາກການປ່ຽນແປງໃດໆ ຄື ອະນຸຍາດໃຫ້ທ່ານອາໄສຢູ່ໃນເຮືອນຈົນເຖິງວັນທີ 31 ທັນວາ 2012. ອີງຕາມມາດຕາ 11 ໃນສັນຍາເຊົ່າຂອງພວກເຮົາ, ຖ້າທ່ານຫາກຕ້ອງການຍົກເລີກສັນຍາແຕ່ພຽງຝ່າຍດຽວ ກ່ອນທີ່ສັນຍາເຊົ່າຈະສິ້ນສຸດ ທ່ານຕ້ອງແຈ້ງເປັນລາຍລັກອັກສອນໃຫ້ພວກຂ້າພະເຈົ້າຮູ້ລ່ວງໜ້າສາມເດືອນ, ຈົນມາຮອດດຽວນີ້ ທ່ານຈຶ່ງມາແຈ້ງໃຫ້ພວກຂ້າພະເຈົ້າວ່າ ທ່ານຕ້ອງການທີ່ຈະຍ້າຍອອກຈາກເຮືອນເຊົ່າໃນວັນທີ 1 ກໍລະກົດ 2012.

ສະຫຼຸບແລ້ວ, ພວກຂ້າພະເຈົ້າສາມາດສົ່ງເງິນຄືນແກ່ທ່ານໄດ້ແຕ່ 6.000 ໂດລາສະຫະລັດເທົ່ານັ້ນ, ບໍ່ແມ່ນ 12.000 ໂດລາສະຫະລັດ ດັ່ງທີ່ທ່ານຮ້ອງຂໍ, ຖ້າທ່ານເຫັນດີແມ່ນພວກຂ້າພະເຈົ້າຈະສົ່ງເງິນຄືນແກ່ທ່ານໃນເດືອນມິຖຸນານີ້ ກ່ອນທີ່ທ່ານຈະຍ້າຍອອກຈາກເຮືອນເຊົ່າ.

Copyright by JICA

ຂໍຂອບໃຈຫຼາຍໆ ສຳລັບຄວາມເຂົ້າອົກເຂົ້າໃຈ ແລະ ການໃຫ້ຄວາມຮ່ວມມືຂອງທ່ານ, ຫວັງຢ່າງຍິ່ງວ່າ ການສົ່ງເງິນຄ່າເຊົ່າຄືນ ຕາມຈຳນວນທີ່ໄດ້ສະເໜີມານັ້ນ ຈະມີຄວາມຍຸຕິທຳແກ່ພວກເຮົາທັງສອງຝ່າຍ.

ດ້ວຍຄວາມຈິງໃຈ

ນາງ ຄຳຫຼ້າ ຂາວດີ

ຕາງໜ້າທ້າວ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນ

Copyright by JICA

ຈາກ: ນາງ ແຟນຕ້າ ລູຊີ
ວັນທີ 15 ມິຖຸນາ 2012, ເວລາ 9:35
ເຖິງ: ທ້າວ ດວງເດືອນ ນວນສະຫວ່າງ

ຂໍຂອບໃຈສຳລັບຈົດໝາຍຂອງທ່ານ, ຕໍ່ໄປນີ້ແມ່ນສິ່ງທີ່ພວກຂ້າພະເຈົ້າຈະໄດ້ຕອບກັບໃຫ້ທ່ານ:

1. ເຈົ້າຂອງເຮືອນເຊົ່າຜູ້ໃໝ່ ແມ່ນບໍ່ມີສ່ວນກ່ຽວຂ້ອງກັບບັນຫານີ້ ແລະ ພວກຂ້າພະເຈົ້າ ຈະເຈລະຈາສະເພາະແຕ່ກັບຄູ່ສັນຍາທີ່ໄດ້ເຊັນກັນເທົ່ານັ້ນ. ສະນັ້ນ, ພວກຂ້າພະເຈົ້າຈະບໍ່ມີການພິຈາລະນາກ່ຽວກັບເລື່ອງພາຍໃນລະຫວ່າງເຈົ້າຂອງເຮືອນເຊົ່າຜູ້ເກົ່າ ແລະ ຜູ້ໃໝ່. ພວກຂ້າພະເຈົ້າຂໍໃຫ້ທ່ານສົ່ງເງິນຄ່າເຊົ່າທຸກເດືອນໃນຈຳນວນ 12.000 ໂດລາສະຫະລັດຄືນໃຫ້ພວກຂ້າພະເຈົ້າ, ບໍ່ແມ່ນ 6.000 ໂດລາສະຫະລັດ;

2. ສັນຍາເຊົ່າມີກຳນົດເວລາສອງປີ, ແຕ່ບໍ່ສາມາດປະຕິບັດໄດ້ຢ່າງຄົບຖ້ວນແມ່ນເກີດຈາກທ່ານເອງ, ບໍ່ແມ່ນເກີດຈາກພວກຂ້າພະເຈົ້າ ເພາະວ່າທ່ານໄດ້ຂາຍເຮືອນຫຼັງດັ່ງກ່າວໃຫ້ຄົນອື່ນ. ນີ້ແມ່ນການຕັດສິນໃຈຝ່າຍດຽວຂອງທ່ານ ແລະ ບໍ່ແມ່ນການຕັດສິນໃຈຂອງພວກຂ້າພະເຈົ້າ. ເພາະສະນັ້ນ, ທ່ານຄວນແຈ້ງເປັນລາຍລັກອັກສອນ ໃຫ້ພວກຂ້າພະເຈົ້າຮູ້ກ່ຽວກັບເລື່ອງທີ່ທ່ານບໍ່ສາມາດສືບຕໍ່ປະຕິບັດສັນຍາເຊົ່າຈົນຄົບສອງປີ ຕາມທີ່ໄດ້ເຊັນກັນແລ້ວ. ທ່ານເປັນຝ່າຍບໍ່ເຄົາລົບເງື່ອນໄຂ ແລະ ການຕົກລົງໃນການປະຕິບັດສັນຍາຂອງພວກເຮົາ. ດ້ວຍເຫດຜົນດັ່ງກ່າວ, ພວກຂ້າພະເຈົ້າຈຶ່ງຂໍໃຫ້ທ່ານຈ່າຍເງິນຄ່າເຊົ່າຄືນໃນຈຳນວນເຕັມ ທີ່ຂ້າພະເຈົ້າໄດ້ຈ່າຍໃຫ້ລ່ວງໜ້າໄປແລ້ວ ໃນງວດທີສອງຂອງປີ 2012.

ພວກຂ້າພະເຈົ້າຍັງລໍຖ້າໃຫ້ທ່ານເຊັນບົດບັນທຶກກອງປະຊຸມ ແລ້ວສົ່ງກັບຄືນມາໃຫ້ພວກຂ້າພະເຈົ້າ. ນີ້ແມ່ນເອກະສານ ທີ່ພວກຂ້າພະເຈົ້າຈະນຳໃຊ້ເພື່ອດຳເນີນການທາງດ້ານກົດໝາຍໃນອາທິດໜ້າ, ເວັ້ນເສຍແຕ່ທ່ານຫາກເຫັນດີປ່ຽນແປງຄວາມຄິດຂອງທ່ານກ່ອນວັນທີ 19 ມິຖຸນາ.

ດ້ວຍຄວາມນັບຖື

ນາງ ແຟນຕ້າ ລູຊີ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ
ສານປະຊາຊົນເຂດ II — ເລກທີ **XXX**/ສປຊ
ຄະນະສານແພ່ງ — ລົງວັນທີ 19 ພະຈິກ 2012
ໂທລະສັບ: **XXXXXXX**

**ໝາຍຮຽກຈຳເລີຍ**

**ຄັ້ງທີ I**

- ອີງຕາມ ມາດຕາ 2 ຂອງກົດໝາຍວ່າດ້ວຍສານປະຊາຊົນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2009;
- ອີງຕາມ ມາດຕາ 142, 143, 144 ແລະ 145 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012;
- ອີງຕາມ ສຳນວນຄະດີ ແພ່ງ ເລກທີ xxx /ຂຕ.ພ, ລົງວັນທີ 11 ທັນວາ 2012.

**ລະຫວ່າງ**

ບໍລິສັດກໍ່ສ້າງສາກົນຈຳກັດ..........................................................................
ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ...............................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ............................................ ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ......................................ຈຳເລີຍທີ 2.

**ກ່ຽວເລື່ອງ:** ທວງເອົາເງິນຄ່າເຊົ່າເຮືອນຄືນ

Copyright by JICA

ຈ່າສານ ແພ່ງ ສານປະຊາຊົນເຂດ **II** ແຂວງ ວຽງຈັນ ໄດ້ຮຽກຕົວ ~~ທ້າວ~~/ນາງ ຄຳຫຼ້າ ຂາວດີ , ອາຍຸ **52** ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ເຮືອນເລກທີ **xxx**, ໜ່ວຍ **xxx**, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ ເຂົ້າມາສານໃນວັນທີ 21 ພະຈິກ 2012, ເວລາ 8:30, ຫ້ອງເບີ 1, ເພື່ອພົ**ບ**ທ່ານ ນາງ ດອກໄມ້ ຈັນມະນີ, ຈຸດປະສົງ ເຂົ້າມາຮັບຊາບຄຳຮ້ອງຟ້ອງ.

ໃນກໍລະນີຝ່າຍຈຳເລີຍ ຫາກໄດ້ຮັບໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກ ໂດຍບໍ່ມີເຫດຜົນພຽງພໍນັ້ນ, ອີງຕາມມາດຕາ 153 ວັກ 03 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ໄດ້ກຳນົດໄວ້ວ່າ ໃນກໍລະນີທີ່ຈຳເລີຍ ຫຼື ຜູ້ຕາງໜ້າ ຫຼື ບຸກຄົນທີສາມຝ່າຍຈຳເລີຍ ຫາກບໍ່ເຂົ້າມາສານຕາມໝາຍຮຽກເຖິງສາມຄັ້ງ ໂດຍບໍ່ມີເຫດຜົນພຽງພໍ ຫຼື ບໍ່ເຂົ້າມາສານຍ້ອນວ່າຜູ້ກ່ຽວຍ້າຍໜີຈາກບ່ອນຢູ່ເດີມໄປໂດຍບໍ່ແຈ້ງບ່ອນຢູ່ໃໝ່ ໃຫ້ອົງການປົກຄອງບ້ານຮູ້ນຳແລ້ວ ສານມີສິດອອກໝາຍພາຕົວ ຫຼື ຕັດສິນລັບຫຼັງຈຳເລີຍກໍໄດ້.

ຈ່າສານແພ່ງ




ນາງ ດອກໄມ້ ຈັນມະນີ

ໝາຍເຫດ
ໃຫ້ຖືໝາຍຮຽກສະບັບນີ້ເຂົ້າມາພ້ອມ.
ວັນທີ 19 ພະຈິກ 2012
ລາຍເຊັນ, ແປະໂປ້ຜູ້ຮັບ ແລະ ຊຽນຊື່ແຈ້ງ

Copyright by JICA

ເອກະສານລຳດັບທີ 19

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງ............

ສານປະຊາຊົນເຂດ…............ ເລກທີ........./ສປຊ

ຄະນະສານ................ ລົງວັນທີ......./...../......

ໂທລະສັບ: .........................

# ໝາຍຮຽກຈຳເລີຍ

## ຄັ້ງທີ……

- ອີງຕາມ ມາດຕາ 2 ຂອງກົດໝາຍວ່າດ້ວຍສານປະຊາຊົນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2009;
- ອີງຕາມ ມາດຕາ 142, 143, 144 ແລະ 145 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012;
- ອີງຕາມ ສຳນວນຄະດີ.................... ເລກທີ....../ຂຕ , ລົງວັນທີ...................................

**ລະຫວ່າງ**

ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ.... , ອາຊີບ.........., ປັດຈຸບັນຢູ່ເຮືອນເລກທີ..... , ໜ່ວຍ........, ບ້ານ.........., ເມືອງ............., ແຂວງ.........................ໂຈດ

ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ.... , ອາຊີບ............, ປັດຈຸບັນຢູ່ເຮືອນເລກທີ........., ໜ່ວຍ......., ບ້ານ.........., ເມືອງ...., ແຂວງ.......... ເປັນຜູ້ຕາງໜ້າໂຈດ.

ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ....... , ອາຊີບ......., ປັດຈຸບັນຢູ່ເຮືອນເລກທີ........, ໜ່ວຍ........., ບ້ານ.........., ເມືອງ............., ແຂວງ...................ຈຳເລີຍ

ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ......... , ອາຊີບ......, ປັດຈຸບັນຢູ່ເຮືອນເລກທີ........., ໜ່ວຍ....., ບ້ານ.........., ເມືອງ...., ແຂວງ.......... ເປັນຜູ້ຕາງໜ້າຈຳເລີຍ.

**ກ່ຽວເລື່ອງ:** ..........................................................................................

ຈ່າສານ......... ສານປະຊາຊົນເຂດ ...........ແຂວງ.................................ໄດ້ຮຽກຕົວ ທ້າວ/ນາງ................................., ອາຍຸ ........ ປີ, ສັນຊາດ ..........., ອາຊີບ ..................,

Copyright by JICA

ປັດຈຸບັນຢູ່ເຮືອນເລກທີ ..........., ໜ່ວຍ .........., ບ້ານ..................., ເມືອງ.........................., ແຂວງ.......................... ເຂົ້າມາສານໃນວັນທີ ........../......./.........., ເວລາ ........,ຫ້ອງເບີ ....., ເພື່ອພົບ ທ່ານ..............................................., ຈຸດປະສົງ ....................................................

ໃນກໍລະນີຝ່າຍຈຳເລີຍ ຫາກໄດ້ຮັບໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກ ໂດຍບໍ່ມີເຫດຜົນພຽງພໍນັ້ນ, ອີງຕາມມາດຕາ 153 ວັກ 03 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ໄດ້ກຳນົດໄວ້ວ່າໃນກໍລະນີທີ່ຈຳເລີຍຫຼືຜູ້ຕາງໜ້າຫຼືບຸກຄົນທີສາມຝ່າຍຈຳເລີຍຫາກບໍ່ເຂົ້າມາສານຕາມໝາຍຮຽກເຖິງສາມຄັ້ງໂດຍບໍ່ມີເຫດຜົນພຽງພໍຫຼືບໍ່ເຂົ້າມາສານຍ້ອນວ່າຜູ້ກ່ຽວຍ້າຍໜີຈາກບ່ອນຢູ່ເດີມໄປໂດຍບໍ່ແຈ້ງບ່ອນຢູ່ໃໝ່ໃຫ້ອີງການປົກຄອງບ້ານຮູ້ນຳແລ້ວສານມີສິດອອກໝາຍພາຕົວຫຼືຕັດສິນລັບຫຼັງຈຳເລີຍກໍໄດ້.

ຈ່າສານ..........

ໝາຍເຫດ
ໃຫ້ຖືໝາຍຮຽກສະບັບນີ້ເຂົ້າມາພ້ອມ.
ວັນທີ ......../......./.............
ລາຍເຊັນ, ແປະໂປ້ຜູ້ຮັບ ແລະ ຊຽນຊື່ແຈ້ງ

Copyright by JICA

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສານປະຊາຊົນແຂວງວຽງຈັນ

ສານປະຊາຊົນເຂດ II ເລກທີ xxx/ສປຊ

ຄະນະສານແພ່ງ. ລົງວັນທີ 19 ພະຈິກ 2012

ໂທລະສັບ: xxxxxx

# ໝາຍຮຽກຈຳເລີຍ

## ຄັ້ງທີ I

- ອີງຕາມ ມາດຕາ 2 ຂອງກົດໝາຍວ່າດ້ວຍສານປະຊາຊົນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2009;
- ອີງຕາມ ມາດຕາ 142, 143, 144 ແລະ 145 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012;
- ອີງຕາມ ສຳນວນຄະດີ ແພ່ງ ເລກທີ xxx/ຂຕ.ພ, ລົງວັນທີ 11 ທັນວາ 2012.

## ລະຫວ່າງ

ບໍລິສັດກໍ່ສ້າງສາກົນຈຳກັດ.........................................................................ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ................................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ.......................................... ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ....................................ຈຳເລີຍທີ 2.

**ກ່ຽວເລື່ອງ:** ທວງເອົາເງິນຄ່າເຊົ່າເຮືອນຄືນ

ຈ່າສານ ແພ່ງ ຂອງສານປະຊາຊົນເຂດ II ແຂວງ ວຽງຈັນ ໄດ້ຮຽກຕົວ ທ້າວ/~~ນາງ~~ ທອງດຳ ປະກາຍແສງ, ອາຍຸ **48** ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ເຮືອນເລກທີ **xxx**, ໜ່ວຍ **xxx**, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ເຂົ້າມາສານໃນວັນທີ 21 ມັງກອນ 2012,

Copyright by JICA

ເວລາ 8:30, ຫ້ອງເບີ 1, ເພື່ອພົບທ່ານ ນາງ ດອກໄມ້ ຈັນມະນີ, ຈຸດປະສົງ ເຂົ້າມາຮັບຊາບຄຳຮ້ອງຟ້ອງ.

ໃນກໍລະນີຝ່າຍຈຳເລີຍ ຫາກໄດ້ໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍນັ້ນ, ອີງຕາມມາດຕາ 153 ວັກ 03 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ໄດ້ກຳນົດໄວ້ວ່າ ໃນກໍລະນີທີ່ຈຳເລີຍ ຫຼື ຜູ້ຕາງໜ້າ ຫຼື ບຸກຄົນທີສາມຝ່າຍຈຳເລີຍ ຫາກບໍ່ເຂົ້າມາສານຕາມໝາຍຮຽກເຖິງສາມຄັ້ງ ໂດຍບໍ່ມີເຫດຜົນພຽງພໍ ຫຼື ບໍ່ເຂົ້າມາສານຍ້ອນວ່າຜູ້ກ່ຽວຍ້າຍໜີຈາກບ່ອນຢູ່ເດີມໄປໂດຍບໍ່ແຈ້ງບ່ອນຢູ່ໃໝ່ ໃຫ້ອົງການປົກຄອງບ້ານຮູ້ນຳແລ້ວສານມີສິດອອກໝາຍພາຕົວ ຫຼື ຕັດສິນລັບຫຼັງຈຳເລີຍກໍໄດ້.

ຈ່າສານແພ່ງ




ດອກໄມ້ ຈັນມະນີ

ໝາຍເຫດ
ໃຫ້ຖືໝາຍຮຽກສະບັບນີ້ເຂົ້າມາພ້ອມ.
ວັນທີ 19 ພະຈິກ 2012
ລາຍເຊັນ, ແປະໂປ້ຜູ້ຮັບ ແລະ ຊຽນຊື່ແຈ້ງ

Copyright by JICA

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ໃບມອບສິດ

ຂ້າພະເຈົ້າ ຊື່ ນາງ ຄຳຫຼ້າ ຂາວດີ, ເກີດວັນທີ 22 ສິງຫາ 1959, ເຊື້ອຊາດ ລາວ, ສັນຊາດ ລາວ, ຊົນເຜົ່າ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ບ້ານ ວຽງແກ້ວ, ໜ່ວຍ xxx, ເມືອງ ວັງວຽງ, ແຂວງ ວຽງຈັນ, ຖືບັດປະຈຳຕົວເລກທີ xxxxxxxx, ລົງວັນທີ..xxxxxx.., ໝົດອາຍຸ..xxxxxx.., ອອກໃຫ້ໂດຍ ປກສ ແຂວງ ວຽງຈັນ.

ມີຈຸດປະສົງ: ມອບສິດ ໃຫ້ແກ່ ທ້າວ ທຸມແພງ ສັນຕິສຸກ, ປັດຈຸບັນຢູ່ບ້ານ ແສນຊຸມ, ໜ່ວຍ xxx, ເມືອງ ໂພນໂຮງ, ແຂວງ ວຽງຈັນ, ຖືບັດປະຈຳຕົວ xxxxxxxx, ລົງວັນທີ.xxxxxx., ໝົດອາຍຸ. xxxxxx., ອອກໃຫ້ໂດຍ ປກສ ແຂວງ ວຽງຈັນ.

ເຫດຜົນຂອງການມອບສິດແມ່ນຕິດຕາມຄະດີຮ້ອງຟ້ອງ ຢູ່ສານປະຊາຊົນເຂດ II, ແຂວງ ວຽງຈັນ.

ດັ່ງນັ້ນ, ຂ້າພະເຈົ້າ ຈິ່ງໄດ້ເຮັດໃບມອບສິດສະບັບນີ້ ໃຫ້ຜູ້ກ່ຽວເພື່ອໃຊ້ເປັນຫຼັກຖານອ້າງອີງທາງດ້ານກົດໝາຍ, ພາກສ່ວນກ່ຽວຂ້ອງທີ່ມີສ່ວນຮ່ວມວຽກງານນຳຜູ້ກ່ຽວ ຈົ່ງໃຫ້ຄວາມຮ່ວມມືດ້ວຍ.

**ທີ່ ວຽງຈັນ, ວັນທີ 23 ພະຈິກ 2012**

| **ເຫັນ ແລະ ຮັບຮູ້ຈາກ ອົງການປົກຄອງບ້ານ** | **ຜູ້ຮັບ** | **ຜູ້ມອບສິດ** |
|---|---|---|
| ຕາປະທັບ ນາຍບ້ານ | ທຸມແພງ ສັນຕິສຸກ | ຄຳຫຼ້າ ຂາວດີ |
| ໝັ້ນ ຍືນຍົງ | | |

Copyright by JICA

ເອກະສານດຳລັບທີ 22

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງວຽງຈັນ | ເລກທີ....xxx.../ **ສປຊ**

ສານປະຊາຊົນເຂດ II | ລົງວັນທີ 23 ພະຈິກ 2012

## ບົດບັນທຶກການຮັບຊາບຄຳຮ້ອງຟ້ອງ

ທີ່ສານປະຊາຊົນເຂດ II ແຂວງ ວຽງຈັນ, ວັນທີ 23 ພະຈິກ 2012 ໄດ້ມີ ທ້າວ/~~ນາງ~~ ທຸມແພງ ສັນຕິສຸກ, ອາຍຸ 53 ປີ, ສັນຊາດ ລາວ, ອາຊີບ ພະນັກງານ, ໜ່ວຍ xxx, ເຮືອນເລກທີ xxx, ປັດຈຸບັນ ຢູ່ບ້ານ ແສນຊຸມ, ເມືອງ ໂພນໂຮງ, ແຂວງ ວຽງຈັນ, ເບີໂທລະສັບ xxxxxxx.

ໄດ້ເຂົ້າມາສານປະຊາຊົນເຂດ II, ແຂວງວຽງຈັນ, ເພື່ອຮັບຊາບຄຳຮ້ອງຟ້ອງຂອງ ~~ທ້າວ~~/ນາງ ແຟນຕ້າ ລູຊີ, ອາຍຸ......xx.....ປີ, ສັນຊາດ................., ອາຊີບ.............., ບ້ານ ວຽງແກ້ວ, ໜ່ວຍ xxx , ເມືອງ ວັງວຽງ, ແຂວງ ວຽງຈັນ.

**ກ່ຽວເລື່ອງ: ທວງເອົາເງິນຄ່າເຊົ່າເຮືອນຄືນ**

ພາຍຫຼັງການຮັບຊາບນີ້ແລ້ວ ຜູ້ຮັບຊາບມີພັນທະສົ່ງຄຳແກ້ຟ້ອງໃຫ້ສານ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນຮັບຄຳຮ້ອງຟ້ອງຈາກສານ. ໃນກໍລະນີຜູ້ຖືກຮ້ອງຟ້ອງ ບໍ່ສາມາດສົ່ງຄຳແກ້ຟ້ອງ ຕາມເວລາທີ່ກຳນົດໄວ້ ຜູ້ກ່ຽວມີສິດຮ້ອງຂໍເລື່ອນເວລາ ຫຼື ຮ້ອງຂໍໃຫ້ສານບັນທຶກຄຳໃຫ້ການຕາງການ ແກ້ຟ້ອງໃນເວລາຜູ້ກ່ຽວເຂົ້າມາສານກໍໄດ້.

ດັ່ງນັ້ນ, ຈຶ່ງລົງລາຍເຊັນໄວ້ເປັນຫຼັກຖານ.

**ຈ່າສານແພ່ງ**

ຈ່າສານ

ດອກໄມ້ ຈັນມະນີ

**ຜູ້ຮັບຊາບຄຳຮ້ອງຟ້ອງ**

ເຊັນ ແລະ ແປະໂປ້

ທຸມແພງ ສັນຕິສຸກ



Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ວຽງຈັນ | ເລກທີ xxx/ສປຊ

ສານປະຊາຊົນເຂດ II | ລົງວັນທີ 27 ພະຈິກ 2012

# ບົດບັນທຶກການຮັບຊາບຄຳຮ້ອງຟ້ອງ

ທີ່ສານປະຊາຊົນເຂດ II, ແຂວງ ວຽງຈັນ, ວັນທີ 27 ພະຈິກ 2012 ໄດ້ມີທ້າວ/~~ນາງ~~ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ , ແຂວງ ວຽງຈັນ, ເບີໂທລະສັບ xxxxxxx.

ໄດ້ເຂົ້າມາສານປະຊາຊົນເຂດ II, ແຂວງ ວຽງຈັນ ເພື່ອຮັບຊາບຄຳຮ້ອງຟ້ອງຂອງ ~~ທ້າວ~~/ ນາງ ແຟນຕ້າ ລູຊີ, ອາຍຸ............ປີ, ສັນຊາດ................, ອາຊີບ............ປັດຈຸບັນຢູ່ບ້ານ ວຽງແກ້ວ, ໜ່ວຍ xxx, ເມືອງ ວັງວຽງ, ແຂວງ ວຽງຈັນ.

**ກ່ຽວເລື່ອງ: ທວງເອົາເງິນຄ່າເຊົ່າເຮືອນຄືນ**

ພາຍຫຼັງການຮັບຊາບນີ້ແລ້ວ ຜູ້ຮັບຊາບມີພັນທະສົ່ງຄຳແກ້ຟ້ອງໃຫ້ສານ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນຮັບຄຳຮ້ອງຟ້ອງຈາກສານ. ໃນກໍລະນີຜູ້ຖືກຮ້ອງຟ້ອງ ບໍ່ສາມາດສົ່ງຄຳແກ້ຟ້ອງ ຕາມເວລາທີ່ກຳນົດໄວ້ ຜູ້ກ່ຽວມີສິດຮ້ອງຂໍເລື່ອນເວລາ ຫຼື ຮ້ອງຂໍໃຫ້ສານບັນທຶກຄຳໃຫ້ການຕາງການແກ້ຟ້ອງໃນເວລາຜູ້ກ່ຽວເຂົ້າມາສານກໍໄດ້.

ດັ່ງນັ້ນ, ຈຶ່ງລົງລາຍເຊັນໄວ້ເປັນຫຼັກຖານ.

**ຈ່າສານແພ່ງ** | **ຜູ້ຮັບຊາບຄຳຮ້ອງຟ້ອງ**

ຈ່າສານ

ທອງດຳ ປະກາຍແສງ



ດອກໄມ້ ຈັນມະນີ

Copyright by JICA

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ຄຳແກ້ຟ້ອງ

**ຮຽນ: ທ່ານປະທານສານປະຊາຊົນ ເຂດ II** ແຂວງ ວຽງຈັນ

ຂ້າພະເຈົ້າທ້າວ/~~ນາງ~~ ທອງດຳ ປະກາຍແສງ, ອາຍຸ 48 ປີ, ອາຊີບ ນັກທຸລະກິດ, ສັນຊາດ ລາວ, ປັດຈຸບັນຢູ່ ໜ່ວຍ XXX, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ, ເບີໂທລະສັບ XXXXXXXX

ຂໍແກ້ຄຳຮ້ອງຟ້ອງ ~~ທ້າວ~~/ນາງ ແຟນຕ້າ ລູຊີ ສະບັບລົງ ວັນທີ 15 ພະຈິກ 2012, ຕາມຂາເຂົ້າຂອງສານປະຊາຊົນເລກທີ xx /ຂຕ.ພ, ລົງວັນທີ 16 ພະຈິກ 2012.

ກ່ຽວເລື່ອງ: ທວງເອົາເງິນຄ່າເຊົ່າເຮືອນຄືນ

<u>ດັ່ງມີລາຍລະອຽດລຸ່ມນີ້</u>:

ເນື່ອງຈາກວ່າ ຂ້າພະເຈົ້າໄດ້ຊື້ທີ່ດິນ ແລະ ເຮືອນ ນຳ ນາງ ຄຳຫຼ້າ ຂາວດີ ໃນວັນທີ 23 ພະຈິກ 2011, ຕໍ່ມາຜູ້ກ່ຽວພັດໄປເຊັນສັນຍາໃຫ້ບໍລິສັດກໍ່ສ້າງສາກົນຈຳກັດເຊົ່າໃນວັນທີ 7 ທັນວາ 2011, ຕໍ່ມາ ນາງ ຄຳຫຼ້າ ຂາວດີ ຈຶ່ງບອກວ່າໄດ້ໃຫ້ບໍລິສັດດັ່ງກ່າວເຊົ່າເຮືອນຂອງຂ້າພະເຈົ້າ, ແລ້ວຕົນເອງຈຶ່ງໄດ້ທວງເອົາເງິນຄ່າເຊົ່າເຮືອນ ເພື່ອໄປເຊົ່າເຮືອນຢູ່ ພ້ອມທັງໄດ້ແຈ້ງໃຫ້ ນາງ ຄຳຫຼ້າ ຂາວດີ ວ່າອະນຸຍາດໃຫ້ເຊົ່າໄດ້ປີດຽວເທົ່ານັ້ນ ເນື່ອງຈາກວ່າ ນາງ ຄຳຫຼ້າ ຂາວດີ ໄດ້ຮັບເງິນຈາກບໍລິສັດດັ່ງກ່າວມາແລ້ວ. ຫຼັງຈາກນັ້ນຜູ້ກ່ຽວກໍໄດ້ເອົາເງິນມາໃຫ້ຕົນຈຳນວນ 20.000 ໂດລາສະຫະລັດ ແລະ ເວົ້າວ່າ ສ່ວນເງິນຈຳນວນ 4.000 ໂດລາສະຫະລັດ ແມ່ນເປັນຄ່າໃຊ້ຈ່າຍໃນການປະກອບເອກະສານໂອນກຳມະສິດທີ່ດິນ ແລະ ເຮືອນ, ຫຼັງຈາກນັ້ນໃນວັນທີ 20 ກຸມພາ 2012 ນາງ ຄຳຫຼ້າ ຂາວດີ ໄດ້ພາຂ້າພະເຈົ້າໄປແຈ້ງຕໍ່ຜູ້ເຊົ່າ, ຕົນເອງກໍໄດ້ບອກພະນັກງານບໍລິສັດວ່າອະນຸຍາດໃຫ້ຢູ່ໜຶ່ງປີຕາມຈຳນວນເງິນທີ່ຈ່າຍລ່ວງໜ້າ ແລ້ວຂ້າພະ ເຈົ້າຈະຂໍທີ່ດິນ ແລະ ເຮືອນຄືນ ເພາະທີ່ດິນ ແລະ ເຮືອນດັ່ງກ່າວແມ່ນເປັນກຳມະສິດຂອງຂ້າພະເຈົ້າແລ້ວ ແຕ່ວັນທີ 23 ພະຈິກ 2011 ຕາມສັນຍາຊື້ຂາຍ ລະຫວ່າງ ນາງ ຄຳຫຼ້າ ຂາວດີ ກັບ ຂ້າພະເຈົ້າ. ສະນັ້ນ, ກ່ຽວກັບເລື່ອງດັ່ງກ່າວ ຂ້າພະເຈົ້າຈຶ່ງສະຫຼຸບດັ່ງນີ້:

- ຂ້າພະເຈົ້າຊື້ທີ່ດິນ ແລະ ເຮືອນກ່ອນການເຊັນສັນຍາເຊົ່າ;
- ຂ້າພະເຈົ້າບໍ່ຮູ້, ບໍ່ເຫັນ ສັນຍາເຊົ່າຫຼັງການຊື້ - ຂາຍ;
- ຂ້າພະເຈົ້າບໍ່ໄດ້ຕ້ອງການທວງເອົາທີ່ດິນ ແລະ ເຮືອນຄືນ ກ່ອນກຳນົດເວລາທີ່ຜູ້ເຊົ່າໄດ້ຈ່າຍເງິນລ່ວງໜ້າໄວ້;

Copyright by JICA

- ການທີ່ຂ້າພະເຈົ້າໄປແຈ້ງວ່າ ຈະເອົາທີ່ດິນ ແລະ ເຮືອນຄືນພາຍຫຼັງໝົດກຳນົດເວລາທີ່ຜູ້ເຊົ່າໄດ້ຈ່າຍເງິນລ່ວງໜ້າໄວ້ນັ້ນ ຖືວ່າເປັນສິດໂດຍຊອບທຳຂອງຂ້າພະເຈົ້າ ເພາະທີ່ດິນ ແລະ ເຮືອນດັ່ງກ່າວເປັນກຳມະສິດຂອງຂ້າພະເຈົ້າແລ້ວ (ເອກະສານສັນຍາຊື້ - ຂາຍ ໄດ້ຄັດຕິດມາພ້ອມນີ້);

**ຂໍ້ສະເໜີຕໍ່ສານ ຫຼື ຊອກຫາວິທີແກ້ໄຂ ຂໍ້ສະເໜີຂອງໂຈດ:**

1. ຂ້າພະເຈົ້າສະເໜີຕໍ່ສານວ່າ ໂຈດໄດ້ໄປເຊົ່າເຮືອນບ່ອນໃໝ່ແລ້ວ, ແຕ່ຢາກໄດ້ເງິນຄ່າເຊົ່າຄືນເຫັນວ່າບໍ່ຖືກຕ້ອງ ເພາະຂ້າພະເຈົ້າບໍ່ແມ່ນຜູ້ເຊັນສັນຍານຳໂຈດ;
2. ຂ້າພະເຈົ້າບໍ່ໄດ້ຂໍເອົາທີ່ດິນ ແລະ ເຮືອນຄືນ ກ່ອນກຳນົດທີ່ໂຈດຈ່າຍເງິນລ່ວງໜ້າໄວ້;
3. ຂ້າພະເຈົ້າໄດ້ແຈ້ງລ່ວງໜ້າໄວ້ເປັນເວລາເກົ້າເດືອນເຄິ່ງ ຖືວ່າພຽງພໍສຳລັບການທີ່ໂຈດຈະຊອກຫາເຮືອນຫຼັງໃໝ່;
4. ຂ້າພະເຈົ້າບໍ່ຮັບຮູ້ເນື້ອໃນສັນຍາທີ່ເຊັນກັນລະຫວ່າງ ນາງ ຄຳຫຼ້າ ຂາວດີ ກັບ ໂຈດ ເພາະຂ້າພະເຈົ້າໄດ້ແຈ້ງໃຫ້ ນາງ ຄຳຫຼ້າ ຂາວດີ ວ່າຂ້າພະເຈົ້າຊື້ເພື່ອເປັນທີ່ຢູ່ອາໄສ.

ສ່ວນຂໍ້ມູນຫຼັກຖານຕ່າງໆ ໄດ້ປະກອບໃສ່ບັນຊີເອກະສານຕາມແບບພິມຂອງສານທີ່ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຂ້າພະເຈົ້າ ຈຶ່ງຂຽນຄຳແກ້ຟ້ອງສະບັບນີ້ ມາຍັງທ່ານປະທານສານ ພ້ອມຄະນະ ແລະ ຜູ້ພິພາກສາ ຊ່ວຍພິຈາລະນາຕັດສິນໃຫ້ຂ້າພະເຈົ້າຕາມກົດໝາຍດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ທີ່ ວຽງຈັນ, ວັນທີ 30 ພະຈິກ 2012

ຄຳເຫັນ ແລະ ຢັ້ງຢືນຈາກນາຍບ້ານ ວຽງໄຊ

ເຊັນ ແລະ ປະທັບຕາ




ໄຊສົງຄາມ ສຸກລີໄຊ

ຜູ້ແກ້ຟ້ອງ

(ເຊັນ ແລະ ແປະໂປ້ມືຂວາ ພ້ອມທັງຂຽນຊື່ແຈ້ງ)



ທອງດຳ ປະກາຍແສງ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄຳແກ້ຟ້ອງ (ສຳລັບການຝຶກອົບຮົມ)

ຮຽນ: ...........................................................................

ຂ້າພະເຈົ້າ ທ້າວ/ນາງ ..................ອາຍຸ........ ປີ, ສັນຊາດ.... , ອາຊີບ..........ເຮືອນເລກທີ........, ໜ່ວຍ........., ບ້ານ.........., ເມືອງ......., ແຂວງ..........., ເບີໂທລະສັບ ...................

ຂໍແກ້ຄຳຮ້ອງຟ້ອງ ທ້າວ/ນາງ ............................ສະບັບລົງວັນທີ.........ເດືອນ.........ປີ......., ຕາມຂາເຂົ້າຂອງສານປະຊາຊົນເລກທີ.......... /......., ລົງວັນທີ.......ເດືອນ......ປີ.......

ກ່ຽວເລື່ອງ: .....................................................

ດັ່ງມີລາຍລະອຽດລຸ່ມນີ້:

.......................................................................................................

.......................................................................................................

.......................................................................................................

ຂໍ້ສະເໜີຕໍ່ສານ ຫຼື ຊອກຫາວິທີແກ້ໄຂ ຂໍ້ສະເໜີຂອງໂຈດ:

.......................................................................................................

.......................................................................................................

.......................................................................................................

ສ່ວນຂໍ້ມູນຫຼັກຖານຕ່າງໆ ໄດ້ປະກອບໃສ່ບັນຊີເອກະສານຕາມແບບພິມຂອງສານທີ່ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຂ້າພະເຈົ້າ ຈຶ່ງຂຽນຄຳແກ້ຟ້ອງສະບັບນີ້ ມາຍັງທ່ານປະທານສານ ພ້ອມຄະນະ ແລະ ຜູ້ພິພາກສາ ຊ່ວຍພິຈາລະນາຕັດສິນໃຫ້ຂ້າພະເຈົ້າຕາມກົດໝາຍດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ທີ່........, ວັນທີ........ເດືອນ.......ປີ.....

ຄຳເຫັນ ແລະ ຢັ້ງຢືນຈາກນາຍບ້ານ..........

ເຊັນ ແລະ ປະທັບຕາ

ຜູ້ແກ້ຟ້ອງ

(ເຊັນ ແລະ ແປະໂປ້ມືຂວາ ພ້ອມທັງຂຽນຊື່ແຈ້ງ)

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ສັນຍາຊື້-ຂາຍ ທີ່ດິນ ແລະ ເຮືອນ

ລະຫວ່າງ

- ທ່ານ ທອງດຳ ປະກາຍແສງ, ອາຍຸ 48 ປີ, ປັດຈຸບັນຢູ່ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ (ຜູ້ຊື້);

- ທ່ານ ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ບ້ານ ວຽງແກ້ວ , ເມືອງ ວັງວຽງ, ແຂວງ ວຽງຈັນ (ຜູ້ຂາຍ).

ທັງສອງຝ່າຍໄດ້ຕົກລົງ ຊື້-ຂາຍ ທີ່ດິນ ແລະ ເຮືອນ ຕາມໃບຕາດິນເລກທີ **xxx,** ເລກລະຫັດ **xxxxxxx,** ທີ່ຕັ້ງຂອງດິນແມ່ນຢູ່ໜ່ວຍ xx, ບ້ານ ວຽງແກ້ວ, ມີເນື້ອທີ່ທັງໝົດ xxxx ຕາແມັດ, ແຜນທີ່ດິນເລກທີ xxx. ໂດຍໃບຕາດິນດັ່ງກ່າວອອກຊື່ ນາງ ແກ້ວສີໃສ ແສງຈັນເພັງ **(ເມຍຂອງທ້າວ ຄຳສີ ແສງຈັນເພັງ)** ຊຶ່ງໄດ້ມອບສິດໃຫ້ ນາງ ຄຳຫຼ້າ ຂາວດີ **ເປັນ**ຜູ້ຂາຍ.

ລາຄາຊື້-ຂາຍ ທີ່ດິນ ແລະ ເຮືອນ ດັ່ງກ່າວແມ່ນ 600.000 ໂດ**ລາ**ສະຫະລັດ ໂດຍຝ່າຍຊື້ຈະຊຳລະດັ່ງນີ້:

1. ເປັນເງິນສົດຈຳນວນ 300.000 ໂດລາສະຫະລັດ ຫຼັງຈາກການເຊັນສັນຍາ;
2. ເປັນເງິນສົດຈຳນວນ 200.000 ໂດລາສະຫະລັດ ກ່ອນການໂອນກຳມະສິດທີ່ດິນ;
3. ສ່ວນທີ່ຍັງຄ້າງ 100.000 ໂດລາສະຫະລັດ ແມ່ນຊຳລະພາຍໃນສອງເດືອນ.

ຄ່າໃຊ້ຈ່າຍໃນການໂອນກຳມະສິດທີ່ດິນ ແລະ ເຮືອນແມ່ນເປັນຄວາມຮັບຜິດຊອບຂອງຝ່າຍຂາຍ; ສ່ວນຄ່າເຊົ່າເຮືອນເລີ່ມແຕ່ວັນທີ 01 ທັນວາ 2011 ເປັນຕົ້ນໄປ ແມ່ນມອບໃຫ້ຜູ້ຊື້ເປັນຜູ້ຮັບ.

ດັ່ງນັ້ນ, ຈຶ່ງໄດ້ເຮັດສັນຍາສະບັບນີ້ໄວ້ ເພື່ອເປັນຫຼັກຖານ.

ທີ່ ວຽງຈັນ, ວັນທີ 23 ພະຈິກ 2011

| ຜູ້ຊື້ | ພະຍານ | ຜູ້ຂາຍ |
|---|---|---|
| | 1. ນາງ ຕາດຳ ຟ້າໃສ | |
| ທອງດຳ ປະກາຍແສງ | 2. ນາງ ສົມໂຊກ ລ້ຳລວຍ | ຄຳຫຼ້າ ຂາວດີ |
| | 3. ນາງ ແອນນິຕ້າ ສຸວັນເພັງ | |

ນາຍບ້ານວຽງແກ້ວ

ຕາປະທັບ
ນາຍບ້ານ

ໝັ້ນ ຍືນຍົງ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄຳແກ້ຟ້ອງ

ຮຽນ: ທ່ານປະທານສານປະຊາຊົນ ເຂດ II ແຂວງ ວຽງຈັນ

ຂ້າພະເຈົ້າ ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ອາຊີບ ນັກທຸລະກິດ, ສັນຊາດ ລາວ, ປັດຈຸບັນຢູ່ ໜ່ວຍ **xxx,** ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ, ເບີໂທລະສັບ **xxxxxxxx.**

ຂໍແກ້ຄຳຮ້ອງຟ້ອງ ~~ທ້າວ~~/ນາງ ແຟນຕ້າ ລູຊີ ສະບັບລົງວັນທີ 15 ພະຈິກ 2012 ຕາມຂາເຂົ້າຂອງສານປະຊາຊົນເລກທີ xx/ຂຕ.ພ, ລົງວັນທີ 16 ພະຈິກ 2012.

ກ່ຽວເລື່ອງ: ທວງເອົາເງິນຄ່າເຊົ່າເຮືອນຄືນ

<u>ດັ່ງມີລາຍລະອຽດລຸ່ມນີ້:</u>

ເຮືອນຫຼັງດັ່ງກ່າວແມ່ນເຮືອນຂອງ ທ້າວ ຄຳສີ ແສງຈັນເພັງ ລູງຂ້າພະເຈົ້າ ໄດ້ໃຫ້ບໍລິສັດກໍ່ສ້າງສາກົນຈຳກັດ ເຊົ່າໃນປີ 2009 ຕາມສັນຍາສະບັບລົງວັນທີ 23 ຕຸລາ 2009 ຊຶ່ງມີຜົນສັກສິດນັບແຕ່ວັນທີ 01 ມັງກອນ 2010 ຫາ 31 ທັນວາ 2011 ໄດ້ຖືກປະຕິບັດຢ່າງຄົບຖ້ວນ ແລະ ສິ້ນສຸດແລ້ວ, ແຕ່ທາງບໍລິສັດຕ້ອງການເຊົ່າຕໍ່ ຈຶ່ງແຕ່ງຕັ້ງພະນັກງານມາພົວພັນ ແລະ ສະເໜີເຊົ່າອີກ ຊຶ່ງຂ້າພະເຈົ້າກໍໄດ້ບອກຜູ້ ກ່ຽວໄປແລ້ວວ່າບໍ່ໃຫ້ເຊົ່າຕໍ່ ເພາະວ່າ ທີ່ດິນ ແລະ ເຮືອນດັ່ງກ່າວໄດ້ຂາຍໃຫ້ ທ້າວ ທອງດຳ ປະກາຍແສງ ໄປແລ້ວແຕ່ວັນທີ 23 ພະຈິກ 2011 ແຕ່ຜູ້ກ່ຽວບອກວ່າ ທາງບໍລິສັດຍັງຕ້ອງການເຊົ່າຕໍ່ຢູ່ ເພາະມີຄວາມຈຳເປັນ ແລະ ບໍ່ຕ້ອງການໂຍກຍ້າຍໄປບ່ອນອື່ນໃນເວລານີ້ ພໍດີກັບ ທ້າວ ທອງດຳ ປະກາຍແສງ ໄດ້ຊື້ທີ່ດິນ ແລະ ເຮືອນ ດັ່ງກ່າວແລ້ວ ແຕ່ຍັງບໍ່ທັນໄດ້ຊຳລະ ແລະ ໂອນກຳມະສິດເທື່ອ ແລະ ໃນເວລານັ້ນ ທ້າວ ຄຳສີ ແສງຈັນເພັງ ກໍຢູ່ຕ່າງປະເທດຈຶ່ງໄດ້ມອບໃຫ້ຂ້າພະເຈົ້າໃນຖານະເປັນຫຼານ ເປັນຜູ້ປຶກສາຫາລືໂດຍກົງກັບ ທ່ານ ທອງດຳ ປະກາຍແສງ ກ່ຽວກັບການຂໍເຊົ່າຕໍ່ຂອງບໍລິສັດດັ່ງກ່າວ. ຜ່ານການປຶກສາຫາລື ທ່ານ ທອງດຳ ປະກາຍແສງ ໄດ້ຕອບວ່າ ໃນເມື່ອຕົນຍັງບໍ່ທັນໄດ້ຊຳລະເງິນຄ່າທີ່ດິນ ແລະ ເຮືອນ ຢ່າງຄົບຖ້ວນ ແລະ ກໍຍັງບໍ່ທັນໄດ້ມີການໂອນກຳມະສິດເທື່ອນັ້ນຜູ້ກ່ຽວແມ່ນເຫັນດີໃຫ້ບໍລິສັດເຊົ່າຕໍ່ ໂດຍມອບໃຫ້ຂ້າພະເຈົ້າເປັນຜູ້ເຈລະຈາ ພ້ອມທັງເຮັດສັນຍາເຊົ່າກັບບໍລິສັດ.

ທ້າວ ທອງດຳ ປະກາຍແສງ ໄດ້ຕົກລົງກັບຂ້າພະເຈົ້າວ່າ ຖ້າມື້ໃດຕົນໄດ້ຈ່າຍເງິນຄ່າທີ່ດິນ ແລະ ເຮືອນຄົບຖ້ວນ ແລະ ໄດ້ໂອນກຳມະສິດ ມາເປັນຂອງຕົນຢ່າງຖືກຕ້ອງຕາມກົດໝາຍແລ້ວ ຄ່າເຊົ່າເຮືອນທີ່ບໍລິສັດໄດ້ຈ່າຍລ່ວງໜ້າກ່ອນໜຶ່ງປີໃຫ້ຂ້າພະເຈົ້າໄປແລ້ວນັ້ນຕ້ອງໄດ້ມອບໃຫ້ທ້າວ

Copyright by JICA

ທອງດຳ ປະກາຍແສງ ທັງໝົດ, ແຕ່ຂ້າພະເຈົ້າຫັກໄວ້ຈຳນວນ 4.000 ໂດລາສະຫະລັດ ເປັນຄ່າໃຊ້ຈ່າຍໃນການເຮັດເອກະສານໂອນກຳມະສິດທີ່ດິນ ແລະ ເຮືອນ ຊຶ່ງການຕົກລົງຄັ້ງນັ້ນແມ່ນຕົກລົງທາງປາກເປົ່າ. ສະນັ້ນ, ຂ້າພະເຈົ້າຈຶ່ງໄດ້ຕົກລົງເຮັດສັນຍາເຊົ່າກັບບໍລິສັດ ສະບັບລົງວັນທີ 7 ທັນວາ 2011 ແລະ ຜູ້ເຊົ່າກໍໄດ້ຈ່າຍເງິນລ່ວງໜ້າ ແລ້ວໜຶ່ງປີ. ຫຼັງຈາກນັ້ນ ທ້າວ ທອງດຳ ປະກາຍແສງ ໄດ້ມາຊຳລະຄ່າທີ່ດິນ ແລະ ເຮືອນ ຄົບຖ້ວນ ແລະ ກໍໄດ້ໂອນກຳມະສິດນຳໃຊ້ທີ່ດິນ ແລະ ເຮືອນ ເປັນຊື່ ທ້າວ ທອງດຳ ປະກາຍແສງ ເປັນທີ່ຮຽບຮ້ອຍແລ້ວ ຂ້າພະເຈົ້າກໍໄດ້ມອບເງິນຄ່າເຊົ່າທີ່ຜູ້ເຊົ່າຈ່າຍລ່ວງໜ້ານັ້ນໃຫ້ຜູ້ກ່ຽວທັງໝົດຕາມການຕົກລົງກັນ.

ຕໍ່ກັບການຂາຍກຳມະສິດທີ່ດິນ ແລະ ເຮືອນ ແມ່ນສອດຄ່ອງກັບ ມາດຕາ 57 ຂອງກົດໝາຍວ່າດ້ວຍທີ່ດິນ ປີ 2003 ແລະ ມາດຕາ 20 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 88/ນຍ, ລົງວັນທີ 03 ມິຖຸນາ 2008 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ແລະ ເງື່ອນໄຂຂອງສັນຍາເຊົ່າເຮືອນທີ່ຂ້າພະເຈົ້າເຊັນກັບຜູ້ເຊົ່ານັ້ນ ແມ່ນຖືກຕ້ອງ ແລະ ສອດຄ່ອງກັບ ມາດຕາ 10, 11, 12,13,14,15 ແລະ 16 ຂອງກົດໝາຍວ່າດ້ວຍຂໍ້ຜູ້ພັນໃນສັນຍາ ແລະ ນອກສັນຍາ ປີ 2008 ແລະສັນຍາສະບັບນີ້ກໍບໍ່ເປັນໂມຄະເພາະບໍ່ໄດ້ເຮັດຂຶ້ນດ້ວຍການຕົວະຍົວະຫຼອກລວງຕາມການກ່າວອ້າງຂອງທະນາຍຄວາມຂອງໂຈດ ແຕ່ຢ່າງໃດ ແລະ ຂ້າພະເຈົ້າກໍໄດ້ບອກພະນັກງານຂອງບໍລິສັດໃຫ້ຮູ້ລ່ວງໜ້າກ່ອນແລ້ວວ່າ ທີ່ດິນ ແລະ ເຮືອນດັ່ງກ່າວນັ້ນໄດ້ຂາຍໃຫ້ ທ້າວ ທອງດຳ ປະກາຍແສງ ໄປແລ້ວແຕ່ຜູ້ກ່ຽວຍັງບໍ່ທັນຊຳລະເງິນຄົບຖ້ວນ ຈຶ່ງຍັງບໍ່ທັນໄດ້ໂອນກຳມະສິດເທື່ອ ແລະ ທ່ານ ທອງດຳ ປະກາຍແສງ ເຈົ້າຂອງເຮືອນຜູ້ໃໝ່ກໍເຫັນດີ ແລະ ໄດ້ມອບໃຫ້ຂ້າພະເຈົ້າເຮັດສັນຍາເຊົ່າເຮືອນກັບຜູ້ເຊົ່າ ແລະກໍໄດ້ປະຕິບັດຕາມການຕົກລົງຂອງທ່ານ ທອງດຳ ປະກາຍແສງ ຄືໄດ້ມອບເງິນຄ່າເຊົ່າເຮືອນໃຫ້ຜູ້ກ່ຽວເປັນທີ່ຮຽບຮ້ອຍແລ້ວ ຊຶ່ງມັນບໍ່ຂັດກັບ ມາດຕາ 60, 61 ແລະ 63 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ຕາມການກ່າວອ້າງຂອງທະນາຍຄວາມໂຈດແຕ່ຢ່າງໃດ.

1. ກ່ຽວກັບການປະຕິບັດສັນຍາເຊົ່າ

ຫຼັງຈາກທັງສອງຝ່າຍໄດ້ເຊັນສັນຍາເຊົ່ານຳກັນແລ້ວກໍໄດ້ປະຕິບັດຕາມສັນຍາທີ່ຕົກລົງກັນດັ່ງ ນີ້:

- ກ່ອນເຊັນສັນຍາເຊົ່າ ຂ້າພະເຈົ້າໄດ້ບອກໃຫ້ພະນັກງານຂອງບໍລິສັດຮູ້ລ່ວງໜ້າກ່ອນແລ້ວວ່າ ທີ່ດິນ ແລະ ເຮືອນດັ່ງກ່າວນັ້ນ ລຸງຂ້າພະເຈົ້າໄດ້ຂາຍໃຫ້ ທ້າວ ທອງດຳ ປະກາຍແສງ ແລ້ວ ແຕ່ຜູ້ເຊົ່າກໍຍັງຕ້ອງການເຊົ່າຕໍ່ ໂດຍເຈົ້າຂອງເຮືອນຜູ້ໃໝ່ກໍຮັບຮູ້ ແລະ ເຫັນດີ ຕາມເງື່ອນໄຂ ແລະເຫດຜົນທີ່ກ່າວອ້າງຂ້າງເທິງ. ສະນັ້ນ, ສັນຍາທີ່ເຮັດຂຶ້ນກັບຜູ້ເຊົ່າແມ່ນເຮັດດ້ວຍຄວາມບໍລິສຸດໃຈ, ບໍ່ໄດ້ເຮັດຂຶ້ນດ້ວຍຄວາມຕົວະຍົວະຫຼອກລວງແຕ່ຢ່າງໃດ;

- ຫຼັງຈາກເຊັນສັນຍາແລ້ວ ຜູ້ເຊົ່າກໍໄດ້ຈ່າຍເງິນຄ່າເຊົ່າລ່ວງໜ້າໜຶ່ງປີ ຕາມທີ່ໄດ້ຕົກລົງກັນໃນສັນຍາ;

- ຫຼັງຈາກ ທ້າວ ທອງດຳ ປະກາຍແສງ ໄດ້ຊຳລະເງິນຄ່າເຊົ່າທີ່ດິນ ແລະ ເຮືອນຄົບຖ້ວນແລ້ວ ທ້າວ ຄຳສີ ແສງຈັນເພັງ ກໍໂອນສິດນຳໃຊ້ທີ່ດິນ ແລະ ກຳມະສິດກ່ຽວກັບເຮືອນໃຫ້ຜູ້ຊື້ຕາມກົດໝາຍ ແລະ ຂ້າພະເຈົ້າໃນນາມຜູ້ຕາງໜ້າເຈົ້າຂອງທີ່ດິນ ແລະ ເຮືອນດັ່ງກ່າວກໍໄດ້ມອບເງິນຄ່າເຊົ່າເຮືອນໃຫ້ເຈົ້າຂອງຜູ້

Copyright by JICA

ໃໝ່ທັງໝົດ ຊຶ່ງຜູ້ກ່ຽວກໍຮັບຮູ້ເງື່ອນໄຂທຸກຢ່າງຂອງສັນຍາເຊົ່າເຮືອນທີ່ໄດ້ເຊັນກັນ;

- ການຊື້-ຂາຍ ແລະ ການເຮັດສັນຍາເຊົ່າເຮືອນແມ່ນເຮັດຂຶ້ນດ້ວຍຄວາມບໍລິສຸດໃຈ, ຖືກຕ້ອງຕາມກົດໝາຍ ແລະ ບໍ່ມີການຕົວະຍົວະຫຼອກລວງແຕ່ຢ່າງໃດ;

- ການທີ່ ທ້າວ ທອງດຳ ປະກາຍແສງ ໄດ້ສະເໜີ ແລະ ແຈ້ງຂໍຍົກເລີກສັນຍາກ່ອນກຳນົດໜຶ່ງປີຖືວ່າແມ່ນສິດຂອງຄູ່ສັນຍາ ແລະ ການສະເໜີຍົກເລີກນັ້ນກໍບໍ່ໄດ້ສ້າງຄວາມເສຍຫາຍຫຍັງແກ່ຜູ້ເຊົ່າເພາະຜູ້ເຊົ່າຍັງບໍ່ທັນໄດ້ຈ່າຍເງິນລ່ວງໜ້າເທື່ອ ແລະ ບໍ່ໄດ້ຈ່າຍຫຍັງໃນການສ້ອມແປງເຮືອນ, ແຕ່ໃນຄວາມເປັນຈິງແລ້ວ ແມ່ນຜູ້ເຊົ່າເອງຂໍຍົກເລີກສັນຍາກ່ອນກຳນົດ ໂດຍສວຍໂອກາດທີ່ເຈົ້າຂອງເຮືອນຜູ້ໃໝ່ຂໍຍົກເລີກສັນຍາໃນປີສຸດທ້າຍທີ່ຍັງເຫຼືອ ໂດຍອ້າງເຫດຜົນວ່າ ຂ້າພະເຈົ້າໄດ້ເຮັດສັນຍາດ້ວຍການຕົວະຍົວະຫຼອກລວງ ແລະ ລະເມີດສັນຍາເຊົ່າ ແມ່ນເພື່ອສວຍໂອກາດທວງເອົາເງິນທີ່ຜູ້ເຊົ່າຈ່າຍລ່ວງໜ້ານັ້ນຄືນທັງໝົດຊຶ່ງມັນຂັດກັບມາດຕາ 61 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ;

- ການກ່າວອ້າງວ່າ ການຂາຍທີ່ດິນ ແລະ ເຮືອນຂອງຂ້າພະເຈົ້າແມ່ນໄດ້ເຮັດຂຶ້ນໂດຍບໍ່ໄດ້ແຈ້ງ ໃຫ້ຜູ້ເຊົ່າຊາບກ່ອນລ່ວງໜ້າ ເປັນການລະເມີດກົດໝາຍ ແລະ ສັນຍານັ້ນ ຂ້າພະເຈົ້າເຫັນວ່າເປັນການກ່າວອ້າງຂັດຄວາມຈິງ ແລະ ຂັດກັບມາດຕາ 63 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ;

**2.** ຕໍ່ການສະເໜີຂອງທະນາຍຄວາມໂຈດ ທີ່ສະເໜີໃຫ້ສານຕັດສິນນັ້ນ ຂ້າພະເຈົ້າເຫັນວ່າ:

- ການສະເໜີໃຫ້ສານຕັດສິນວ່າ ການເຮັດສັນຍາເຊົ່າແມ່ນເຮັດຂຶ້ນໂດຍການຕົວະຍົວະຫຼອກລວງ ແລະ ຂ້າພະເຈົ້າເປັນຜູ້ລະເມີດສັນຍາເຊົ່ານັ້ນ ເຫັນວ່າບໍ່ມີເຫດຜົນ ເນື່ອງຈາກວ່າ ເຈົ້າຂອງເຮືອນຜູ້ເກົ່າ ແລະ ຜູ້ໃໝ່ແມ່ນມີການຕົກລົງ ແລະ ຍັງຄົງຮັບຮູ້ນຳກັນ ກ່ຽວກັບການເຊົ່າເຮືອນຂອງບໍລິສັດກໍ່ສ້າງສາກົນຈຳກັດ ແລະ ການຍົກເລີກສັນຍານັ້ນ ແມ່ນຜູ້ເຊົ່າເອງເປັນຜູ້ຂໍຍົກເລີກກ່ອນກຳນົດເວລາທີ່ຍັງເຫຼືອ ໝາຍວ່າແມ່ນຜູ້ເຊົ່າເອງບໍ່ມີຄວາມຈິງໃຈໃນການປະຕິບັດສັນຍາ. ສະນັ້ນ, ຂ້າພະເຈົ້າສະເໜີໃຫ້ສານພິຈາ

ລະນາຢ່າງຮອບດ້ານ ແລະ ພາວະວິໄສ ໃນການຕັດສິນ;

- ການສະເໜີໃຫ້ສານຕັດສິນໃຫ້ຂ້າພະເຈົ້າສົ່ງເງິນຄ່າເຊົ່າເຮືອນຈຳນວນ 24.000 ໂດລາສະຫະລັດ ພ້ອມດ້ວຍດອກເບ້ຍ 12% ຕໍ່ປີ ແລະ ຄ່າປ່ວຍ**ການ**ຊັບ 3% ຄືນໃຫ້ແກ່ຜູ້ເຊົ່າ ໂດຍໃຫ້ອີງໃສ່ມາດຕາ 23 ຂໍ້ 2 ແລະ ມາດຕາ 61 ຂອງກົດໝາຍວ່າດ້ວຍຂໍ້ຜູ້ພັນໃນສັນຍາ ແລະ ນອກສັນຍານັ້ນ ເຫັນວ່າເປັນການກ່າວອ້າງທີ່ບໍ່ຖືກຕ້ອງຕາມກົດໝາຍມາດຕາດັ່ງກ່າວ ເພາະສັນຍາເຊົ່າແມ່ນເຮັດຂຶ້ນດ້ວຍຄວາມສະໝັກໃຈ ແລະ ບໍ່ມີການຕົວະຍົວະຫຼອກລວງແຕ່ຢ່າງໃດ. ດ້ວຍເຫດ ແລະ ຜົນທີ່ກ່າວມາຂ້າງເທິງນັ້ນ ແລະ ຕາມການສັງລວມເນື້ອໃນຈິດໃຈຂອງມາດຕາ 61 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາແລ້ວ ບໍ່ວ່າຈະແມ່ນຜູ້ເຊົ່າ ຫຼື ຜູ້ໃຫ້ເຊົ່າໄດ້ຍົກເລີກສັນຍາກ່ອນກຳນົດເວລາ ໃນກໍລະນີຜູ້ເຊົ່າໄດ້ຈ່າຍລ່ວງໜ້າໄປແລ້ວ ຜູ້ໃຫ້ເຊົ່າຕ້ອງສົ່ງເງິນສ່ວນທີ່ຍັງເຫຼືອນັ້ນຄືນໃຫ້ຜູ້ເຊົ່າໝາຍວ່າຕ້ອງສົ່ງເງິນຕາມຈຳນວນເດືອນທີ່ຍັງເຫຼືອ ທີ່ໄດ້ຈ່າຍໄປແລ້ວເທົ່ານັ້ນ, ແຕ່ເປັນຫຍັງຜູ້ເຊົ່າທີ່ເປັນຜູ້ຍົກເລີກສັນຍາກ່ອນກຳນົດ ຈຶ່ງສະເໜີໃຫ້ສານຕັດສິນ ໃຫ້ຂ້າພະເຈົ້າສົ່ງເງິນຄືນທັງໝົດພ້ອມດ້ວຍດອກເບ້ຍ 12% ແລະ ຄ່າປ່ວຍການ**ຊັບ** 3% ທັງໆທີ່ບໍ່ແມ່ນການກູ້ຢືມເງິນແຕ່ຢ່າງໃດ ແລະ ໜຶ່ງປີສຸດ

Copyright by JICA

ທ້າຍທີ່ຍັງເຫຼືອກໍບໍ່ໄດ້ສ້າງຄວາມເສຍຫາຍໃດໆໃຫ້ແກ່ຜູ້ເຊົ່າ ເພາະວ່າຜູ້ເຊົ່າຍັງບໍ່ທັນຈ່າຍລ່ວງໜ້າໃນປີສຸດທ້າຍ ແລະ ກໍບໍ່ໄດ້ຈ່າຍຫຍັງໃນການສ້ອມແປງເຮືອນ ແລະ ການສະເໜີຍົກເລີກກ່ອນກຳນົດເວລາໜຶ່ງປີສຸດທ້າຍແມ່ນສິດຂອງຜູ້ໃຫ້ເຊົ່າ ຫຼື ເຈົ້າຂອງທີ່ດິນ ແລະ ເຮືອນຕາມທີ່ກຳນົດໄວ້ໃນສັນຍາ ແລະ ມາດຕາ 60 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ. ສະຫຼຸບແລ້ວ ການສະເໜີດັ່ງກ່າວແມ່ນຂັດກັບຄວາມເປັນຈິງ ແລະ ຂັດກັບກົດໝາຍ ຈຶ່ງສະເໜີໃຫ້ສານພິຈາລະນາຕາມມາດຕາ 61 ຂອງກົດໝາຍວ່າດ້ວຍຂໍ້ຜູ້ພັນໃນສັນຍາ ແລະ ນອກສັນຍາ;

- ຕໍ່ການສະເໜີໃຫ້ສານອອກຄຳສັ່ງອາຍັດຊັບນັ້ນ ຂ້າພະເຈົ້າເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ ເພາະວ່າທີ່ດິນ ແລະ ເຮືອນ ແມ່ນໄດ້ມາຖືກຕ້ອງຕາມກົດໝາຍ ແລະ ພວກຂ້າພະເຈົ້າກໍບໍ່ໄດ້ລະເມີດສັນຍາ ແລະ ກົດໝາຍແຕ່ຢ່າງໃດ ຈຶ່ງສະເໜີໃຫ້ສານພິຈາລະນາຢ່າງຮອບດ້ານ ແລະ ພາວະວິໄສ.

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງຂຽນຄຳກ້ຟ້ອງສະບັບນີ້ມາຍັງທ່ານປະທານສານພ້ອມຄະນະຊ່ວຍພິຈາລະ ນາໃຫ້ຂ້າພະເຈົ້າຕາມກົດໝາຍດ້ວຍ.

ແຂວງວຽງຈັນ, ລົງວັນທີ 6 ທັນວາ 2012

ເຊັນ ແລະ ປະທັບຕາ ນາຍບ້ານວຽງແກ້ວ




ໝັ້ນ ຍືນຍົງ

ຜູ້ແກ້ຟ້ອງເຊັນ ແລະ ແປະໂປ້

ຄຳຫຼ້າ ຂາວດີ



Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ

ສານປະຊາຊົນເຂດ II

# ບົດບັນທຶກຄຳໃຫ້ການ

ຄັ້ງທີ I

ອີງຕາມມາດຕາ 108 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012;

ໃນວັນທີ 07 ມັງກອນ 2013, ເວລາ 10:30, ຢູ່ທີ່ສານປະຊາຊົນເຂດ II ແຂວງວຽງຈັນ;

ຕໍ່ໜ້າຂ້າພະເຈົ້າ ນາງ ຈັນເພັງ ສະຫວ່າງ, ໜ້າທີ່ຕຳແໜ່ງ ຜູ້ພິພາກສາ (ຜູ້ສອບ-ຖາມ) ແລະ ນາງ ດອກໄມ້ ຈັນມະນີ, ໜ້າທີ່ຕຳແໜ່ງ ຈ່າສານ (ຜູ້ບັນທຶກ);

ໄດ້ເອົາຄຳໃຫ້ການ ທ້າວ/~~ນາງ~~ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ອາຊີບ ທະນາຍຄວາມ, ສັນຊາດ ລາວ, ຊົນເຜົ່າ ລາວ, ປັດຈຸບັນຢູ່ບ້ານ ນາຊູ , ໜ່ວຍ xx, ເມືອງ ໂພນໂຮງ, ແຂວງ ວຽງຈັນ ໃນຖານະເປັນທະນາຍຄວາມໂຈດ, ກ່ຽວກັບຄະດີເລກທີ xx/ຂຕ.ພ, ລົງວັນທີ 11 ທັນວາ 2012.

## ລະຫວ່າງ

ບໍລິສັດກໍ່ສ້າງສາກົນຈຳກັດ.............................................................................. ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ...............................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ.......................................... ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ....................................ຈຳເລີຍທີ 2

**ກ່ຽວເລື່ອງ**: ທວງເອົາເງິນຄ່າເຊົ່າເຮືອນຄືນ

ຊຶ່ງຄຳໃຫ້ການມີເນື້ອໃນລະອຽດ ດັ່ງນີ້ :

ໃນປີ 2010 ບໍລິສັດກໍ່ສ້າງສາກົນຈຳກັດ ໄດ້ເຊົ່າເຮືອນຂອງ ທ້າວ ຄຳສີ ແສງຈັນເພັງ ໂດຍໄດ້ເຮັດສັນຍາເຊົ່າກັບ ນາງ ຄຳຫຼ້າ ຂາວດີ ຊຶ່ງແມ່ນຫຼານສາວຂອງ ທ້າວ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນ, ພາຍຫຼັງສັນຍາເກົ່າໝົດກຳນົດແລ້ວ ນາງ ຄຳຫຼ້າ ຂາວດີ ໄດ້ມາເຮັດສັນຍາໃໝ່ ສະບັບລົງວັນທີ 07

Copyright by JICA

ທັນວາ 2011, ຄ່າເຊົ່າເດືອນລະ 2.000 ໂດລາສະຫະລັດ ຕົກເປັນປີລະ 24.000 ໂດລາສະຫະລັດ, ສ່ວນເງິນຄ່າເຊົ່າແມ່ນ ບໍລິສັດກໍ່ສ້າງສາກົນຈຳກັດ ໄດ້ຈ່າຍໄປແລ້ວຈຳນວນ 24.000 ໂດລາສະຫະລັດ;

**ຖ/ຕ** : ມາໃນວັນທີ 13 ພະຈິກ 2012 ໄດ້ມີ ທ້າວ ທອງດຳ ປະກາຍແສງ ມາແຈ້ງຕໍ່ບໍລິສັດ ວ່າຜູ້ກ່ຽວເປັນເຈົ້າຂອງເຮືອນ ແລະ ບໍ່ໃຫ້ບໍລິສັດເຊົ່າຕໍ່ ຊຶ່ງຜູ້ກ່ຽວອ້າງວ່າໄດ້ຊື້ເຮືອນດັ່ງກ່າວນຳ ທ້າວ ຄຳສີ ແສງຈັນເພັງ ຜູ້ເປັນເຈົ້າຂອງເຮືອນແຕ່ວັນທີ 23 ພະຈິກ 2011.

**ຖ/ຕ :** ຕໍ່ມາວັນທີ 04 ມິຖຸນາ 2012 ບໍລິສັດ ໄດ້ແຈ້ງໃຫ້ ນາງ ຄຳຫຼ້າ ຂາວດີ ວ່າ ຈະຍ້າຍອອກ ຍ້ອນບໍລິສັດບໍ່ໄດ້ຢູ່ຄົບຕາມສັນຍາ ເພາະວ່າ ສັນຍາທີ່ ນາງ ຄຳຫຼ້າ ຂາວດີ ເຮັດຂຶ້ນນັ້ນເປັນສັນຍາຕົວະຍົວະຫຼອກລວງ, ຈາກນັ້ນຈຶ່ງທວງເອົາເງິນທີ່ໄດ້ຈ່າຍເປັນຄ່າເຊົ່າລ່ວງໜ້າໄປແລ້ວ ຈຳນວນ 24.000 ໂດລາສະຫະລັດນັ້ນຄືນ ແຕ່ຖືກ ນາງ ຄຳຫຼ້າ ຂາວດີ ປະຕິເສດວ່າ ເງິນຈຳນວນດັ່ງກ່າວຜູ້ກ່ຽວໄດ້ມອບໃຫ້ ທ້າວ ທອງດຳ ປະກາຍແສງ, ຖ້າຢາກໄດ້ໃຫ້ໄປທວງເອົານຳຜູ້ກ່ຽວ.

**ຖ/ຕ:** ໃນວັນທີ 1 ກໍລະກົດ 2012 ບໍລິສັດໄດ້ຍ້າຍອອກຈາກເຮືອນດັ່ງກ່າວ.

**ຖ/ຕ:** ໄລຍະຜ່ານມາໂຈດໄດ້ສະເໜີຂໍໄກ່ເກ່ຍກັບ ນາງ ຄຳຫຼ້າ ຂາວດີ ຢູ່ຂັ້ນບ້ານ ແຕ່ຖືກຜູ້ກ່ຽວປະຕິເສດ ແລະ ບໍລິສັດໄດ້ແຕ່ງຕັ້ງໃຫ້ທະນາຍຄວາມໄປໂອ້ລົມກັບຜູ້ກ່ຽວຢູ່ເຮືອນແຕ່ຖືກຜູ້ກ່ຽວປະຕິເສດອີກ. ດັ່ງນັ້ນ, ບໍ່ມີທາງເລືອກອື່ນ ບໍລິສັດຈຶ່ງຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາຕາມລະບຽບກົດໝາຍ.

**ພາກສະເໜີ :** ຍັງຢືນຕາມຄຳຮ້ອງຟ້ອງຄືເກົ່າ, ນອກຈາກວ່າ ທ້າວ ທອງດຳ ປະກາຍແສງ ບໍ່ໄດ້ມອບສິດ ແລະ ບໍ່ມີສ່ວນຮູ້ເຫັນກັບນາງ ຄຳຫຼ້າ ຂາວດີ ແມ່ນຈະຮ້ອງຟ້ອງແຕ່ ນາງ ຄຳຫຼ້າ ຂາວດີ ຜູ້ດຽວ.

ສິ້ນສຸດຄຳໃຫ້ການໃນເວລາ 11:30, ໄດ້ອ່ານຄຳໃຫ້ການ ຫຼື ໄດ້ຮັບຟັງຄຳໃຫ້ການແລ້ວ ເຫັນວ່າຖືກຕ້ອງຕາມທີ່ໄດ້ໃຫ້ການທຸກຢ່າງໂດຍບໍ່ມີການບັງຄັບ ແລະ ຂົ່ມຂູ່ແຕ່ປະການໃດ.

ດັ່ງນັ້ນ, ຈຶ່ງໄດ້ລົງລາຍເຊັນໄວ້ເປັນຫຼັກຖານ.

ເຊັນ ແລະ ຮັບຮູ້ຈາກຜູ້ໃຫ້ການ

ບຸນທັນ ຊະນະໃຈ 

ຈ່າສານ




ດອກໄມ້ ຈັນມະນີ

ຜູ້ພິພາກສາ

ຈັນເພັງ ສະຫວ່າງ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ
ສານປະຊາຊົນເຂດ II ເລກທີ xxx/ສປຊ
ຄະນະສານແພ່ງ ລົງວັນທີ 15 ມັງກອນ 2013
ໂທລະສັບ: xxxxxxx

**ໝາຍຮຽກຈຳເລີຍ**
**ຄັ້ງທີ I**

- ອີງຕາມ ມາດຕາ 2 ຂອງກົດໝາຍວ່າດ້ວຍສານປະຊາຊົນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2009;
- ອີງຕາມ ມາດຕາ 142, 143, 144 ແລະ 145 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012;
- ອີງຕາມ ສຳນວນຄະດີ ແພ່ງ ເລກທີ xxx /ຂຕ.ພ, ລົງວັນທີ 11 ທັນວາ 2012.

**ລະຫວ່າງ**

ບໍລິສັດກໍ່ສ້າງສາກົນຈຳກັດ.............................................................................. ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ...............................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ.......................................... ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ....................................ຈຳເລີຍທີ 2.

**ກ່ຽວເລື່ອງ**: ທວງເອົາເງິນຄ່າເຊົ່າເຮືອນຄືນ

Copyright by JICA

ຈ່າສານ ແພ່ງ ສານປະຊາຊົນເຂດ II ແຂວງ ວຽງຈັນ ໄດ້ຮຽກຕົວ ~~ທ້າວ~~/ນາງ ຄຳຫຼ້າ ຂາວດີ , ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ເຮືອນເລກທີ **xxx**, ໜ່ວຍ **xxx**, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ ເຂົ້າມາສານໃນວັນທີ 21 ມັງກອນ 2013, ເວລາ 9:00, ຫ້ອງເບີ 1, ເພື່ອພົບ ນາງ ຈັນເພັງ ສະຫວ່າງ, ໜ້າທີ່ຕຳແໜ່ງ ຜູ້ພິພາກສາ, ຈຸດປະສົງ ເຂົ້າມາໃຫ້ການຕໍ່ສານ.

ໃນກໍລະນີຝ່າຍຈຳເລີຍ ຫາກໄດ້ໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍນັ້ນ, ອີງຕາມມາດຕາ 153 ວັກ 03 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ໄດ້ກຳນົດໄວ້ວ່າ ໃນກໍລະນີທີ່ຈຳເລີຍ ຫຼື ຜູ້ຕາງໜ້າ ຫຼື ບຸກຄົນທີສາມຝ່າຍຈຳເລີຍ ຫາກບໍ່ເຂົ້າມາສານຕາມໝາຍຮຽກເຖິງສາມຄັ້ງ ໂດຍບໍ່ມີເຫດຜົນພຽງພໍ ຫຼື ບໍ່ເຂົ້າມາສານຍ້ອນວ່າຜູ້ກ່ຽວຍ້າຍໜີຈາກບ່ອນຢູ່ເດີມໄປໂດຍບໍ່ແຈ້ງບ່ອນຢູ່ໃໝ່ ໃຫ້ອີງການປົກຄອງບ້ານຮູ້ນຳແລ້ວສານມີສິດອອກໝາຍພາຕົວ ຫຼື ຕັດສິນລັບຫຼັງຈຳເລີຍກໍໄດ້.

ຈ່າສານແພ່ງ

ຈ່າສານ

ດອກໄມ້ ຈັນມະນີ

ໝາຍເຫດ

ໃຫ້ຖືໝາຍຮຽກສະບັບນີ້ເຂົ້າມາພ້ອມ.

ວັນທີ 15 ມັງກອນ 2013

ລາຍເຊັນ, ແປະໂປ້ຜູ້ຮັບ ແລະ ຊຽນຊື່ແຈ້ງ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ

ສານປະຊາຊົນເຂດ II

# ບົດບັນທຶກຄຳໃຫ້ການ

ຄັ້ງທີ I

ອີງຕາມມາດຕາ 108 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງ ປີ 2012;

ໃນວັນທີ 30 ມັງກອນ 2013, ເວລາ 9:00, ຢູ່ທີ່ສານປະຊາຊົນເຂດ II ແຂວງວຽງຈັນ;

ຕໍ່ໜ້າຂ້າພະເຈົ້າ ນາງ ຈັນເພັງ ສະຫວ່າງ, ໜ້າທີ່ຕຳແໜ່ງ ຜູ້ພິພາກສາ (ຜູ້ສອບ-ຖາມ) ແລະ ນາງ ດອກໄມ້ ຈັນມະນີ, ໜ້າທີ່ຕຳແໜ່ງ ຈ່າສານ (ຜູ້ບັນທຶກ);

ໄດ້ເອົາຄຳໃຫ້ການ ທ້າວ/~~ນາງ~~ ທຸມແພງ ສັນຕິສຸກ, ອາຍຸ 53 ປີ, ອາຊີບ ພະນັກງານ, ສັນຊາດ ລາວ, ຊົນເຜົ່າ ລາວລຸ່ມ, ປັດຈຸບັນຢູ່ບ້ານ ແສນຊຸມ, ໜ່ວຍxxx, ເມືອງໂພນໂຮງ , ແຂວງວຽງຈັນ ໃນຖານະເປັນ ຜູ້ຕາງໜ້າຈຳເລີຍທີ 1, ກ່ຽວກັບຄະດີເລກທີ xxx/ຂຕ.ພ, ລົງວັນທີ 11 ທັນວາ 2012.

ລະຫວ່າງ

ບໍລິສັດກໍ່ສ້າງສາກົນຈຳກັດ.............................................................................. ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ...........................................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ...................................................... ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ........................................ຈຳເລີຍທີ 2.

**ກ່ຽວເລື່ອງ**: ທວງເອົາເງິນຄ່າເຊົ່າເຮືອນຄືນ

ຊຶ່ງຄຳໃຫ້ການມີເນື້ອໃນລະອຽດ ດັ່ງນີ້ :

ໃນປີ 2009 ນາງ ຄຳຫຼ້າ ຂາວດີ ໄດ້ເຮັດສັນຍາເຊົ່າເຮືອນຂອງ ທ້າວ ຄຳສີ ແສງຈັນເພັງ (ເຈົ້າຂອງເຮືອນ) ຊຶ່ງ ນາງ ຄຳຫຼ້າ ຂາວດີ ຕາງໜ້າໃຫ້ ທ້າວ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນ ໄດ້ເຊັນສັນຍາເຊົ່າກັບບໍລິສັດກໍ່ສ້າງສາກົນຈຳກັດ ສະບັບລົງວັນທີ 23 ຕຸລາ 2009, ໃນເມື່ອສັນຍາສະບັບດັ່ງກ່າວໄດ້ສິ້ນສຸດລົງແລ້ວ ນາງ ຄຳຫຼ້າ ຂາວດີ ກໍໄດ້ແຈ້ງໃຫ້ຫົວໜ້າບໍລິຫານຂອງບໍລິສັດ ຮູ້ວ່າ ບໍ່ໃຫ້

Copyright by JICA

ເຊົ່າຕໍ່, ຕ້ອງການທີ່ດິນ ແລະ ເຮືອນ ຄືນ ແຕ່ບໍລິສັດໄດ້ຂໍເຊົ່າຕໍ່ໂດຍອ້າງວ່າໄດ້ຕິດຕັ້ງເຄື່ອງຂອງຫຼາຍແລ້ວ, ຫຼັງຈາກນັ້ນຈຶ່ງມາເຮັດສັນຍາເຊົ່າໃໝ່ ຊຶ່ງໃນຊ່ວງໄລຍະເວລາເຮັດສັນຍາເຊົ່າໃໝ່ນັ້ນ ທ້າວ ຄຳສີ ແສງຈັນເພັງ ໄດ້ຕົກລົງຂາຍກຳມະສິດທີ່ດິນ ແລະ ເຮືອນ ໃຫ້ ທ້າວ ທອງດຳ ປະກາຍແສງ ແຕ່ບໍ່ທັນໄດ້ຮັບເງິນຄົບຕາມຈຳນວນ ແລະ ບໍ່ທັນໄດ້ໂອນກຳມະສິດທີ່ດິນໃຫ້ ທ້າວ ທອງດຳ ປະກາຍແສງເທື່ອ.

ຖ/ຕ : ເວລາຈະເຮັດສັນຍາເຊົ່າໃໝ່ ນາງ ຄຳຫຼ້າ ຂາວດີ ກໍໄດ້ປຶກສາກັບ ທ້າວ ທອງດຳ ປະກາຍແສງ ຊຶ່ງຜູ້ກ່ຽວກໍເອກະພາບ ແລະ ເຫັນດີໃຫ້ບໍລິສັດກໍ່ສ້າງສາກົນຈຳກັດເຊົ່າ, ສ່ວນຄ່າເຊົ່າເຮືອນແມ່ນເອົາມາໃຫ້ທ້າວ ທອງດຳ ປະກາຍແສງ, ຈາກນັ້ນ ນາງ ຄຳຫຼ້າ ຂາວດີ ຈຶ່ງໄດ້ເຊັນສັນຍາເຊົ່າໃໝ່ ແລະ ໄດ້ຮັບເງິນຄ່າເຊົ່າຈຳນວນໜຶ່ງປີ ເທົ່າກັບ 24.000 ໂດລາສະຫະລັດ, ຫຼັງຈາກນັ້ນ ໃນວັນທີ 8 ທັນວາ 2011 ນາງ ຄຳຫຼ້າ ຂາວດີ ໄດ້ເອົາເງິນຈຳນວນ 20.000 ໂດລາສະຫະລັດ ມອບໃຫ້ ທ້າວ ທອງດຳປະກາຍແສງ, ສ່ວນທີ່ເຫຼືອ 4.000 ໂດລາສະຫະລັດແມ່ນ ນາງ ຄຳຫຼ້າ ຂາວດີ ເອົາໄປແລ່ນເອກະສານໂອນທີ່ດິນ ແລະ ເຮືອນໃຫ້ເປັນກຳມະສິດຂອງ ທ້າວ ທອງດຳ ປະກາຍແສງ.

ຖ/ຕ : ພາຍຫຼັງເຊັນສັນຍາແລ້ວ ບໍລິສັດແມ່ນໄດ້ຢູ່ທົກເດືອນ, ຈາກນັ້ນ ທ້າວ ທອງດຳ ປະກາຍແສງ ໄດ້ໄປແຈ້ງໃຫ້ບໍລິສັດຮູ້ວ່າ ຜູ້ກ່ຽວເປັນເຈົ້າຂອງເຮືອນຜູ້ໃໝ່ ແລະ ອະນຸຍາດ ໃຫ້ບໍລິສັດຢູ່ຄົບໜຶ່ງປີຕາມຈຳນວນເງິນທີ່ຈ່າຍ, ເມື່ອເປັນແນວນັ້ນ ບໍລິສັດບໍ່ພໍໃຈ ຈຶ່ງໄດ້ແຈ້ງໃຫ້ ນາງ ຄຳຫຼ້າ ຂາວດີ ຮູ້ວ່າ ຈະຍ້າຍອອກພ້ອມຂໍເງິນຄືນຈຳນວນ 12.000 ໂດລາສະຫະລັດ;

ຖ/ຕ: ມາຮອດປັດຈຸບັນ ບໍລິສັດ ໄດ້ທວງເອົາເງິນຄ່າເຊົ່າຈາກ ນາງ ຄຳຫຼ້າ ຂາວດີ ແຕ່ຜູ້ກ່ຽວບໍ່ສາມາດສົ່ງຄືນໃຫ້ໄດ້ ເພາະເງິນຈຳນວນດັ່ງກ່າວ ຜູ້ກ່ຽວບໍ່ໄດ້ເອົາ ແລະ ກໍບໍ່ໄດ້ລະເມີດສັນຍາເຊົ່າ, ແມ່ນບໍລິສັດຍ້າຍອອກເອງ.



ພາກສະເໜີ : ກ່ຽວກັບບໍລິສັດອ້າງວ່າ ເຈົ້າຂອງເຮືອນຂາຍເຮືອນໂດຍບໍ່ແຈ້ງໃຫ້ຜູ້ເຊົ່າຮູ້ລ່ວງໜ້າ, ແຕ່ຄວາມຈິງແມ່ນໄດ້ແຈ້ງໃຫ້ຫົວໜ້າບໍລິຫານຂອງບໍລິສັດຮູ້ແລ້ວ, ນອກຈາກນັ້ນ ຕາມກົດໝາຍເຈົ້າຂອງເຮືອນ ກໍມີສິດຂາຍບົນພື້ນຖານເຈົ້າກຳມະສິດຜູ້ໃໝ່ຮັບຮູ້ກ່ຽວກັບການເຊົ່າດັ່ງກ່າວ, ຂໍ້ມູນຫຼັກຖານເອກະສານທີ່ຈະນຳມາສະເໜີຕໍ່ສານແມ່ນບໍ່ມີ, ສະເໜີໃຫ້ສານຕັດສິນຕາມລະບຽບກົດໝາຍ.

ສິ້ນສຸດການໃຫ້ການໃນເວລາ 10:00, ໄດ້ອ່ານຄຳໃຫ້ການ ຫຼື ໄດ້ຮັບຟັງຄຳໃຫ້ການແລ້ວ ເຫັນວ່າຖືກຕ້ອງຕາມທີ່ໄດ້ໃຫ້ການທຸກຢ່າງໂດຍບໍ່ມີການບັງຄັບ ແລະ ຂົ່ມຂູ່ແຕ່ປະການໃດ.

ດັ່ງນັ້ນ, ຈຶ່ງໄດ້ລົງລາຍເຊັນໄວ້ເປັນຫຼັກຖານ.

| ຜູ້ໃຫ້ການ | ຜູ້ສອບຖາມ | ບັນທຶກ |
|---|---|---|
| ທຸມແພງ ສັນຕິ  | ຈັນເພັງ ສະຫວ່າງ | ດອກໄມ້ ຈັນມະນີ |

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ

ສານປະຊາຊົນເຂດ II

# ບົດບັນທຶກຄຳໃຫ້ການ

ຄັ້ງທີ I

ອີງຕາມມາດຕາ 108 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012;

ໃນວັນທີ 31 ມັງກອນ 2013, ເວລາ 13:00, ຢູ່ທີ່ສານປະຊາຊົນເຂດ II ແຂວງວຽງຈັນ; ຕໍ່ໜ້າຂ້າພະເຈົ້າ ນາງ ຈັນເພັງ ສະຫວ່າງ, ໜ້າທີ່ຕຳແໜ່ງ ຜູ້ພິພາກສາຜູ້ (ສອບ-ຖາມ) ແລະ ນາງ ດອກໄມ້ ຈັນມະນີ, ໜ້າທີ່ຕຳແໜ່ງ ຈ່າສານ (ຜູ້ບັນທຶກ);

ໄດ້ເອົາຄຳໃຫ້ການ ທ້າວ/~~ນາງ~~ ທອງດຳ ປະກາຍແສງ, ອາຍຸ 48 ປີ, ອາຊີບ ນັກທຸລະກິດ, ສັນຊາດ ລາວ, ຊົນເຜົ່າ ລາວລຸ່ມ, ປັດຈຸບັນຢູ່ບ້ານ ວຽງໄຊ, ໜ່ວຍ xxx, ເມືອງ ວັງວຽງ, ແຂວງວຽງຈັນ ໃນຖານະເປັນ ຈຳເລີຍ, ກ່ຽວກັບຄະດີເລກທີ xxx/ຂຕ.ພ, ລົງວັນທີ 11 ທັນວາ 2012.

## ລະຫວ່າງ

ບໍລິສັດກໍ່ສ້າງສາກົນຈຳກັດ........................................................................... ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ................................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ.......................................... ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ...................................ຈຳເລີຍທີ 2.

**ກ່ຽວເລື່ອງ**: ທວງເອົາເງິນຄ່າເຊົ່າເຮືອນຄືນ

ຊຶ່ງຄຳໃຫ້ການມີເນື້ອໃນລະອຽດ ດັ່ງນີ້ :

ໃນເບື້ອງຕົ້ນກ່ອນຈະມາຊື້ທີ່ດິນ ແລະ ເຮືອນ ຂອງ ທ້າວ ຄຳສີ ແສງຈັນເພັງ ນຳນາງ ຄຳຫຼ້າ ຂາວດີ ຕົນກໍຮູ້ວ່າມີຄົນເຊົ່າຢູ່ ແຕ່ສັນຍາເຊົ່າໝົດແລ້ວ, ຈາກນັ້ນຈຶ່ງໄດ້ຕົກລົງຊື້ໃນວັນທີ 23 ພະຈິກ 2011.

Copyright by JICA

**ຖ/ຕ** : ໃນເວລາ ນາງ ຄຳຫຼ້າ ຂາວດີ ຈະຕໍ່ສັນຍາໃໝ່ໃຫ້ແກ່ບໍລິສັດກໍ່ສ້າງສາກົນຈຳກັດນັ້ນ ຜູ້ກ່ຽວກໍໄດ້ມາແຈ້ງ ໃຫ້ຮູ້ແຕ່ຕົນໄດ້ອະນຸຍາດໃຫ້ຕໍ່ໜຶ່ງປີ, ກ່ຽວກັບ ນາງ ຄຳຫຼ້າ ຂາວດີ ເຊັນສັນຍາເຊົ່າສອງປີນັ້ນຕົນເອງ ບໍ່ຮັບຮູ້.

**ຖ/ຕ** : ກ່ຽວກັບເງິນຄ່າເຊົ່າໜຶ່ງປີເທົ່າກັບ 24.000 ໂດລາສະຫະລັດນັ້ນ ໄດ້ຮັບຕົວຈິງແມ່ນ 20.000 ໂດລາສະຫະລັດ ແລະ ເງິນຈຳນວນດັ່ງກ່າວຕົນກໍໄດ້ເອົາໄປເຊົ່າເຮືອນຢູ່ຕໍ່, ສ່ວນ 4.000 ໂດລາສະຫະລັດ ແມ່ນ ນາງ ຄຳຫຼ້າ ຂາວດີ ໄດ້ຫັກເອົາ.

**ຖ/ຕ:** ການທີ່ບໍລິສັດອ້າງວ່າ ຕົນໄດ້ແຈ້ງໃຫ້ບໍລິສັດໂຍກຍ້າຍອອກຈາກທີ່ດິນ ແລະ ເຮືອນດັ່ງກ່າວນັ້ນແມ່ນໄດ້ແຈ້ງແທ້ ແຕ່ແຈ້ງກ່ອນລ່ວງໜ້າເປັນເວລາຫຼາຍເດືອນ ແລະ ຕົນກໍໄດ້ແຈ້ງຕື່ມວ່າ ອະນຸຍາດໃຫ້ບໍລິສັດຢູ່ຄົບຕາມຈຳນວນເງິນທີ່ໄດ້ຈ່າຍໄປນັ້ນ ແຕ່ບໍລິສັດໄດ້ໂຍກຍ້າຍອອກກ່ອນກຳນົດເວລາເອງ. ສະນັ້ນ, ການທີ່ບໍລິສັດຮ້ອງຟ້ອງເອົາເງິນຄ່າເຊົ່າຄືນ ແມ່ນຕົນບໍ່ສາມາດສົ່ງຄືນໃຫ້ໄດ້ ເນື່ອງຈາກວ່າຕົນບໍ່ໄດ້ໄລ່ບໍລິສັດອອກຈາກທີ່ດິນ ແລະ ເຮືອນດັ່ງກ່າວ.

**ພາກສະເໜີ:** ສະເໜີໃຫ້ສານພິຈາລະນາຕາມລະບຽບກົດໝາຍ ແລະ ເອກະສານທີ່ຕົນນຳສະເໜີຕໍ່ສານແມ່ນບໍ່ມີ.

ສິ້ນສຸດການໃຫ້ການໃນເວລາ 15:40, ໄດ້ອ່ານຄຳໃຫ້ການ ຫຼື ໄດ້ຮັບຟັງຄຳໃຫ້ການແລ້ວເຫັນວ່າຖືກຕ້ອງຕາມທີ່ໄດ້ໃຫ້ການທຸກຢ່າງໂດຍບໍ່ມີການບັງຄັບ ແລະ ຂົ່ມຂູ່ແຕ່ປະການໃດ.

ດັ່ງນັ້ນ, ຈຶ່ງໄດ້ລົງລາຍເຊັນໄວ້ເປັນຫຼັກຖານ.

| ເຊັນ ແລະ ຮັບຮູ້ຈາກ | ຈ່າສານ | ຜູ້ພິພາກສາ |
|---|---|---|
| ທອງດຳ ປະກາຍແສງ  |   | ຈັນເພັງ ສະຫວ່າງ |
| | ດອກໄມ້ ຈັນມະນີ | |

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ

ສານປະຊາຊົນເຂດ II

## ບົດບັນທຶກຄຳໃຫ້ການຊ້ອງໜ້າ

ຄັ້ງທີ I

ອີງຕາມມາດຕາ 108 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012;

ໃນວັນທີ 7 ມີນາ 2013, ເວລາ 9:30, ຢູ່ທີ່ສານປະຊາຊົນເຂດ II ແຂວງວຽງຈັນ; ຕໍ່ໜ້າຂ້າພະເຈົ້າ ນາງ ຈັນເພັງ ສະຫວ່າງ, ໜ້າທີ່ຕຳແໜ່ງ ຜູ້ພິພາກສາ (ຜູ້ສອບ-ຖາມ) ແລະ ນາງ ດອກໄມ້ ຈັນມະນີ, ໜ້າທີ່ຕຳແໜ່ງ ຈ່າສານ (ຜູ້ບັນທຶກ);

## ໄດ້ເອົາຄຳໃຫ້ການຊ້ອງໜ້າລະຫວ່າງ

ທ້າວ/~~ນາງ~~ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ອາຊີບ ນັກທຸລະກິດ, ສັນຊາດ ລາວ, ຊົນເຜົ່າ ລາວ, ປັດຈຸບັນຢູ່ບ້ານນາຊູ, ໜ່ວຍ xxx, ເມືອງໂພນໂຮງ, ແຂວງວຽງຈັນ, ໃນຖານະເປັນທະນາຍຄວາມໂຈດ.
ທ້າວ/~~ນາງ~~ ຫຸມແພງ ສັນຕິສຸກ, ອາຍຸ 53 ປີ, ອາຊີບ ພະນັກງານ, ສັນຊາດ ລາວ, ຊົນເຜົ່າ ລາວ, ປັດຈຸບັນຢູ່ ບ້ານແສນຊຸມ, ໜ່ວຍ xxx, ເມືອງ ໂພນໂຮງ, ແຂວງວຽງຈັນ, ໃນຖານະເປັນຜູ້ຕາງໜ້າຈຳເລີຍທີ 1.

ໄດ້ຊ້ອງໜ້າກ່ຽວກັບຄະດີແພ່ງ ເລກທີ xxx/ຂຕ.ພ, ລົງວັນທີ 11 ທັນວາ 2012.

## ລະຫວ່າງ

ບໍລິສັດກໍ່ສ້າງສາກົນຈຳກັດ..............................................................................
ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ................................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ......................................... ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ...................................ຈຳເລີຍທີ 2.

Copyright by JICA

**ກ່ຽວເລື່ອງ**: ທວງເອົາເງິນຄ່າເຊົ່າເຮືອນຄືນ

ຊຶ່ງຄຳໃຫ້ການມີເນື້ອໃນລະອຽດ ດັ່ງນີ້:

ສະເໜີໃຫ້ຈຳເລີຍສົ່ງເງິນຄ່າເຊົ່າເຮືອນຈຳນວນ 24.000 ໂດລາສະຫະລັດ ພ້ອມດ້ວຍຄ່າປ່ວຍການຊັບ 3% ຂອງມູນຄ່າ 24.000 ໂດລາສະຫະລັດ ແລະ ດອກເບ້ຍຕາມກົດໝາຍ ຄືນໃຫ້ແກ່ບໍລິສັດ ນັບແຕ່ວັນທີ 1 ມັງກອນ 2012 ຈົນປະຕິບັດສຳເລັດ ເນື່ອງຈາກວ່າ ນາງ ຄຳຫຼ້າ ຂາວດີ ເຮັດສັນຍາເຊົ່າເຮືອນ ຄັ້ງວັນທີ 7 ທັນວາ 2011 ນັ້ນແມ່ນເຮັດຂຶ້ນດ້ວຍການຕົວະຍົວະຫຼອກລວງ ແລະ ເຮັດຂຶ້ນຫຼັງຈາກທີ່ຜູ້ກ່ຽວໄດ້ຂາຍທີ່ດິນ ແລະ ເຮືອນດັ່ງກ່າວໃຫ້ແກ່ ທ້າວ ທອງດຳ ປະກາຍແສງ ໄປແລ້ວ; ການທີ່ ນາງ ຄຳຫຼ້າ ຂາວດີ ສະເໜີໃຫ້ໄປທວງເອົາເງິນນຳ ທ້າວ ທອງດຳ ປະກາຍແສງ ແມ່ນເປັນຄຳສະເໜີທີ່ບໍ່ມີເຫດຜົນ ເນື່ອງຈາກວ່າ ບໍລິສັດບໍ່ມີຂໍ້ຜູກພັນທາງດ້ານສັນຍາກັບ ທ້າວ ທອງດຳ ປະກາຍແສງ.

ຝ່າຍ ທ້າວ ທຸມແພງ ສັນຕິສຸກ ໄດ້ໃຫ້ການວ່າ ການທີ່ຝ່າຍໂຈດສະເໜີໃຫ້ ນາງ ຄຳຫຼ້າ ຂາວດີ ສົ່ງເງິນຄ່າເຊົ່າເຮືອນຈຳນວນ 24.000 ໂດລາສະຫະລັດ ແມ່ນ ນາງ ຄຳຫຼ້າ ຂາວດີ ບໍ່ສາມາດໃຫ້ໄດ້ ເນື່ອງຈາກວ່າເງິນຈຳນວນດັ່ງກ່າວແມ່ນ ທ້າວ ທອງດຳ ປະກາຍແສງ ເປັນຜູ້ເອົາໄປແລ້ວ, ດັ່ງນັ້ນ ຈຶ່ງສະເໜີໃຫ້ບໍລິສັດໄປທວງເອົານຳ ທ້າວ ທອງດຳ ປະກາຍແສງ.

ແຕ່ລະຝ່າຍບໍ່ມີເອກະສານມາສະເໜີເພີ່ມເຕີມຕໍ່ສານ, ສະເໜີໃຫ້ສານພິຈາລະນາຕາມລະບຽບກົດໝາຍ.

ສິ້ ສຸດການໃຫ້ການຊ້ອງໜ້າໃ ເວລາ 10:10, ໄດ້ອ່ານຄຳໃຫ້ການ ຫຼື ໄດ້ຮັບຟັງຄຳໃຫ້ການແລ້ວ ເຫັນວ່າຖືກຕ້ອງຕາມທີ່ໄດ້ໃຫ້ການທຸກຢ່າງໂດຍບໍ່ມີການບັງຄັບ ແລະ ຂົ່ມຂູ່ແຕ່ປະການໃດ.

ດັ່ງນັ້ນ, ຈຶ່ງພ້ອມກັ ລົງລາຍເຊັ ໄວ້ເພື່ອເປັນຫຼັກຖາ .

ເຊັນ ແລະ ແປະໂປ້
ຜູ້ໃຫ້ການຊ້ອງໜ້າ



ບຸນທັນ ຊະນະໃຈ

ທຸມແພງ ສັນຕິສຸກ



ຈ່າສານ




ດອກໄມ້ ຈັນມະນີ

ຜູ້ພິພາກສາ

ຈັນເພັງ ສະຫວ່າງ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ

ສານປະຊາຊົນເຂດ II ເລກທີxxx/ຂຕ.ພ

ຄະນະສານແພ່ງ ລົງວັນທີ 20 ມີນາ 2013

# ບົດສະຫຼຸບຄະດີແພ່ງ

ເຖິງ : ທ່ານຫົວໜ້າອົງການໄອຍະການປະຊາຊົນເຂດ II ແຂວງວຽງຈັນ.

ອີງຕາມ : ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ມາດຕາ 63 ວ່າດ້ວຍການເຂົ້າຮ່ວມ ຂອງ ໄອຍະການປະຊາຊົນ.

ອີງຕາມ : ສຳນວນຄະດີແພ່ງ ເລກທີ xxx/ຂຕ.ພ, ລົງວັນທີ 11 ທັນວາ 2012.

## ລະຫວ່າງ

ບໍລິສັດກໍ່ສ້າງສາກົນຈຳກັດ..........................................................................ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍxxx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ ...............................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍxxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງວຽງຈັນ..............................................ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ , ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງວຽງຈັນ .....................................ຈຳເລີຍທີ 2.

**ກ່ຽວເລື່ອງ : ທວງເອົາຄ່າເຊົ່າເຮືອນຄືນ**

## ເນື້ອຄະດີ

ເຫັນຕາມເນື້ອໃນຄຳຮ້ອງຟ້ອງສະບັບ ລົງວັນທີ 15 ພະຈິກ 2012 ຂອງ ທ້າວ ບຸນທັນ ຊະນະໃຈ ທະນາຍຄວາມໂຈດ ກ່າວວ່າ ໃນປີ 2010 ບໍລິສັດກໍ່ສ້າງສາກົນຈຳກັດ ໄດ້ເຊົ່າເຮືອນທ້າວ ຄຳສີ ແສງຈັນເພັງ ໂດຍໄດ້ເຮັດສັນຍາເຊົ່າກັບ ນາງ ຄຳຫຼ້າ ຂາວດີ (ຫຼານສາວ), ພາຍຫຼັງສັນຍາເຊົ່າໝົດກຳນົດແລ້ວ ນາງ ຄຳຫຼ້າ ຂາວດີ ໄດ້ມາເຮັດສັນຍາໃໝ່ ສະບັບລົງວັນທີ 7 ທັນວາ 2011 ໂດຍໄດ້ຕົກລົງຄ່າເຊົ່າເຮືອນເດືອນລະ 2.000 ໂດລາສະຫະລັດ ຕົກເປັນປີລະ 24.000 ໂດລາສະຫະລັດ, ສ່ວນ

Copyright by JICA

ເງິນຄ່າເຊົ່າເຮືອນແມ່ນບໍລິສັດ ໄດ້ຈ່າຍລ່ວງໜ້າໄປແລ້ວ 24.000 ໂດລາສະຫະລັດ, ຕົກມາຮອດວັນທີ 19 ກຸມພາ 2012 ທ້າວ ທອງດຳ ປະກາຍແສງ ໄດ້ແຈ້ງຕໍ່ບໍລິສັດ ວ່າ ຜູ້ກ່ຽວເປັນເຈົ້າຂອງເຮືອນ ແລະ ບໍ່ໃຫ້ບໍລິສັດເຊົ່າຕໍ່ ຊຶ່ງຜູ້ກ່ຽວໄດ້ອ້າງວ່າໄດ້ຊື້ເຮືອນນຳ ທ້າວ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນແຕ່ວັນທີ 23 ພະຈິກ 2011, ຕໍ່ມາວັນທີ 04 ມິຖຸນາ 2012 ບໍລິສັດ ໄດ້ແຈ້ງໃຫ້ນາງ ຄຳຫຼ້າ ຂາວດີ ຮູ້ວ່າຈະຍ້າຍອອກ, ເຫດຜົນທີ່ຍ້າຍອອກກໍຍ້ອນວ່າ ສັນຍາທີ່ ນາງ ຄຳຫຼ້າ ຂາວດີ ເຮັດຂຶ້ນນັ້ນເປັນສັນຍາຕົວະຍົວະຫຼອກລວງ, ຈາກນັ້ນໃນວັນທີ 01 ກໍລະກົດ 2012 ບໍລິສັດໄດ້ຍ້າຍອອກ ຈຶ່ງທວງເອົາເງິນທີ່ຕົນຈ່າຍລ່ວງໜ້າໄປແລ້ວຈຳນວນ 24.000 ໂດລາສະຫະລັດ ພ້ອມດ້ວຍດອກເບ້ຍ 12% ຕໍ່ປີຕາມອັດຕາເງິນກູ້ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ຄ່າປ່ວຍການຊັບຈຳນວນ 3% ຕໍ່ປີ ຂອງມູນຄ່າ 24.000 ໂດລາສະຫະລັດ ນັບແຕ່ວັນທີ 01 ມັງກອນ 2011 ຈົນຮອດມື້ປະຕິບັດສຳເລັດ.

ຜ່ານມາບໍລິສັດເຄີຍເຂົ້າໄປໂອ້ລົມໄກ່ເກ່ຍກັບ ນາງ ຄຳຫຼ້າ ຂາວດີ ແລ້ວ ແຕ່ຖືກຜູ້ກ່ຽວປະຕິເສດ ໂດຍອ້າງວ່າໃຫ້ໄປທວງເອົານຳ ທ້າວ ທອງດຳ ປະກາຍແສງ, ດັ່ງນັ້ນ ບໍລິສັດ ຈຶ່ງຍື່ນຄຳຮ້ອງຟ້ອງຕໍ່ສານເພື່ອສະເໜີໃຫ້ພິຈາລະນາຕາມລະບຽບກົດໝາຍ.

ເຫັນຕາມເນື້ອໃນຄຳແກ້ຟ້ອງສະບັບລົງວັນທີ 06 ທັນວາ 2012 ຂອງນາງ ຄຳຫຼ້າ ຂາວດີ (ຈຳເລີຍທີ 1) ແລະ ບົດບັນທຶກຄຳໃຫ້ການຄັ້ງວັນທີ 30 ມັງກອນ 2013 ຂອງ ທ້າວ ທຸມແພງ ສັນຕິສຸກ (ຕາງໜ້າຈຳເລີຍທີ 1) ອ້າງວ່າ ໃນປີ 2009 ນາງ ຄຳຫຼ້າ ຂາວດີ ຕາງໜ້າໃຫ້ ທ້າວ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນ ໄດ້ເຮັດສັນຍາເຊົ່າເຮືອນກັບບໍລິສັດກໍ່ສ້າງສາກົນຈຳກັດ ຕາມສັນຍາເຊົ່າສະບັບລົງວັນທີ 23 ຕຸລາ 2009, ໃນເມື່ອສັນຍາດັ່ງກ່າວໄດ້ສິ້ນສຸດແລ້ວ ນາງ ຄຳຫຼ້າ ຂາວດີ ກໍໄດ້ແຈ້ງໃຫ້ບໍລິສັດຮູ້ວ່າ ບໍ່ໃຫ້ເຊົ່າຕໍ່, ຕ້ອງການທີ່ດິນ ແລະ ເຮືອນຄືນ, ແຕ່ບໍລິສັດ ໄດ້ຂໍເຊົ່າຕໍ່ໂດຍອ້າງວ່າ ໄດ້ຕິດຕັ້ງເຄື່ອງຂອງຫຼາຍແລ້ວ, ຫຼັງຈາກນັ້ນຈຶ່ງໄດ້ມາເຮັດສັນຍາໃໝ່ ສະບັບລົງວັນທີ 07 ທັນວາ 2011 ຊຶ່ງໃນໄລຍະເວລາເຮັດສັນຍາໃໝ່ນັ້ນ ທ້າວ ຄຳສີ ແສງຈັນເພັງ ໄດ້ຂາຍທີ່ດິນ ແລະ ເຮືອນ ໃຫ້ແກ່ ທ້າວ ທອງດຳ ປະກາຍແສງ ແຕ່ບໍ່ທັນໄດ້ຮັບເງິນຄົບຕາມຈຳນວນ ແລະ ບໍ່ທັນໄດ້ໂອນທີ່ດິນ ແລະ ເຮືອນດັ່ງກ່າວ ໃຫ້ເປັນກຳມະສິດຂອງ ທ້າວ ທອງດຳ ປະກາຍແສງເທື່ອ ແລະ ໃນເວລາດຽວກັນນັ້ນ ນາງ ຄຳຫຼ້າ ຂາວດີ ໄດ້ປຶກສາຫາລືກັບ ທ້າວ ທອງດຳ ປະກາຍແສງ, ຈາກນັ້ນ ນາງ ຄຳຫຼ້າ ຂາວດີ ຈຶ່ງໄດ້ເຊັນສັນຍາໃໝ່ ແລະ ໄດ້ຮັບຄ່າເຊົ່າຈຳນວນໜຶ່ງປີເທົ່າກັບ 24.000 ໂດລາສະຫະລັດ, ເມື່ອໄດ້ເງິນແລ້ວ ນາງ ຄຳຫຼ້າ ຂາວດີ ໄດ້ເອົາໃຫ້ ທ້າວ ທອງດຳ ປະກາຍແສງ ຈຳນວນ 20.000 ໂດລາສະຫະລັດ, ສ່ວນ 4.000 ໂດລາສະຫະລັດ ແມ່ນເອົາໄປແລ່ນໂອນທີ່ດິນ ແລະ ເຮືອນ ໃຫ້ເປັນກຳມະສິດຂອງທ້າວ ທອງດຳ ປະກາຍແສງ, ພາຍ ຫຼັງເຮັດສັນຍາເຊົ່າໃໝ່ແລ້ວ ບໍລິສັດແມ່ນຢູ່ໄດ້ຫົກເດືອນ, ຈາກນັ້ນ ທ້າວ ທອງດຳ ປະກາຍແສງ ໄດ້ແຈ້ງຕໍ່ບໍລິສັດວ່າ ຜູ້ກ່ຽວເປັນເຈົ້າຂອງເຮືອນຜູ້ໃໝ່ ແລະ ໄດ້ອະນຸຍາດໃຫ້ຢູ່ຄົບໜຶ່ງປີຕາມຈຳນວນເງິນຄ່າເຊົ່າທີ່ໄດ້ມາ, ເມື່ອເປັນແນວນັ້ນບໍລິສັດຈຶ່ງບໍ່ພໍໃຈ ແລ້ວໄດ້ແຈ້ງໃຫ້ ນາງ

Copyright by JICA

ຄຳຫຼ້າ ຂາວດີ ຮູ້ວ່າຈະຍ້າຍອອກ ພ້ອມທັງຂໍເງິນຄືນຈຳນວນ 12.000 ໂດລາສະຫະລັດ, ແຕ່ຜູ້ກ່ຽວບໍ່ສາມາດສົ່ງຄືນໃຫ້ໄດ້ ເພາະເງິນຄ່າເຊົ່າ ໄດ້ເອົາໃຫ້ ທ້າວ ທອງດຳ ປະກາຍແສງ ແລະ ກໍບໍ່ໄດ້ລະເມີດສັນຍາເຊົ່າ, ບໍລິສັດໂຍກຍ້າຍອອກເອງ.

ເຫັນຕາມເນື້ອໃນຄຳໃຫ້ການຄັ້ງວັນທີ 31 ມັງກອນ 2013 ຂອງທ້າວ ທອງດຳ ປະກາຍແສງ (ຈຳເລີຍທີ 2) ວ່າ ໃນເບື້ອງຕົ້ນກ່ອນຈະຊື້ທີ່ດິນ ແລະ ເຮືອນ ຂອງ ທ້າວ ຄຳສີ ແສງຈັນເພັງ ນຳນາງ ຄຳຫຼ້າ ຂາວດີ (ຫຼານສາວ) ຕົນກໍຮູ້ວ່າມີຄົນເຊົ່າຢູ່ ແຕ່ສັນຍາເຊົ່າໝົດແລ້ວ, ຈາກນັ້ນຕົນຈຶ່ງໄດ້ຕົກລົງຊື້ ໃນວັນທີ 23 ພະຈິກ 2011 ແລະ ໃນເວລາ ນາງ ຄຳຫຼ້າ ຂາວດີ ຈະຕໍ່ສັນຍາເຊົ່າໃໝ່ໃຫ້ແກ່ບໍລິສັດນັ້ນ ຜູ້ກ່ຽວໄດ້ມາແຈ້ງໃຫ້ຕົນຮູ້ ແລະ ຕົນກໍໄດ້ອະນຸຍາດໃຫ້ເຊົ່າຕໍ່ໜຶ່ງປີເທົ່ານັ້ນ, ການທີ່ ນາງ ຄຳຫຼ້າ ຂາວ ດີ ເຊັນສັນຍາເຊົ່າຕໍ່ສອງປີນັ້ນ ຕົນບໍ່ຮັບຮູ້ ແລະ ຄ່າເຊົ່າເຮືອນທີ່ຕົນໄດ້ຮັບຕົວຈິງແມ່ນ 20.000 ໂດລາສະຫະລັດ, ສ່ວນອີກ 4.000 ໂດລາສະຫະລັດນັ້ນແມ່ນ ນາງ ຄຳຫຼ້າ ຂາວດີ ຫັກເອົາໄວ້; ກ່ຽວກັບບໍລິສັດອ້າງວ່າ ຕົນໄດ້ແຈ້ງໃຫ້ບໍລິສັດໂຍກຍ້າຍອອກຈາກທີ່ດິນ ແລະ ເຮືອນດັ່ງກ່າວແມ່ນຕົນໄດ້ແຈ້ງແທ້, ແຕ່ແຈ້ງກ່ອນລ່ວງໜ້າຫຼາຍເດືອນ ແລະ ຕົນກໍໄດ້ອະນຸຍາດໃຫ້ຢູ່ຄົບຕາມຈຳນວນເງິນທີ່ບໍລິສັດໄດ້ຈ່າຍໄປແລ້ວນັ້ນ, ສ່ວນເງິນຄ່າເຊົ່າທີ່ບໍລິສັດຮ້ອງຟ້ອງເອົາຄືນ ແມ່ນຕົນບໍ່ສາມາດສົ່ງຄືນໄດ້ ເພາະວ່າເງິນຈຳນວນດັ່ງກ່າວນັ້ນຕົນໄດ້ເອົາໄປເຊົ່າເຮືອນຢູ່ໝົດແລ້ວ.

ຜ່ານການຄົ້ນຄວ້າ ແລະ ດຳເນີນຄະດີດັ່ງກ່າວ ເຫັນວ່າມີເອກະສານ, ຫຼັກຖານຄົບຖ້ວນ ແລະ ສາມາດນຳອອກມາພິຈາລະນາຕັດສິນໄດ້.

ດັ່ງນັ້ນ, ຈຶ່ງສະຫຼຸບລາຍງານມາຍັງທ່ານຫົວໜ້າອົງການໄອຍະການປະຊາຊົນເຂດ II ແຂວງວຽງຈັນ ເພື່ອຄົ້ນຄວ້າພິຈາລະນາ ແລະ ຖະແຫຼງຕາມຂັ້ນຕອນຂອງກົດໝາຍ.

**ຫົວໜ້າຄະນະສານແພ່ງ,** **ຜູ້ສະຫຼຸບ**

ທ່ານ ຈັນນະຄອນ ທອງປັນຍາ ນາງ ຈັນເພັງ ສະຫວ່າງ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນແຂວງວຽງຈັນ ເລກທີ xxx/ອຍກ.ຂ II

ອົງການໄອຍະການປະຊາຊົນເຂດ II ລົງວັນທີ 22 ມີນາ 2013

# ໃບແຈ້ງຕອບ
# ຂອງຫົວໜ້າອົງການໄອຍະການປະຊາຊົນເຂດ II
# ກ່ຽວກັບການຖະແຫຼງໃນທີ່ປະຊຸມຄະນະສານແພ່ງ

- ອີງຕາມ ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນແຫ່ງ ສປປລາວ (ສະບັບປັບປຸງ 2009);
- ອີງຕາມ ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ (ສະບັບປັບປຸງ 2012);
- ອີງຕາມ ຄຳແນະນຳຮ່ວມຂອງປະທານສານປະຊາຊົນສູງສຸດ ແລະ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ສະບັບເລກທີ 86/ສປຊພ, ລົງວັນທີ 16 ມີນາ 2006;
- ອີງຕາມບົດສະຫຼຸບຄະດີແພ່ງເລກທີ xx/ຂຕ.ພ, ລົງວັນທີ 20 ມີນາ 2013 ຂອງສານປະຊາຊົນເຂດII.

**ລະຫວ່າງ**

- ບໍລິສັດກໍ່ສ້າງສາກົນຈຳກັດ..........................................................................................ໂຈດ;
- ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ບ້ານນາຊູ, ໜ່ວຍ xx, ເມືອງໂພນໂຮງ, ແຂວງວຽງຈັນ..................................ທະນາຍຄວາມໂຈດ.
- ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ບ້ານວຽງແກ້ວ, ເມືອງວັງວຽງ, ແຂວງວຽງຈັນ.............................................................ຈຳເລີຍທີ 1;
- ທ້າວ ທອງດຳ ປະກາຍແສງ, ອາຍຸ 48, ສັນຊາດ ລາວ, ອາຊີບ ນັກທະລຸກິດ, ປັດຈຸບັນຢູ່ບ້ານວຽງໄຊ, ໜ່ວຍ xxx, ເມືອງວັງວຽງ, ແຂວງວຽງຈັນ ........................................ຈຳເລີຍທີ 2.

## ກ່ຽວເລື່ອງ: ທວງເອົາເງິນຄ່າເຊົ່າເຮືອນຄືນ

ຫົວໜ້າອົງການໄອຍະການປະຊາຊົນເຂດ II ແຈ້ງມາຍັງທ່ານ ຊາບວ່າ ກ່ຽວກັບຄະດີແພ່ງດັ່ງກ່າວ ຫົວໜ້າອົງການໄອຍະການປະຊາຊົນເຂດ II ຈະແຕ່ງຕັ້ງພະນັກງານໄອຍະການເຂົ້າຮ່ວມເພື່ອຖະ ແຫຼງຕາມມາດຕາ 10, 34 ແລະ 49 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນສະບັບປັບປຸງປີ 2009 ແລະ ມາດຕາ 63, 64, 65 ແລະ 68 ຂອງກົດໝາຍວ່າດ້ວຍການດຳເນີນຄະດີ ແພ່ງ ສະບັບປັບປຸງປີ 2012.

Copyright by JICA

## ດ້ວຍເຫດນີ້:

ຫົວໜ້າອົງການໄອຍະການປະຊາຊົນເຂດ II ຈຶ່ງສະເໜີມາຍັງປະທານສານປະຊາຊົນເຂດ II ພິຈາລະນາຄະດີດັ່ງກ່າວຕາມກົດໝາຍ.

ຫົວໜ້າອົງການໄອຍະການປະຊາຊົນເຂດ II

ຕາປະທັບ
ໄອຍະການ

ຄຳແດງ ແສງຈັນ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ

ສານປະຊາຊົນເຂດ II

ຄະນະສານແພ່ງ ເລກທີ xxx/ຂຕ.ພ

ລົງວັນທີ 31 ມີນາ 2013

# ຂໍ້ຕົກລົງ

## ຂອງຫົວໜ້າຄະນະສານແພ່ງ

## ວ່າດ້ວຍການນຳເອົາຄະດີອອກມາພິຈາລະນາໃນທີ່ປະຊຸມສານ

ອີງຕາມ ມາດຕາ 205 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງ 2012

ຫົວໜ້າຄະນະສານແພ່ງ

ຂອງສານປະຊາຊົນເຂດ II ແຂວງວຽງຈັນ ຕົກລົງໃຫ້ເອົາສຳນວນຄະດີແພ່ງ ເລກທີ XXX/ຂຕ.ພ, ລົງວັນທີ 11 ທັນວາ 2012 ເຂົ້າພິຈາລະນາໃນທີ່ປະຊຸມສານ

**ລະຫວ່າງ**

ບໍລິສັດກໍ່ສ້າງສາກົນຈຳກັດ..........................................................................ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ............................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ......................................... ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ................................ຈຳເລີຍທີ 2.

**ກ່ຽວເລື່ອງ:** ທວງເອົາເງິນຄ່າເຊົ່າເຮືອນຄືນ

ຜ່ານການຕົກລົງເຫັນດີຂອງຄະນະສານແພ່ງ ຄັ້ງວັນທີ 31 ມີນາ 2013 ເຫັນດີໃຫ້ :

1. ທ່ານ ຈັນນະຄອນ ທອງປັນຍາ ປະທານ
2. ທ່ານ ນາງ ສົມກຽດ ສຸກໄຊຍະ ຄະນະ
3. ທ່ານ ນາງ ຈັນເພັງ ສະຫວ່າງ ຄະນະ

ນຳເອົາຄະດີດັ່ງກ່າວມາພິຈາລະນາໃນທີ່ປະຊຸມສານ ເວລາ 13:30, ວັນທີ 4 ເມສາ 2013 ຢູ່ທີ່ຫ້ອງປະຊຸມສານແພ່ງຂອງສານປະຊາຊົນເຂດ II ແຂວງວຽງຈັນ.

ມອບໃຫ້ຈ່າສານແພ່ງເປັນຜູ້ອອກໝາຍຮຽກ, ໝາຍເຊີນ ແລະ ກະກຽມຫ້ອງປະຊຸມສານແພ່ງຕາມລະ ບຽບ.

Copyright by JICA

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າຄະນະສານແພ່ງ




ຈັນນະຄອນ ທອງປັນຍາ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ

ສານປະຊາຊົນເຂດ II ເລກທີ xxx/ສປຊ

ຄະນະສານແພ່ງ ລົງວັນທີ 1 ເມສາ 2013

ໂທລະສັບ: xxxxxxx

# ໝາຍຮຽກໂຈດ

# ຄັ້ງທີ I

- ອີງຕາມ ມາດຕາ 2 ຂອງກົດໝາຍວ່າດ້ວຍສານປະຊາຊົນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2009;
- ອີງຕາມ ມາດຕາ 142, 143, 144 ແລະ 145 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012;
- ອີງຕາມ ສຳນວນຄະດີ ແພ່ງ ເລກທີ xxx /ຂຕ.ພ, ລົງວັນທີ 11 ທັນວາ 2012.

**ລະຫວ່າງ**

ບໍລິສັດກໍ່ສ້າງສາກົນຈຳກັດ.............................................................................ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ..................................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ.................................................... ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ .......................................ຈຳເລີຍທີ 2.

**ກ່ຽວເລື່ອງ:** ທວງເອົາເງິນຄ່າເຊົ່າເຮືອນຄືນ

ຈ່າສານ ແພ່ງ ສານປະຊາຊົນເຂດ II ແຂວງວຽງຈັນ ໄດ້ຮຽກຕົວ ບໍລິສັດກໍ່ສ້າງສາກົນຈຳກັດ, ອາຍຸ ......ປີ, ສັນຊາດ.., ອາຊີບ.., ປັດຈຸບັນຢູ່ເຮືອນເລກທີ xx, ໜ່ວຍ xx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ ເຂົ້າມາສານໃນວັນທີ 04 ເມສາ 2013, ເວລາ 13:30 ເພື່ອພົບ ທ່ານ ນາງ ດອກໄມ້ ຈັນມະນີ, ຫ້ອງເບີ 1, ຈຸດປະສົງ ປະຊຸມສານ, ໃນຖານະເປັນ ໂຈດ.

ອີງຕາມມາດຕາ 153 ວັກ 02 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ໄດ້ກຳນົດໄວ້ວ່າ ຖ້າໂຈດ ຫຼື ຜູ້ຕາງໜ້າ ຫຼື ບຸກຄົນທີສາມຝ່າຍໂຈດ ຫາກໄດ້ຮັບໝາຍຮຽກແລ້ວ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກ ແລະ ບໍ່ໄດ້ສະເໜີເຫດຜົນທີ່ເຊື່ອຖືໄດ້ເຖິງສາມຄັ້ງແລ້ວ ສານຈະອອກຄຳສັ່ງຊັດມ້ຽນຄະດີ ແລະ ໃຫ້ໂຈດເສຍສິດໃນການຮ້ອງຟ້ອງຄະດີນັ້ນ.

ຈ່າສານແພ່ງ

ຈ່າສານ

ໝາຍເຫດ:

ໃຫ້ຖືໝາຍຮຽກສະບັບນີ້ເຂົ້າມາພ້ອມ.

Copyright by JICA

ວັນທີ 1 ເມສາ 2013

ລາຍເຊັນ, ແປະໂປ້ຜູ້ຮັບ ແລະ ຊຸນຊື່ແຈ້ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະ ດອກໄມ້ ຈັນມະນີ

ສານປະຊາຊົນແຂວງ............

ສານປະຊາຊົນເຂດ............... ເລກທີ........../ສປຊ

ຄະນະສານ................ ລົງວັນທີ......../...../......

ໂທລະສັບ: ........................

**ໝາຍຮຽກໂຈດ**

**ຄັ້ງທີ......**

- ອີງຕາມ ມາດຕາ 2 ຂອງກົດໝາຍວ່າດ້ວຍສານປະຊາຊົນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2009;
- ອີງຕາມ ມາດຕາ 142, 143, 144 ແລະ 145 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012;
- ອີງຕາມ ສຳນວນຄະດີ.................. ເລກທີ....../ຂຕ....., ລົງວັນທີ.................................

**ລະຫວ່າງ**

ທ້າວ/ນາງ .......................ອາຍຸ........ ປີ, ສັນຊາດ.... , ອາຊີບ.........., ປັດຈຸບັນຢູ່ເຮືອນເລກທີ..... , ໜ່ວຍ........, ບ້ານ.........., ເມືອງ............, ແຂວງ.........................ໂຈດ

ທ້າວ/ນາງ .......................ອາຍຸ........ ປີ, ສັນຊາດ.... , ອາຊີບ............, ປັດຈຸບັນຢູ່ເຮືອນເລກທີ........., ໜ່ວຍ......., ບ້ານ.........., ເມືອງ...., ແຂວງ.......... ເປັນຜູ້ຕາງໜ້າໂຈດ.

ທ້າວ/ນາງ .......................ອາຍຸ........ ປີ, ສັນຊາດ....... , ອາຊີບ......., ປັດຈຸບັນຢູ່ເຮືອນເລກທີ........, ໜ່ວຍ........., ບ້ານ.........., ເມືອງ............, ແຂວງ...................ຈຳເລີຍ

ທ້າວ/ນາງ .......................ອາຍຸ........ ປີ, ສັນຊາດ......... , ອາຊີບ......, ປັດຈຸບັນຢູ່ເຮືອນເລກທີ........., ໜ່ວຍ....., ບ້ານ.........., ເມືອງ...., ແຂວງ.......... ເປັນຜູ້ຕາງໜ້າຈຳເລີຍ.

**ກ່ຽວເລື່ອງ**: ...............................................................................

ຈ່າສານ......... ສານປະຊາຊົນເຂດ ...........ແຂວງ...................................ໄດ້ຮຽກຕົວທ້າວ/ນາງ................................, ອາຍຸ ........ ປີ, ສັນຊາດ ..........., ອາຊີບ .................., ປັດຈຸບັນຢູ່ເຮືອນເລກທີ ..........., ໜ່ວຍ .........., ບ້ານ.................., ເມືອງ.........................,

Copyright by JICA

ແຂວງ......................... ເຂົ້າມາສານໃນວັນທີ .........../......./.........., ເວລາ ........,ຫ້ອງເບີ .....,
ເພື່ອພົບ ທ່ານ............................................., ຈຸດປະສົງ ...................................................

ອີງຕາມມາດຕາ 153 ວັກ 02 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ໄດ້ກຳນົດໄວ້ວ່າ ຖ້າໂຈດ ຫຼື ຜູ້ຕາງໜ້າ ຫຼື ບຸກຄົນທີສາມຝ່າຍໂຈດ ຫາກໄດ້ຮັບໝາຍຮຽກແລ້ວ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກ ແລະ ບໍ່ໄດ້ສະເໜີເຫດຜົນທີ່ເຊື່ອຖືໄດ້ເຖິງສາມຄັ້ງແລ້ວ ສານຈະອອກຄຳສັ່ງຊັດມ້ຽນຄະດີ ແລະ ໃຫ້ໂຈດເສຍສິດໃນການຮ້ອງຟ້ອງຄະດີນັ້ນ.

ຈ່າສານ..........

ໝາຍເຫດ
ໃຫ້ຖືໝາຍຮຽກສະບັບນີ້ເຂົ້າມາພ້ອມ.
ວັນທີ ......../......./.............
ລາຍເຊັນ, ແປະໂປ້ຜູ້ຮັບ ແລະ ຊື່ນຊື່ແຈ້ງ

Copyright by JICA

ເອກະສານລຳດັບທີ 36

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ

ສານປະຊາຊົນເຂດ II ເລກທີxxx/ສປຊ

ຄະນະສານແພ່ງ ລົງວັນທີ 1 ເມສາ 2013

ໂທລະສັບ: xxxxxxx

## ໝາຍຮຽກຈຳເລີຍ

## ຄັ້ງທີ I

- ອີງຕາມ ມາດຕາ 2 ຂອງກົດໝາຍວ່າດ້ວຍສານປະຊາຊົນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2009;
- ອີງຕາມ ມາດຕາ 142, 143, 144 ແລະ 145 ຂອງກົດໝາຍວ່າດ້ວຍການດາເນີນຄະດີແພ່ງ ສະບັບປັບປຸງປີ 2012;
- ອີງຕາມ ສຳນວນຄະດີ ແພ່ງ ເລກທີ xxx /ຂຕ.ພ, ລົງວັນທີ 11 ທັນວາ 2012.

**ລະຫວ່າງ**

ບໍລິສັດກໍ່ສ້າງສາກົນຈຳກັດ.......................................................................................ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ.........................................................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ.................................................................... ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ..........................................................ຈຳເລີຍທີ 2.

**ກ່ຽວເລື່ອງ**: ທວງເອົາເງິນຄ່າເຊົ່າເຮືອນຄືນ

ຈ່າສານ ແພ່ງ ສານປະຊາຊົນເຂດ 2 ແຂວງວຽງຈັນ ໄດ້ຮຽກຕົວ ~~ທ້າວ~~/ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ເຮືອນເລກທີ xxx, ໜ່ວຍ xxx, ບ້ານວຽງແກ້ວ, ເມືອງວັງວຽງ, ແຂວງວຽງຈັນ, ເຂົ້າມາສານໃນວັນທີ 04 ເມສາ 2013, ເວລາ 13:30, ຫ້ອງເບີ 1, ເພື່ອພົບທ່ານ ນາງ ດອກໄມ້ ຈັນມະນີ, ຈຸດປະສົງ ປະຊຸມສານ, ໃນຖານະເປັນ ຈຳເລີຍທີ 1.

ໃນກໍລະນີຝ່າຍຈຳເລີຍ ຫາກໄດ້ໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກ ໂດຍບໍ່ມີເຫດຜົນພຽງພໍນັ້ນ, ອີງຕາມມາດຕາ 153 ວັກ 03 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ໄດ້ກຳນົດໄວ້ວ່າ ໃນກໍລະນີທີ່ຈຳເລີຍ ຫຼື ຜູ້ຕາງໜ້າ ຫຼື ບຸກຄົນທີສາມຝ່າຍຈຳເລີຍ ຫາກບໍ່ເຂົ້າມາສານຕາມໝາຍຮຽກເຖິງສາມຄັ້ງ ໂດຍບໍ່ມີເຫດຜົນພຽງພໍ ຫຼື ບໍ່ເຂົ້າມາສານຍ້ອນວ່າຜູ້ກ່ຽວຍ້າຍໜີຈາກບ່ອນຢູ່ເດີມໄປໂດຍບໍ່ແຈ້ງບ່ອນຢູ່ໃໝ່ ໃຫ້ອີງການປົກຄອງບ້ານຮູ້ນຳແລ້ວ ສານມີສິດອອກໝາຍພາຕົວ ຫຼື ຕັດສິນລັບຫຼັງຈຳເລີຍກໍໄດ້.

ຈ່າສານແພ່ງ

ໝາຍເຫດ:

ໃຫ້ຖືໝາຍຮຽກສະບັບນີ້ເຂົ້າມາພ້ອມ.

ວັນທີ 1 ເມສາ 2013

Copyright by JICA

ລາຍເຊັນ, ແປະໂປ້ຜູ້ຮັບ ແລະ ຊຸນຊື່ແຈ້ງ

ຈ່າສານ

ດອກໄມ້ ຈັນມະນີ

ເອກະສານລຳດັບທີ 37

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ

ສານປະຊາຊົນເຂດ II ເລກທີ xxx/ສປຊ

ຄະນະສານແພ່ງ. ລົງວັນທີ 1 ເມສາ 2013

ໂທລະສັບ: xxxxxx

## ໝາຍຮຽກຈຳເລີຍ

## ຄັ້ງທີ I

- ອີງຕາມ ມາດຕາ 2 ຂອງກົດໝາຍວ່າດ້ວຍສານປະຊາຊົນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2009;
- ອີງຕາມ ມາດຕາ 142, 143, 144 ແລະ 145 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012;
- ອີງຕາມ ສຳນວນຄະດີ ແພ່ງ ເລກທີ xxx /ຂຕ.ພ, ລົງວັນທີ 11 ທັນວາ 2012.

**ລະຫວ່າງ**

ບໍລິສັດກໍ່ສ້າງສາກົນຈຳກັດ.......................................................................................ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ......................................................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ............................................................... ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ........................................................ຈຳເລີຍທີ 2.

**ກ່ຽວເລື່ອງ**: ທວງເອົາເງິນຄ່າເຊົ່າເຮືອນຄືນ

ຈ່າສານ ແພ່ງ ຂອງສານປະຊາຊົນເຂດ II ແຂວງວຽງຈັນ ໄດ້ຮຽກຕົວ ທ້າວ/~~ນາງ~~ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ເຮືອນເລກທີ xxx, ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ, ເຂົ້າມາສານໃນວັນທີ 04 ເມສາ 2013, ເວລາ 13:30, ຫ້ອງເບີ 1, ເພື່ອພົບທ່ານ ນາງ ດອກໄມ້ ຈັນມະນີ, ຈຸດປະສົງ ປະຊຸມສານ, ໃນຖານະເປັນ ຈຳເລີຍທີ 2.

ໃນກໍລະນີຝ່າຍຈຳເລີຍ ຫາກໄດ້ໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກ ໂດຍບໍ່ມີເຫດຜົນພຽງພໍນັ້ນ, ອີງຕາມມາດຕາ 153 ວັກ 03 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ໄດ້ກຳນົດໄວ້ວ່າ ໃນກໍລະນີທີ່ຈຳເລີຍ ຫຼື ຜູ້ຕາງໜ້າ ຫຼື ບຸກຄົນທີສາມຝ່າຍຈຳເລີຍ ຫາກບໍ່ເຂົ້າມາສານຕາມໝາຍຮຽກເຖິງສາມຄັ້ງ ໂດຍບໍ່ມີເຫດຜົນພຽງພໍ ຫຼື ບໍ່ເຂົ້າມາສານຍ້ອນວ່າຜູ້ກ່ຽວຍ້າຍໜີຈາກບ່ອນຢູ່

Copyright by JICA

ເດີນໄປໂດຍບໍ່ແຈ້ງບ່ອນຢູ່ໃໝ່ ໃຫ້ອົງການປົກຄອງບ້ານຮູ້ນຳແລ້ວ ສານມີສິດອອກໝາຍພາຕົວ ຫຼື ຕັດສິນລັບຫຼັງຈຳເລີຍກໍໄດ້.

ຈ່າສານແພ່ງ




ດອກໄມ້ ຈັນມະນີ

ໝາຍເຫດ

ໃຫ້ຖືໝາຍຮຽກສະບັບນີ້ເຂົ້າມາພ້ອມ.

ວັນທີ 1 ເມສາ 2013

ລາຍເຊັນ, ແປະໂປ້ຜູ້ຮັບ ແລະ ຂຽນຊື່ແຈ້ງ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນ ແຂວງວຽງຈັນ
ອົງການໄອຍະການປະຊາຊົນເຂດ II ເລກທີ XXX/ອຍກ.ຂ
ວັນທີ 4 ເມສາ 2013

# ຄຳຖະແຫຼງ (ສຳລັບການສຶກສາ)

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2009 ມາດຕາ 10, 34 ແລະ 49;
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ມາດຕາ 213 ແລະ 241;
- ອີງຕາມ ສຳນວນຄະດີແພ່ງຂອງສານປະຊາຊົນເຂດ.........ສະບັບເລກທີ......./ຂຕ......, ລົງ ວັນທີ....... /....../.........

**ລະຫວ່າງ**

ບໍລິສັດກໍ່ສ້າງສາກົນຈຳກັດ.......................................................................... ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸ ບັນຢູ່ໜ່ວຍ xxx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ .............................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ .......................................ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງວຽງຈັນ ..................................ຈຳເລີຍທີ 2.

**ກ່ຽວເລື່ອງ:** ທວງເອົາເງິນຄ່າເຊົ່າເຮືອນຄືນ

## ເນື້ອຄະດີ

ເຫັນຕາມເນື້ອໃນຄຳຮ້ອງຟ້ອງສະບັບ ລົງວັນທີ 15 ພະຈິກ 2012 ຂອງ ທ້າວ ບຸນທັນ ຊະນະໃຈ ທະນາຍຄວາມໂຈດ ກ່າວວ່າ ໃນປີ 2010 ບໍລິສັດກໍ່ສ້າງສາກົນຈຳກັດ ໄດ້ເຊົ່າເຮືອນທ້າວ ຄຳສີ ແສງຈັນເພັງ ໂດຍໄດ້ເຮັດສັນຍາເຊົ່າກັບ ນາງ ຄຳຫຼ້າ ຂາວດີ (ຫຼານສາວ), ພາຍຫຼັງສັນຍາເຊົ່າໝົດກຳນົດແລ້ວ ນາງ ຄຳຫຼ້າ ຂາວດີ ໄດ້ມາເຮັດສັນຍາໃໝ່ ສະບັບລົງວັນທີ 7 ທັນວາ 2011 ໂດຍໄດ້

Copyright by JICA

ຕົກລົງຄ່າເຊົ່າເຮືອນເດືອນລະ 2.000 ໂດລາສະຫະລັດ ຕົກເປັນປີລະ 24.000 ໂດລາສະຫະລັດ, ສ່ວນເງິນຄ່າເຊົ່າເຮືອນແມ່ນບໍລິສັດ ໄດ້ຈ່າຍລ່ວງໜ້າໄປແລ້ວ 24.000 ໂດລາສະຫະລັດ, ຮອດວັນທີ 19 ກຸມພາ 2012 ທ້າວ ທອງດຳ ປະກາຍແສງ ໄດ້ແຈ້ງຕໍ່ບໍລິສັດວ່າ ຜູ້ກ່ຽວເປັນເຈົ້າຂອງເຮືອນ ແລະ ບໍ່ໃຫ້ບໍລິສັດເຊົ່າຕໍ່ ຊຶ່ງຜູ້ກ່ຽວໄດ້ອ້າງວ່າໄດ້ຊື້ເຮືອນນຳ ທ້າວ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນ ແຕ່ວັນທີ 23 ພະຈິກ 2011, ຕໍ່ມາວັນທີ 04 ມິຖຸນາ 2012 ບໍລິສັດ ໄດ້ແຈ້ງໃຫ້ນາງ ຄຳຫຼ້າ ຂາວດີ ຮູ້ວ່າຈະຍ້າຍອອກ, ເຫດຜົນທີ່ຍ້າຍອອກກໍຍ້ອນວ່າ ສັນຍາທີ່ ນາງ ຄຳຫຼ້າ ຂາວດີ ເຮັດຂຶ້ນນັ້ນເປັນສັນຍາຕົວະຍົວະຫຼອກລວງ, ຈາກນັ້ນໃນວັນທີ 01 ກໍລະກົດ 2012 ບໍລິສັດໄດ້ຍ້າຍອອກ ຈຶ່ງທວງເອົາເງິນທີ່ຕົນຈ່າຍລ່ວງໜ້າໄປແລ້ວຈຳນວນ 24.000 ໂດລາສະຫະລັດ ພ້ອມດ້ວຍດອກເບ້ຍ 12% ຕໍ່ປີຕາມອັດຕາເງິນກູ້ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ຄ່າປ່ອຍການຊັບຈຳນວນ 3% ຕໍ່ປີຂອງມູນຄ່າ 24.000 ໂດລາສະຫະລັດ ນັບແຕ່ວັນທີ 01 ມັງກອນ 2011 ຈົນຮອດມື້ປະຕິບັດສຳເລັດ.

ຜ່ານມາບໍລິສັດເຄີຍເຂົ້າໄປໄອ້ລົມໄກ່ເກ່ຍກັບ ນາງ ຄຳຫຼ້າ ຂາວດີ ແລ້ວ ແຕ່ຖືກຜູ້ກ່ຽວປະຕິເສດ ໂດຍອ້າງວ່າໃຫ້ໄປທວງເອົານຳ ທ້າວ ທອງດຳ ປະກາຍແສງ, ດັ່ງນັ້ນ ບໍລິສັດ ຈຶ່ງຍື່ນຄຳຮ້ອງຟ້ອງຕໍ່ສານເພື່ອສະເໜີໃຫ້ພິຈາລະນາຕາມລະບຽບກົດໝາຍ.

ເຫັນຕາມເນື້ອໃນຄຳແກ້ຟ້ອງສະບັບລົງວັນທີ 06 ທັນວາ 2012 ຂອງນາງ ຄຳຫຼ້າ ຂາວດີ (ຈຳເລີຍທີ 1) ແລະ ບົດບັນທຶກຄຳໃຫ້ການຄັ້ງວັນທີ 30 ມັງກອນ 2013 ຂອງ ທ້າວ ທຸມແພງ ສັນຕິສຸກ (ຕາງໜ້າຈຳເລີຍທີ 1) ອ້າງວ່າ ໃນປີ 2009 ນາງ ຄຳຫຼ້າ ຂາວດີ ຕາງໜ້າໃຫ້ ທ້າວ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນ ໄດ້ເຮັດສັນຍາເຊົ່າເຮືອນກັບບໍລິສັດກໍ່ສ້າງສາກົນຈຳກັດ ຕາມສັນຍາເຊົ່າສະບັບລົງວັນທີ 23 ຕຸລາ 2009, ໃນເມື່ອສັນຍາດັ່ງກ່າວໄດ້ສິ້ນສຸດແລ້ວ ນາງ ຄຳຫຼ້າ ຂາວດີ ກໍໄດ້ແຈ້ງໃຫ້ບໍລິສັດຮູ້ວ່າ ບໍ່ໃຫ້ເຊົ່າຕໍ່, ຕ້ອງການທີ່ດິນ ແລະ ເຮືອນຄືນ, ແຕ່ບໍລິສັດ ໄດ້ຂໍເຊົ່າຕໍ່ໂດຍອ້າງວ່າ ໄດ້ຕິດຕັ້ງເຄື່ອງຂອງຫຼາຍແລ້ວ, ຫຼັງຈາກນັ້ນຈຶ່ງໄດ້ມາເຮັດສັນຍາໃໝ່ ສະບັບລົງວັນທີ 07 ທັນວາ 2011 ຊຶ່ງໃນໄລຍະເວລາເຮັດສັນຍາໃໝ່ນັ້ນ ທ້າວ ຄຳສີ ແສງຈັນເພັງ ໄດ້ຂາຍທີ່ດິນ ແລະ ເຮືອນ ໃຫ້ແກ່ ທ້າວ ທອງດຳ ປະກາຍແສງ ແຕ່ບໍ່ທັນໄດ້ຮັບເງິນຄົບຕາມຈຳນວນ ແລະ ບໍ່ທັນໄດ້ໂອນທີ່ດິນ ແລະ ເຮືອນດັ່ງກ່າວ ໃຫ້ເປັນກຳມະສິດຂອງ ທ້າວ ທອງດຳ ປະກາຍແສງ ເທື່ອ, ໃນເວລາດຽວກັນນັ້ນ ນາງ ຄຳຫຼ້າ ຂາວດີ ໄດ້ປຶກສາກັບ ທ້າວ ທອງດຳ ປະກາຍແສງ, ຈາກນັ້ນ ນາງ ຄຳຫຼ້າ ຂາວດີ ຈຶ່ງໄດ້ເຊັນສັນຍາໃໝ່ ແລະ ໄດ້ຮັບຄ່າເຊົ່າຈຳນວນໜຶ່ງປີເທົ່າກັບ 24.000 ໂດລາສະຫະລັດ, ເມື່ອໄດ້ເງິນແລ້ວ ນາງ ຄຳຫຼ້າ ຂາວດີ ໄດ້ເອົາໃຫ້ ທ້າວ ທອງດຳ ປະກາຍແສງ ຈຳນວນ 20.000 ໂດລາສະຫະລັດ, ສ່ວນ 4.000 ໂດລາສະຫະລັດ ແມ່ນເອົາໄປແລ່ນໂອນທີ່ດິນ ແລະ ເຮືອນ ໃຫ້ເປັນກຳມະສິດ ຂອງ ທ້າວ ທອງດຳ ປະກາຍແສງ, ພາຍຫຼັງເຮັດສັນຍາເຊົ່າໃໝ່ແລ້ວ ບໍລິສັດຢູ່ໄດ້ຫົກເດືອນ ກໍມີ ທ້າວ ທອງດຳ ປະກາຍແສງ ມາແຈ້ງຕໍ່ບໍລິສັດວ່າ ຜູ້ກ່ຽວເປັນເຈົ້າຂອງເຮືອນຜູ້ໃໝ່ ແລະ ໄດ້ອະນຸຍາດໃຫ້ຢູ່ຄົບໜຶ່ງປີຕາມຈຳນວນເງິນຄ່າເຊົ່າທີ່ໄດ້ມາ, ເມື່ອເປັນແນວນັ້ນບໍລິສັດຈຶ່ງບໍ່ພໍໃຈ ແລ້ວໄດ້ແຈ້ງໃຫ້ ນາງ ຄຳຫຼ້າ ຂາວດີ ຮູ້ວ່າຈະຍ້າຍອອກ ພ້ອມທັງຂໍເງິນຄືນຈຳນວນ 24.000 ໂດລາສະຫະລັດ, ແຕ່ຜູ້ກ່ຽວບໍ່ສາມາດ

Copyright by JICA

ສົ່ງຄືນໃຫ້ໄດ້ ເພາະເງິນຄ່າເຊົ່າໄດ້ເອົາໃຫ້ ທ້າວ ທອງດຳ ປະກາຍແສງ ແລະ ກໍບໍ່ໄດ້ລະເມີດສັນຍາເຊົ່າ, ບໍລິສັດໂຍກຍ້າຍອອກເອງ.

## ຄຳເຫັນ

ຜ່ານການຄົ້ນຄ້ວາບັນດາຂໍ້ມູນຫຼັກຖານຕ່າງໆຕາມສຳນວນຄະດີ ຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສແລ້ວ.

ເຫັນວ່າ ໃນປີ 2010 ບໍລິສັດກໍ່ສ້າງສາກົນຈຳກັດ ໄດ້ເຊົ່າເຮືອນ ທ້າວ ຄຳສີ ແສງຈັນເພັງ ໂດຍໄດ້ເຮັດສັນຍາເຊົ່າກັບ ນາງ ຄຳຫຼ້າ ຂາວດີ (ຫຼານສາວ), ພາຍຫຼັງສັນຍາເຊົ່າໝົດກຳນົດແລ້ວ ນາງ ຄຳຫຼ້າ ຂາວດີ ໄດ້ເຮັດສັນຍາເຊົ່າໃໝ່ສະບັບລົງວັນທີ 7 ທັນວາ 2011 ແລະ ໄດ້ຕົກລົງຄ່າເຊົ່າ ເດືອນລະ 2.000 ໂດລາສະຫະລັດ ຕົກເປັນ 24.000 ໂດລາສະຫະລັດ ຕໍ່ປີ ຊຶ່ງບໍລິສັດໄດ້ຈ່າຍຄ່າເຊົ່າລ່ວງໜ້າແລ້ວຈຳນວນ 24.000 ໂດລາສະຫະລັດ, ຕົກມາຮອດວັນທີ 19 ກຸມພາ 2012 ທ້າວ ທອງດຳ ປະກາຍແສງ ໄດ້ແຈ້ງຕໍ່ບໍລິສັດ ວ່າ ຕົນເປັນເຈົ້າຂອງເຮືອນຜູ້ໃໝ່ເພາະຕົນໄດ້ຊື້ທີ່ດິນ ແລະ ເຮືອນຫຼັງນີ້ແຕ່ວັນທີ 23 ພະຈິກ 2011 ແລະ ບໍ່ໃຫ້ບໍລິສັດເຊົ່າຕໍ່. ມາໃນວັນທີ 4 ມິຖຸນາ 2012 ບໍລິສັດໄດ້ແຈ້ງໃຫ້ ນາງ ຄຳຫຼ້າ ຂາວດີ ຮູ້ວ່າຈະຍ້າຍອອກ, ເຫດ ຜົນທີ່ຍ້າຍອອກກໍຍ້ອນວ່າ ສັນຍາທີ່ ນາງ ຄຳຫຼ້າ ຂາວດີ ເຮັດຂຶ້ນນັ້ນເປັນສັນຍາຕົວະຍົວະຫຼອກລວງ, ຈາກນັ້ນໃນວັນທີ 01 ກໍລະກົດ 2012 ບໍລິສັດໄດ້ຍ້າຍອອກ. ດັ່ງນັ້ນ, ບໍລິສັດຈຶ່ງທວງເອົາເງິນຄ່າເຊົ່າຄືນຈຳນວນ 24.000 ໂດລາສະຫະລັດ ພ້ອມດ້ວຍຄ່າປ່ວຍການຊັບ 3% ຂອງມູນຄ່າ 24.000 ໂດລາສະຫະລັດ ແລະ ດອກເບ້ຍຕາມກົດໝາຍ ນັບແຕ່ວັນທີ 1 ມັງກອນ 2011 ຈົນຮອດມື້ປະຕິບັດສຳເລັດ. ຜ່ານມາທັງສອງຝ່າຍເຄີຍໄດ້ໄກ່ເກ່ຍ ແຕ່ຖືກນາງ ຄຳຫຼ້າ ຂາວດີ ປະຕິເສດ, ສະນັ້ນ ຕົນຈຶ່ງຮ້ອງຟ້ອງຂຶ້ນສານ ເພື່ອໃຫ້ພິຈາລະນາຕາມລະບຽບກົດໝາຍ.

ເຫັນວ່າ ໂຈດໄດ້ຮ້ອງຟ້ອງເອົາຄ່າເຊົ່າເຮືອນຄືນຈຳນວນ 24.000 ໂດລາສະຫະລັດພ້ອມດ້ວຍດອກເບ້ຍ 12% ຕໍ່ປີ ແລະ ຄ່າປ່ວຍການຊັບ 3% ຕໍ່ປີ ນັ້ນເຫັນວ່າ ເປັນການຮ້ອງຟ້ອງທີ່ມີເຫດຜົນບາງສ່ວນ ເນື່ອງຈາກວ່າ ຕາມສັນຍາເຊົ່າ ສະບັບລົງວັນທີ 7 ທັນວາ 2011 ທາງບໍລິສັດໄດ້ຈ່າຍຄ່າເຊົ່າລ່ວງໜ້າໄປແລ້ວຈຳນວນ 24.000 ໂດລາສະຫະລັດ, ຜ່ານມາບໍລິສັດໄດ້ຢູ່ມາແລ້ວຫົກເດືອນ ຈຶ່ງສະເໜີໃຫ້ຫັກເງິນອອກເລີຍ ແລະ ໃນຄຳໃຫ້ການຂອງ ທ້າວ ທອງດຳ ປະກາຍແສງ ເຈົ້າຂອງເຮືອນຄົນໃໝ່ ສະບັບລົງວັນທີ 31 ມັງກອນ 2013 ກໍໄດ້ໃຫ້ການວ່າ ກ່ຽວກັບການເຮັດສັນຍາເຊົ່າເຮືອນຄັ້ງທີສອງ ຕົນບໍ່ເຫັນນຳ ນາງ ຄຳຫຼ້າ ຂາວດີ ແຕ່ໄດ້ບອກຜູ້ກ່ຽວວ່າ ອະນຸຍາດໃຫ້ບໍລິສັດເຊົ່າຕໍ່ອີກໜຶ່ງປີ ແຕ່ ນາງ ຄຳຫຼ້າ ຂາວດີ ໄດ້ເຮັດສັນຍາສອງປີ, ອີກປະການໜຶ່ງເຮືອນຫຼັງດັ່ງກ່າວແມ່ນໄດ້ຂາຍໃຫ້ທ້າວ ທອງດຳ ປະກາຍແສງ ກ່ອນໜ້ານັ້ນແລ້ວ ຈຶ່ງມາເຮັດສັນຍາເຊົ່າກັບບໍລິສັດໂດຍບໍລິສັດບໍ່ຮູ້ວ່າເຮືອນດັ່ງກ່າວໄດ້ຂາຍແລ້ວ. ອີງຕາມມາດຕາ 5 ຂໍ້ 3 ແລະ ມາດຕາ 20 ຂໍ້ 3 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ເມື່ອຄົ້ນຄວ້າແລ້ວ ເຫັນວ່າ ສັນຍາດັ່ງກ່າວແມ່ນເຮັດຂຶ້ນໂດຍບໍ່ຖືກຕ້ອງຕາມຫຼັກການຂອງການເຮັດສັນຍາ ເນື່ອງຈາກວ່າ ນາງ ຄຳຫຼ້າ ຂາວດີ ໄດ້ຂາຍທີ່ດິນ ແລະເຮືອນດັ່ງກ່າວແລ້ວແຕ່ບໍ່ໄດ້ແຈ້ງໃຫ້ຜູ້ເຊົ່າຊາບ ເຫັນວ່າ ສັນຍາດັ່ງກ່າວເຮັດຂຶ້ນດ້ວຍຄວາມບໍ່ຈິງໃຈ ແລະມີ

Copyright by JICA

ການປົກປິດຂໍ້ມູນ ຈຶ່ງເຫັນຄວນໃຫ້ ນາງ ຄຳຫຼ້າ ຂາວດີ (ຈຳເລີຍທີ 1) ສົ່ງເງິນຄືນໃຫ້ແກ່ບໍລິສັດໃນຈຳນວນຄ່າເຊົ່າຫົກເດືອນທີ່ບໍ່ໄດ້ຢູ່. ສ່ວນດອກເບ້ຍ 12% ທີ່ໂຈດສະເໜີມານັ້ນໃນສັນຍາກໍບໍ່ໄດ້ກຳນົດໄວ້ , ເຫັນວ່າເປັນການສະເໜີທີ່ບໍ່ມີເຫດຜົນ. ສຳລັບຄ່າປ່ວຍການຊົບ 3%ໂຈດກໍບໍ່ມີຫຼັກຖານມາອ້າງອີງຕໍ່ຄວາມເສຍຫາຍດັ່ງກ່າວ;

ການທີ່ ທ້າວ ຫຸມແພງ ສັນຕິສຸກ ຕາງໜ້າ ນາງ ຄຳຫຼ້າ ຂາວດີ ໄດ້ສະເໜີວ່າ ການທີ່ບໍລິສັດມາຮ້ອງຟ້ອງທວງເອົາເງິນຄ່າເຊົ່າເຮືອນຄືນນັ້ນ ນາງ ຄຳຫຼ້າ ຂາວດີ ບໍ່ໄດ້ເອົາ ແລະ ກໍບໍ່ໄດ້ລະເມີດສັນຍາ, ເມື່ອໄດ້ຄົ້ນຄວ້າແລ້ວເຫັນວ່າ ເປັນການກ່າວອ້າງທີ່ບໍ່ມີເຫດຜົນ ເນື່ອງຈາກວ່າ ໃນການເຮັດສັນຍາເຊົ່າແມ່ນ ນາງ ຄຳຫຼ້າ ຂາວດີ ແລະ ບໍລິສັດເປັນຄົນເຮັດສັນຍາ ແລະ ສັນຍາດັ່ງກ່າວກໍເຮັດຂຶ້ນໂດຍບໍ່ຖືກຕ້ອງຕາມຫຼັກການຂອງສັນຍາ. ສະນັ້ນ, ຫົວໜ້າອົງການໄອຍະການປະຊາຊົນເຂດ II ຈຶ່ງບໍ່ເຫັນຄວນສະເໜີໃຫ້ສານພິຈາລະນາ;

ເຫັນຕາມ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາສະບັບປັບປຸງ ປີ 2008 ມາດຕາ 5 ຂໍ້ 3 ແລະ 20 ຂໍ້ 3, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ມາດຕາ 217, 249, 262.

ດ້ວຍເຫດນີ້

ຫົວໜ້າອົງການໄອຍະການປະຊາຊົນເຂດ II ແຂວງວຽງຈັນ ຈຶ່ງຖະແຫຼງຕໍ່ປະທານຄະນະສານແພ່ງ ຂອງສານປະຊາຊົນເຂດ II ແຂວງວຽງຈັນ ເພື່ອພິຈາລະນາຕາມການສະເໜີມານັ້ນ.

ຫົວໜ້າອົງການໄອຍະການປະຊາຊົນເຂດ

(ເຊັນ ແລະ ປະທັບຕາ)

ຕາປະທັບ
ໄອຍະການ

ຄຳແດງ ແສງຈັນ

Copyright by JICA

ເອກະສານລຳດັບທີ 38

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນ ແຂວງວຽງຈັນ

ອົງການໄອຍະການປະຊາຊົນເຂດ II ເລກທີ XXX/ອຍກ.ຂ

ລົງວັນທີ................/......... /......

# ຄຳຖະແຫຼງ (ສຳລັບການຝຶກອົບຮົມ)

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2009 ມາດຕາ 10, 34 ແລະ 48.
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ມາດຕາ 213 ແລະ 241.
- ອີງຕາມ ສຳນວນຄະດີແພ່ງຂອງສານປະຊາຊົນເຂດ.........ສະບັບເລກທີ......./ຂຕ......, ລົງວັນທີ............... /....../........

**ລະຫວ່າງ**

ທ້າວ/ນາງ.................................................................................................ໂຈດ

ທ້າວ/ນາງ.......................................................................ທະນາຍຄວາມຜູ້ຕາງໜ້າ

ທ້າວ/ນາງ.........................................................................................ຈຳເລີຍ

ທ້າວ/ນາງ.......................................................................ທະນາຍຄວາມຜູ້ຕາງໜ້າ

ທ້າວ/ນາງ.............................................................................ບຸກຄົນທີສາມ (ຖ້າມີ)

**ກ່ຽວເລື່ອງ:** ..........................................................................................

## ເນື້ອຄະດີ

ສະຫຼຸບເຫດການຂອງຄະດີໂດຍຫຍໍ້ ເປັນຕົ້ນແມ່ນ ຄຳຮ້ອງຟ້ອງ, ຄຳແກ້ຟ້ອງ ແລະ ຄຳຟ້ອງແຍ່ງຂອງຄູ່ຄວາມ ຫຼື ບຸກຄົນທີສາມ (ແຕ່ຕ້ອງຄົບຖ້ວນນັບແຕ່ມື້ມີຂໍ້ຂັດແຍ່ງເຖິງມີຮ້ອງຟ້ອງຕໍ່ສານ) ໃນກໍລະນີ ທີ່ເປັນບົດສະຫຼຸບຄະດີທີ່ສານປະຊາຊົນສົ່ງມາໃຫ້ ແມ່ນໃຫ້ສັງລວມເນື້ອຄະດີຕາມບົດສະຫຼຸບດັ່ງກ່າວ.

.............................................................................................................

..........................................................................................................

Copyright by JICA

## ຄຳເຫັນ

ຜ່ານການຄົ້ນຄ້ວາບັນດາຂໍ້ມູນຫຼັກຖານຕ່າງໆຕາມສຳນວນຄະດີ ຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສແລ້ວ

ເຫັນວ່າ..........................................................................................................
(ໃຫ້ມີຄຳເຫັນຕໍ່ເຫດການຂອງຄະດີທີ່ເປັນມາໂດຍຫຍໍ້) ຂອງໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ.

ເຫັນວ່າ..........................................................................................................
(ໃຫ້ມີຄວາມເຫັນໄຈ້ແຍກຂໍ້ມູນຫຼັກຖານຕ່າງໆ ຕາມຄຳຮ້ອງຟ້ອງຂອງໂຈດວ່າ ສອດຄ່ອງ ຫຼື ບໍ່ ສອດຄ່ອງຕາມກົດໝາຍໃດ)...............................................................................................
(ຊຽນເນື້ອໃນຂອງມາດຕາກົດໝາຍໃສ່).

ເຫັນຕາມ ກົດໝາຍວ່າດ້ວຍ.......................ມາດຕາ...................................................

## ດ້ວຍເຫດນີ້

ຫົວໜ້າອົງການໄອຍະການປະຊາຊົນເຂດ...................ຈຶ່ງຖະແຫຼງຕໍ່ປະທານຄະນະສານແພ່ງ ຂອງສານປະຊາຊົນເຂດ.....................ເພື່ອພິຈາລະນາຕາມການສະເໜີມານັ້ນ.

ຫົວໜ້າອົງການໄອຍະການປະຊາຊົນເຂດ

(ເຊັນ ແລະ ປະທັບຕາ)

Copyright by JICA

ເອກະສານລຳດັບທີ 39

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ XXX/ຂຕ.ພ

ລົງວັນທີ 04 ເມສາ 2013

# ບົດບັນທຶກປະຊຸມສານ
# ຄະນະສານແພ່ງຂອງສານປະຊາຊົນເຂດ II
# ປະກອບດ້ວຍ

| | | |
|---|---|---|
| | ທ່ານ ຈັນນະຄອນ ທອງປັນຍາ | ປະທານ |
| | ທ່ານ ນາງ ສົມກຽດ ສຸກໄຊຍະ | ຄະນະ |
| | ທ່ານ ນາງ ຈັນເພັງ ສະຫວ່າງ | ຄະນະ |
| ນັ່ງພ້ອມດ້ວຍ | ທ່ານ ນາງ ດອກໄມ້ ຈັນມະນີ | ຈ່າສານ |

ໂດຍຊ້ອງໜ້າ ທ່ານ ອິນໄຊ ວິໄລຮຸ່ງ ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນເຂດ II

ໄດ້ເປີດປະຊຸມສານຂຶ້ນໃນວັນທີ 04 ເມສາ 2013, ເວລາ 13:30, ຢູ່ທີ່ຫ້ອງປະຊຸມສານແພ່ງຂອງສານປະຊາຊົນເຂດ II, ແຂວງວຽງຈັນ ເພື່ອພິຈາລະນາຄະດີແພ່ງ ເລກທີ XXX/ຂຕ.ພ, ລົງວັນທີ 11 ທັນວາ 2012

## ລະຫວ່າງ

ບໍລິສັດກໍ່ສ້າງສາກົນຈຳກັດ.........................................................................ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸບັນຢູ່ໜ່ວຍ xx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ.............................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xx, ບ້ານວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ...............................................ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງ ວຽງຈັນ ................................ຈຳເລີຍທີ 2.

**ກ່ຽວເລື່ອງ:** ທວງເອົາເງິນຄ່າເຊົ່າເຮືອນຄືນ

**ໂຈດ:** ຢັ້ງຢືນເອົາຕາມຄຳຮ້ອງຟ້ອງທຸກປະການ, ອີກປະການໜຶ່ງ ສັນຍາແມ່ນເຮັດຂຶ້ນຖືກຕ້ອງຕາມກົດໝາຍ.

**ຕາງໜ້າຈຳເລີຍທີ 1:** ທ້າວ ທຸມແພງ ສັນຕິສຸກ, ອາຍຸ 53 ປີ, ບ້ານ ແສນຊຸມ, ໜ່ວຍ XXX, ເມືອງໂພນໂຮງ ຮັບຮູ້ກ່ຽວກັບການເຮັດສັນຍາ, ໂຈດອ້າງວ່າ ຈຳເລີຍ ຕົວະຍົວະຫຼອກລວງນັ້ນ ບໍ່

Copyright by JICA

ແມ່ນຄວາມຈິງເນື່ອງຈາກວ່າ ນາງ ຄຳຫຼ້າ ຂາວດີ ໄດ້ຕົກລົງຂາຍທີ່ດິນ ແລະ ເຮືອນໃຫ້ ທ້າວ ທອງດຳ ປະກາຍແສງ ແລ້ວ.

**ໂຈດ:** ຮຽກຮ້ອງຄ່າເຊົ່າເຮືອນຄືນຈຳນວນ 24.000 ໂດລາສະຫະລັດ ພ້ອມດ້ວຍດອກເບ້ຍຕາມກົດ ໝາຍ ແລະ ຄ່າປ່ວຍການ, ໂຈດໄດ້ເຮັດສັນຍາກັບ ນາງ ຄຳຫຼ້າ ຂາວດີ ກຳນົດ ສອງປີ ແຕ່ວັນທີ 7 ທັນວາ 2011 ເຖິງ ວັນທີ 31 ທັນວາ 2013 ແລະ ໂຈດໄດ້ຈ່າຍກ່ອນລ່ວງໜ້າແລ້ວ ຈຳນວນ 24.000 ໂດລາສະຫະລັດ, ໂຈດໄດ້ຍ້າຍອອກຈາກເຮືອນໃນວັນທີ 1 ກໍລະກົດ 2012 ແລະ ການເຮັດສັນຍາແມ່ນ ທ້າວ ທອງດຳ ປະກາຍແສງ ບໍ່ໄດ້ເຂົ້າຮ່ວມນຳ.

**ຈຳເລີຍທີ 2:** ອ້າງວ່າ ຕົນໄດ້ຊື້ທີ່ດິນ ແລະ ເຮືອນນຳ ນາງ ຄຳຫຼ້າ ຂາວດີ ແລະ ຕົກລົງຈ່າຍເງິນໃຫ້ກັນເປັນສາມງວດ, ຢູ່ຕໍ່ມາ ນາງ ຄຳຫຼ້າ ຂາວດີ ໄດ້ບອກວ່າ ທາງບໍລິສັດໄດ້ມາເຮັດສັນຍາເຊົ່າຕໍ່ ຊຶ່ງສັນຍາດັ່ງກ່າວແມ່ນຕົນບໍ່ເຄີຍເຫັນມາກ່ອນຈົນຮອດມື້ປະຊຸມ.

**ຕາງໜ້າຈຳເລີຍທີ 1:** ຮັບຮູ້ກ່ຽວກັບເງິນ 4.000 ໂດລາສະຫະລັດ ໄດ້ເອົາໄປແລ່ນເອກະສານໂອນໃບຕາດິນ ແລະ ນາງ ຄຳຫຼ້າ ຂາວດີ ກໍໄດ້ແຈ້ງໃຫ້ບໍລິສັດແລ້ວ. ຝ່າຍໂຈດບໍ່ຮັບຮູ້ວ່າ ນາງ ຄຳຫຼ້າ ຂາວດີ ອ້າງວ່າ ໄດ້ຂາຍທີ່ດິນ ແລະ ເຮືອນ ແລ້ວນັ້ນ, ໂຈດຮັບຮູ້ວ່າທ້າວ ທອງດຳ ປະກາຍແສງ ໃຫ້ເຊົ່າ ໜຶ່ງປີ ແຕ່ໂຈດຍ້າຍອອກເອງ. ໃນເວລາເຮັດສັນຍາໃໝ່ນີ້ ບໍ່ໄດ້ອອກຊື່ ທ້າວ ທອງດຳ ປະກາຍແສງ, ແຕ່ທ້າວ ທອງດຳ ປະກາຍແສງ ກໍຮັບຮູ້ໄດ້ໃຫ້ເຊົ່າໜຶ່ງປີ ແລະ ຈຳເລີຍກໍໄດ້ແຈ້ງແລ້ວກ່ອນຈະເຂົ້າມາຢູ່.

**ຜູ້ຕາງໜ້າໂຈດ:** ນາງ ຄຳຫຼ້າ ຂາວດີ ເປັນຜູ້ຄຸ້ມຄອງເຮືອນ ແລະ ຜູ້ກ່ຽວ ໄດ້ເຮັດສັນຍາກັບບໍລິສັດ.

**ຈຳເລີຍທີ 2:** ບໍ່ຮັບຮູ້ກ່ຽວກັບເງິນ 4.000 ໂດລາສະຫະລັດ.

**ໂຈດ:** ຮັບຮູ້ວ່າ ບໍ່ໄດ້ເຮັດສັນຍາກັບ ທ້າວ ທອງດຳ ປະກາຍແສງ ແທ້, ຫຼັງຈາກເຮັດສັນຍາແລ້ວ ນາງ ຄຳຫຼ້າ ຂາວດີ ຈຶ່ງໄດ້ແຈ້ງໃຫ້ຮູ້ວ່າ ທີ່ດິນ ແລະ ເຮືອນດັ່ງກ່າວແມ່ນໄດ້ຂາຍໃຫ້ ທ້າວ ທອງດຳ ປະກາຍແສງ ແລ້ວ. ມາຮອດປັດຈຸບັນ ຝ່າຍໂຈດ ຮຽກຮ້ອງເອົາແຕ່ 12.000 ໂດລາສະຫະລັດ, ສ່ວນຄ່າປ່ວຍການແມ່ນບໍ່ຮຽກຮ້ອງເອົາອີກ.

**ຈຳເລີຍທີ 2:** ຮັບຮູ້ໄດ້ໃຫ້ເຊົ່າເຮືອນໜຶ່ງປີ ແລະ ໄດ້ຮັບເອົາເງິນນຳໂຈດຈຳນວນ 20.000 ໂດລາສະຫະລັດ, ກ່ອນຈະເຂົ້າໄປຢູ່ ຈຳເລີຍທີ 1 ກໍໄດ້ແຈ້ງໃຫ້ໂຈດກ່ອນແລ້ວ.

**ຜູ້ຕາງໜ້າຈຳເລີຍທີ 1:** ສະເໜີວ່າ ກ່ອນຈະຂາຍກໍໄດ້ແຈ້ງໃຫ້ໂຈດຮັບຮູ້ແລ້ວ, ການເຮັດສັນຍາແມ່ນເຮັດຂຶ້ນສອງຄັ້ງ, ສັນຍາຄັ້ງທີໜຶ່ງໝົດໄປແລ້ວຈຶ່ງໄດ້ເຮັດສັນຍາຊື້ຂາຍ. ຫຼັງຈາກຂາຍແລ້ວ ຝ່າຍໂຈດຈຶ່ງໄດ້ເຮັດສັນຍາຄັ້ງທີສອງ ຊຶ່ງທ້າວ ທອງດຳ ປະກາຍແສງ ກໍຮັບຮູ້ ແລະ ໃຫ້ເຊົ່າໜຶ່ງປີ.

**ຈຳເລີຍທີ 2:** ສະເໜີວ່າ ໂຈດຮຽກຮ້ອງຄ່າເຊົ່າເຮືອນຄືນນັ້ນ ແມ່ນບໍ່ເຫັນດີສົ່ງຄືນ ເພາະວ່າໂຈດເປັນຝ່າຍຍ້າຍອອກເອງກ່ອນກຳນົດ.

**ໂຈດ:** ປະຕິເສດບໍ່ຮັບຮູ້ກ່ຽວກັບການແຈ້ງຂອງຈຳເລີຍ.

**ຜູ້ຕາງໜ້າຈຳເລີຍທີ 1:** ຢັ້ງຢືນເອົາຄືເກົ່າ, ກ່ອນຈະຂາຍຝ່າຍໂຈດກໍຮັບຮູ້ແລ້ວ, ຫຼັງຈາກໝົດສັນຍາ ໂຈດກໍໄດ້ມາຕໍ່ສັນຍາໃໝ່.

Copyright by JICA

**ໂຈດ:** ສະເໜີວ່າ ຈຸດປະສົງແມ່ນຮ້ອງຟ້ອງ ນາງ ຄໍາຫຼ້າ ຂາວດີ ເພາະວ່າສັນຍາໄດ້ເຮັດກັບຜູ້ກ່ຽວ.

ໂຈດ, ຈໍາເລີຍ ບໍ່ມີເອກະສານ ແລະ ຫຼັກຖານອັນໃດ ທີ່ຈະມາຍື່ນຕໍ່ສານອີກ.

**ດ້ວຍເຫດນີ້:**

ຈຶ່ງໄດ້ຕັດສິນຕໍ່ໜ້າປະຊາຊົນ ໃນສະຖານແພ່ງເປັນຂັ້ນຕົ້ນໂດຍຊ້ອງໜ້າໂຈດ, ພວກຈໍາເລີຍ

ບອກວ່າ: ຄໍາຮ້ອງຟ້ອງສະບັບລົງວັນທີ 15 ພະຈິກ 2012 ຂອງທ້າວ ບຸນທັນ ຊະນະໃຈ (ຕາງໜ້າໂຈດ) ມີເຫດຜົນ.

- ໃຫ້ນາງ ຄໍາຫຼ້າ ຂາວດີ (ຈໍາເລີຍທີ 1) ຮັບຜິດຊອບສົ່ງເງິນຄ່າເຊົ່າເຮືອນ ຈໍານວນ 12.000 ໂດລາສະຫະລັດ ຄືນໃຫ້ແກ່ທ້າວ ບຸນທັນ ຊະນະໃຈ (ຕາງໜ້າໂຈດ);
- ໃຫ້ຈໍາເລີຍທີ 1 ຮັບຜິດຊອບເງິນຄ່າອາກອນຂອງລັດຈໍານວນ 2% ຂອງມູນຄ່າການຮ້ອງຟ້ອງ;
- ໃຫ້ນາງ ຄໍາຫຼ້າ ຂາວດີ (ຈໍາເລີຍທີ 1) ທົດແທນເງິນຄ່າວາງສານ ຈໍານວນ 200.000 ກີບ ແລະ ຄ່າເສື້ອປົກສໍານວນຄະດີ ຈໍານວນ 35.000 ກີບ ຄືນແກ່ໂຈດ ພ້ອມທັງໃຫ້ຈໍາເລີຍ ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆໃນເວລາຈັດຕັ້ງປະຕິບັດຄໍາຕັດສິນຂອງສານ;

ໄດ້ບອກໂຈດ, ຈໍາເລີຍ ຊາບແລ້ວ, ຖ້າຝ່າຍໃດບໍ່ພໍໃຈຕໍ່ຄໍາຕັດສິນສະບັບນີ້ ມີສິດຂໍອຸທອນໄດ້ພາຍໃນກໍານົດ 20 ວັນ ນັບແຕ່ວັນລົງຄໍາຕັດສິນເປັນຕົ້ນໄປ.

**ໄອຍະການ** | **ຈ່າສານ** | **ໂຈດ** | **ຈໍາເລີຍ**

ອິນໄຊ ວິໄລຮຸ່ງ




ດອກໄມ້ ຈັນມະນີ

ບຸນທັນ ຊະນະໃຈ 

ລໍາເງິນ ຜາຕັ້ງ 

ທຸມແພງ ສັນຕິສຸກ 

ທອງດໍາ ປະກາຍແສງ 

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນແຂວງວຽງຈັນ

ສານປະຊາຊົນເຂດ II ເລກທີ xxx/ຂຕ.ພ

ຄະນະສານແພ່ງ ລົງວັນທີ 04 ເມສາ 2013

# ຄຳຕັດສິນຄະດີແພ່ງ

**ຄະນະສານແພ່ງຂອງສານປະຊາຊົນເຂດ II**

**ແຂວງວຽງຈັນ ຊຶ່ງປະກອບດ້ວຍ:**

| | | |
|---|---|---|
| | ທ່ານ ຈັນນະຄອນ ທອງປັນຍາ | ປະທານ |
| | ທ່ານ ນາງ ສົມກຽດ ສຸກໄຊຍະ | ຄະນະ |
| | ທ່ານ ນາງ ຈັນເພັງ ສະຫວ່າງ | ຄະນະ |
| ນັ່ງພ້ອມດ້ວຍ | ທ່ານ ນາງ ດອກໄມ້ ຈັນມະນີ | ຈ່າສານ |
| ໂດຍຊ້ອງໜ້າ | ທ່ານ ອິນໄຊ ວິໄລຮຸ່ງ | ໄອຍະການປະຊາຊົນເຂດ II |

ໄດ້ເປີດປະຊຸມສານຂຶ້ນໃນວັນທີ 04 ເມສາ 2013, ເວລາ 13:30, ຢູ່ທີ່ຫ້ອງປະຊຸມສານຂອງສານປະຊາຊົນເຂດ II, ແຂວງວຽງຈັນ ເພື່ອພິຈາລະນາຄະດີແພ່ງ ເລກທີ xxx/ຂຕ.ພ, ລົງວັນທີ 11 ທັນວາ 2012.

## ລະຫວ່າງ

ບໍລິສັດກໍ່ສ້າງສາກົນຈຳກັດ.............................................................................ໂຈດ;

ທ້າວ ບຸນທັນ ຊະນະໃຈ, ອາຍຸ 46 ປີ, ສັນຊາດ ລາວ, ອາຊີບ ທະນາຍຄວາມ, ປັດຈຸ ບັນຢູ່ໜ່ວຍ xxx, ບ້ານ ນາຊູ, ເມືອງ ໂພນໂຮງ, ແຂວງວຽງຈັນ ............................ທະນາຍຄວາມໂຈດ.

ນາງ ຄຳຫຼ້າ ຂາວດີ, ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງແກ້ວ, ເມືອງ ວັງວຽງ, ແຂວງ ວຽງຈັນ .........................................ຈຳເລີຍທີ 1;

ທ້າວ ທອງດຳ ປະກາຍແສງ, ອາຍຸ 48 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ xxx, ບ້ານ ວຽງໄຊ, ເມືອງ ວັງວຽງ, ແຂວງວຽງຈັນ ...................................ຈຳເລີຍທີ 2.

**ກ່ຽວເລື່ອງ:** ທວງເອົາເງິນຄ່າເຊົ່າເຮືອນຄືນ

Copyright by JICA

## ສານ

ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

ໂດຍອີງຕາມໜ້າທີ່ ແລະ ສິດອຳນາດຂອງສານຕາມກົດໝາຍວ່າດ້ວຍສານປະຊາຊົນແຫ່ງ ສປປ ລາວ;

ໄດ້ແຈ້ງລາຍຊື່ຄະນະສານ, ຈ່າສານ ແລະ ຄະດີນຳອອກມາພິຈາລະນາໃຫ້ໂຈດ ແລະ ພວກຈຳເລີຍ ຊາບແລ້ວ;

ໄດ້ແຈ້ງສິດໃນການຄ້ານຕົວຄະນະສານ ຫຼື ບຸກຄົນໃດໜຶ່ງໃນຄະນະສານ ແລະ ຈ່າສານ ໃຫ້ໂຈດ ແລະ ພວກຈຳເລີຍ ຊາບແລ້ວ;

ໄດ້ແຈ້ງສິດໃນການຕໍ່ສູ້ຄະດີໃຫ້ໂຈດ, ພວກຈຳເລີຍ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ຊາບແລ້ວ;

ໄດ້ຟັງຄຳໃຫ້ການຂອງໂຈດ ແລະ ພວກຈຳເລີຍ ໃນທີ່ປະຊຸມສານແລ້ວ;

ໄດ້ຟັງຄຳຖະແຫຼງຂອງໄອຍະການປະຊາຊົນແລ້ວ.

## ເນື້ອຄະດີ

ເຫັນຕາມເນື້ອໃນຄຳຮ້ອງຟ້ອງສະບັບ ລົງວັນທີ 15 ພະຈິກ 2012 ຂອງ ທ້າວ ບຸນທັນ ຊະນະໃຈ ທະນາຍຄວາມໂຈດ ກ່າວວ່າ ໃນປີ 2010 ບໍລິສັດກໍ່ສ້າງສາກົນຈຳກັດ ໄດ້ເຊົ່າເຮືອນທ້າວ ຄຳສີ ແສງຈັນເພັງ ໂດຍໄດ້ເຮັດສັນຍາເຊົ່າກັບ ນາງ ຄຳຫຼ້າ ຂາວດີ (ຫຼານສາວ), ພາຍຫຼັງສັນຍາເຊົ່າໝົດກຳນົດແລ້ວ ນາງ ຄຳຫຼ້າ ຂາວດີ ໄດ້ມາເຮັດສັນຍາໃໝ່ ສະບັບລົງວັນທີ 7 ທັນວາ 2011 ໂດຍໄດ້ຕົກລົງຄ່າເຊົ່າເຮືອນເດືອນລະ 2.000 ໂດລາສະຫະລັດ ຕົກເປັນປີລະ 24.000 ໂດລາສະຫະລັດ, ສ່ວນເງິນຄ່າເຊົ່າເຮືອນແມ່ນບໍລິສັດ ໄດ້ຈ່າຍລ່ວງໜ້າໄປແລ້ວ 24.000 ໂດລາສະຫະລັດ, ຕົກມາຮອດວັນທີ 19 ກຸມພາ 2012 ທ້າວ ທອງດຳ ປະກາຍແສງ ໄດ້ແຈ້ງຕໍ່ບໍລິສັດ ວ່າ ຜູ້ກ່ຽວເປັນເຈົ້າຂອງເຮືອນ ແລະ ບໍ່ໃຫ້ບໍລິສັດເຊົ່າຕໍ່ ຊຶ່ງຜູ້ກ່ຽວໄດ້ອ້າງວ່າໄດ້ຊື້ເຮືອນນຳ ທ້າວ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນແຕ່ວັນທີ 23 ພະຈິກ 2011, ຕໍ່ມາວັນທີ 04 ມິຖຸນາ 2012 ບໍລິສັດ ໄດ້ແຈ້ງໃຫ້ ນາງ ຄຳຫຼ້າ ຂາວດີ ຮູ້ວ່າຈະຍ້າຍອອກ, ເຫດຜົນທີ່ຍ້າຍອອກກໍຍ້ອນວ່າ ສັນຍາທີ່ ນາງ ຄຳຫຼ້າ ຂາວດີ ເຮັດຂຶ້ນນັ້ນເປັນສັນຍາຕົວະຍົວະຫຼອກລວງ, ຈາກນັ້ນໃນວັນທີ 01 ກໍລະກົດ 2012 ບໍລິສັດໄດ້ຍ້າຍອອກ ຈຶ່ງທວງເອົາເງິນທີ່ຕົນຈ່າຍລ່ວງໜ້າໄປແລ້ວຈຳນວນ 24.000 ໂດລາສະຫະລັດ ພ້ອມດ້ວຍດອກເບ້ຍ 12% ຕໍ່ປີຕາມອັດຕາເງິນກູ້ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ຄ່າປ່ວຍການຊັບຈຳນວນ 3% ຕໍ່ປີ ຂອງມູນຄ່າ 24.000 ໂດລາສະຫະລັດ ນັບແຕ່ວັນທີ 01 ມັງກອນ 2011 ຈົນຮອດມື້ປະຕິບັດສຳເລັດ.

ຜ່ານມາບໍລິສັດເຄີຍເຂົ້າໄປໂອ້ລົມໄກ່ເກ່ຍກັບ ນາງ ຄຳຫຼ້າ ຂາວດີ ແລ້ວ ແຕ່ຖືກຜູ້ກ່ຽວປະຕິເສດ ໂດຍອ້າງວ່າໃຫ້ໄປທວງເອົານຳ ທ້າວ ທອງດຳ ປະກາຍແສງ, ດັ່ງນັ້ນ ບໍລິສັດ ຈຶ່ງຍື່ນຄຳຮ້ອງຟ້ອງຕໍ່ສານເພື່ອສະເໜີໃຫ້ພິຈາລະນາຕາມລະບຽບກົດໝາຍ.

Copyright by JICA

ເຫັນຕາມເນື້ອໃນຄຳແກ້ຟ້ອງສະບັບລົງວັນທີ 06 ທັນວາ 2012 ຂອງ ນາງ ຄຳຫຼ້າ ຂາວດີ (ຈຳເລີຍທີ 1) ແລະ ບົດບັນທຶກຄຳໃຫ້ການຄັ້ງວັນທີ 30 ມັງກອນ 2013 ຂອງ ທ້າວ ທຸມແພງ ສັນຕິສຸກ (ຕາງໜ້າຈຳເລີຍທີ 1) ອ້າງວ່າ ໃນປີ 2009 ນາງ ຄຳຫຼ້າ ຂາວດີ ຕາງໜ້າໃຫ້ ທ້າວ ຄຳສີ ແສງຈັນເພັງ ເຈົ້າຂອງເຮືອນ ໄດ້ເຮັດສັນຍາເຊົ່າເຮືອນກັບບໍລິສັດກໍ່ສ້າງສາກົນຈຳກັດ ຕາມສັນຍາເຊົ່າສະບັບລົງວັນທີ 23 ຕຸລາ 2009, ໃນເມື່ອສັນຍາດັ່ງກ່າວໄດ້ສິ້ນສຸດແລ້ວ ນາງ ຄຳຫຼ້າ ຂາວດີ ກໍໄດ້ແຈ້ງໃຫ້ບໍລິສັດຮູ້ວ່າ ບໍ່ໃຫ້ເຊົ່າຕໍ່, ຕ້ອງການທີ່ດິນ ແລະ ເຮືອນຄືນ, ແຕ່ບໍລິສັດ ໄດ້ຂໍເຊົ່າຕໍ່ໂດຍອ້າງວ່າ ໄດ້ຕິດຕັ້ງເຄື່ອງຂອງຫຼາຍແລ້ວ, ຫຼັງຈາກນັ້ນຈຶ່ງໄດ້ມາເຮັດສັນຍາໃໝ່ ສະບັບລົງວັນທີ 07 ທັນວາ 2011 ຊຶ່ງໃນໄລຍະເວລາເຮັດສັນຍາໃໝ່ນັ້ນ ທ້າວ ຄຳສີ ແສງຈັນເພັງ ໄດ້ຂາຍທີ່ດິນ ແລະ ເຮືອນໃຫ້ແກ່ ທ້າວ ທອງດຳ ປະກາຍແສງ ແຕ່ບໍ່ທັນໄດ້ຮັບເງິນຄົບຕາມຈຳນວນ ແລະ ບໍ່ທັນໄດ້ໂອນທີ່ດິນ ແລະ ເຮືອນດັ່ງກ່າວ ໃຫ້ເປັນກຳມະສິດຂອງ ທ້າວ ທອງດຳ ປະກາຍແສງເທື່ອ ແລະ ໃນເວລາດຽວກັນນັ້ນ ນາງ ຄຳຫຼ້າ ຂາວດີ ໄດ້ປຶກສາຫາລືກັບ ທ້າວ ທອງດຳ ປະກາຍແສງ, ຈາກນັ້ນ ນາງ ຄຳຫຼ້າ ຂາວດີ ຈຶ່ງໄດ້ເຊັນສັນຍາໃໝ່ ແລະ ໄດ້ຮັບຄ່າເຊົ່າຈຳນວນໜຶ່ງປີເທົ່າກັບ 24.000 ໂດລາສະຫະລັດ, ເມື່ອໄດ້ເງິນແລ້ວ ນາງ ຄຳຫຼ້າ ຂາວດີ ໄດ້ເອົາໃຫ້ ທ້າວ ທອງດຳ ປະກາຍແສງ ຈຳນວນ 20.000 ໂດລາສະຫະລັດ, ສ່ວນ 4.000 ໂດລາສະຫະລັດ ແມ່ນເອົາໄປແລ່ນໂອນທີ່ດິນ ແລະ ເຮືອນ ໃຫ້ເປັນກຳມະສິດຂອງທ້າວ ທອງດຳ ປະກາຍແສງ, ພາຍຫຼັງເຮັດສັນຍາເຊົ່າໃໝ່ແລ້ວ ບໍລິສັດແມ່ນຢູ່ໄດ້ທຶກເດືອນ, ຈາກນັ້ນ ທ້າວ ທອງດຳ ປະກາຍແສງ ໄດ້ແຈ້ງຕໍ່ບໍລິສັດວ່າ ຜູ້ກ່ຽວເປັນເຈົ້າຂອງເຮືອນຜູ້ໃໝ່ ແລະ ໄດ້ອະນຸຍາດໃຫ້ຢູ່ຄົບໜຶ່ງປີຕາມຈຳນວນເງິນຄ່າເຊົ່າທີ່ໄດ້ມາ, ເມື່ອເປັນແນວນັ້ນບໍລິສັດຈຶ່ງບໍ່ພໍໃຈແລ້ວໄດ້ແຈ້ງໃຫ້ ນາງ ຄຳຫຼ້າ ຂາວດີ ຮູ້ວ່າຈະຍ້າຍອອກ ພ້ອມທັງຂໍເງິນຄືນຈຳນວນ 24.000 ໂດລາສະຫະລັດ, ແຕ່ຜູ້ກ່ຽວບໍ່ສາມາດສົ່ງຄືນໃຫ້ໄດ້ ເພາະເງິນຄ່າເຊົ່າໄດ້ເອົາໃຫ້ ທ້າວ ທອງດຳ ປະກາຍແສງ ແລະ ກໍບໍ່ໄດ້ລະເມີດສັນຍາເຊົ່າ, ບໍລິສັດໂຍກຍ້າຍອອກເອງ.

## ວິນິດໄສ

ຜ່ານການຄົ້ນຄວ້າບັນດາເອກະສານ, ຂໍ້ມູນຫຼັກຖານຕ່າງໆ ທີ່ມີຢູ່ໃນສຳນວນຄະດີ ພ້ອມທັງການໄຕ່ສວນໃນທີ່ປະຊຸມສານແລ້ວ.

ເຫັນວ່າ ໃນປີ 2010 ບໍລິສັດກໍ່ສ້າງສາກົນຈຳກັດ ໄດ້ເຊົ່າເຮືອນ ທ້າວ ຄຳສີ ແສງຈັນເພັງ ໂດຍໄດ້ເຮັດສັນຍາເຊົ່າກັບ ນາງ ຄຳຫຼ້າ ຂາວດີ (ຫຼານສາວ), ພາຍຫຼັງສັນຍາເຊົ່າໝົດກຳນົດແລ້ວ ນາງ ຄຳຫຼ້າ ຂາວດີ ໄດ້ເຮັດສັນຍາເຊົ່າໃໝ່ສະບັບລົງວັນທີ 7 ທັນວາ 2011 ແລະ ໄດ້ຕົກລົງຄ່າເຊົ່າເດືອນລະ 2.000 ໂດລາສະຫະລັດ ຕົກເປັນ 24.000 ໂດລາສະຫະລັດ ຕໍ່ປີ ຊຶ່ງບໍລິສັດໄດ້ຈ່າຍຄ່າເຊົ່າລ່ວງໜ້າແລ້ວຈຳນວນ 24.000 ໂດລາສະຫະລັດ, ຕົກມາຮອດວັນທີ 19 ກຸມພາ 2012 ທ້າວ ທອງດຳ ປະກາຍແສງ ໄດ້ແຈ້ງຕໍ່ບໍລິສັດ ວ່າ ຕົນເປັນເຈົ້າຂອງເຮືອນຜູ້ໃໝ່ເພາະຕົນໄດ້ຊື້ທີ່ດິນ ແລະ ເຮືອນຫຼັງນີ້ແຕ່ວັນທີ 23 ພະຈິກ 2011 ແລະ ບໍ່ໃຫ້ບໍລິສັດເຊົ່າຕໍ່. ມາໃນວັນທີ 4 ມິຖຸນາ 2012 ບໍລິສັດໄດ້ແຈ້ງໃຫ້ ນາງ ຄຳຫຼ້າ ຂາວດີ ຮູ້ວ່າຈະຍ້າຍອອກ, ເຫດຜົນທີ່ຍ້າຍອອກກໍຍ້ອນວ່າ ສັນຍາທີ່ນາງ ຄຳຫຼ້າ ຂາວດີ ເຮັດຂຶ້ນນັ້ນເປັນສັນຍາຕົວະຍົວະຫຼອກລວງ, ຈາກນັ້ນໃນວັນທີ 01 ກໍລະກົດ

Copyright by JICA

2012 ບໍລິສັດໄດ້ຍ້າຍອອກ. ດັ່ງນັ້ນ, ບໍລິສັດຈຶ່ງທວງເອົາເງິນຄ່າເຊົ່າຄືນຈຳນວນ 24.000 ໂດລາສະຫະລັດ ພ້ອມດ້ວຍຄ່າປ່ວຍການຊັບ 3% ຂອງມູນຄ່າ 24.000 ໂດລາສະຫະລັດ ແລະ ດອກເບ້ຍຕາມກົດໝາຍ ນັບແຕ່ວັນທີ 1 ມັງກອນ 2011 ຈົນຮອດມື້ປະຕິບັດສຳເລັດ. ຜ່ານມາທັງສອງຝ່າຍເຄີຍໄດ້ໄກ່ເກ່ຍ ແຕ່ຖືກ ນາງ ຄຳຫຼ້າ ຂາວດີ ປະຕິເສດ, ສະນັ້ນ ຕົນຈຶ່ງຮ້ອງຟ້ອງຂຶ້ນສານ ເພື່ອໃຫ້ພິຈາລະນາຕາມລະບຽບກົດໝາຍ.

ເຫັນວ່າ ໃນເບື້ອງຕົ້ນໂຈດໄດ້ຮ້ອງຟ້ອງເອົາຄ່າເຊົ່າເຮືອນຄືນຈຳນວນ 24.000 ໂດລາສະຫະລັດພ້ອມດ້ວຍດອກເບ້ຍ ແລະຄ່າປ່ວຍການຊັບ ແຕ່ໃນທີ່ປະຊຸມສານ ທ້າວ ບຸນທັນ ຊະນະໃຈ ທະນາຍຄວາມໂຈດ ໄດ້ສະເໜີຕໍ່ສານວ່າ ປັດຈຸບັນແມ່ນຂໍປັບປຸງແປງມູນຄ່າຂອງການຮ້ອງຟ້ອງ ຈາກ 24.000 ໂດລາສະຫະລັດ ມາເປັນ 12.000 ໂດລາສະຫະລັດ, ເມື່ອສານພິຈາລະນາແລ້ວເຫັນວ່າເປັນການຮ້ອງຟ້ອງທີ່ມີເຫດຜົນ ເນື່ອງຈາກວ່າ ຕາມສັນຍາເຊົ່າ ສະບັບລົງວັນທີ 7 ທັນວາ 2011 ທາງບໍລິສັດໄດ້ຈ່າຍຄ່າເຊົ່າລ່ວງໜ້າໄປແລ້ວຈຳນວນ 24.000 ໂດລາສະຫະລັດ, ຜ່ານມາບໍລິສັດໄດ້ຢູ່ມາແລ້ວຫົກເດືອນ ຈຶ່ງສະເໜີໃຫ້ຫັກເງິນອອກເລີຍ ແລະ ໃນທີ່ປະຊຸມສານ ທ້າວ ທອງດຳ ປະກາຍແສງ ເຈົ້າຂອງເຮືອນຄົນໃໝ່ ກໍໄດ້ໃຫ້ການວ່າ ກ່ຽວກັບການເຮັດສັນຍາເຊົ່າເຮືອນຄັ້ງທີສອງ ຕົນບໍ່ເຫັນນຳນາງ ຄຳຫຼ້າ ຂາວດີ ແຕ່ໄດ້ບອກນຳຜູ້ກ່ຽວວ່າ ອະນຸຍາດໃຫ້ບໍລິສັດເຊົ່າຕໍ່ອີກໜຶ່ງປີ ແຕ່ ນາງ ຄຳຫຼ້າ ຂາວດີ ໄດ້ເຮັດສັນຍາສອງປີ, ອີກປະການໜຶ່ງເຮືອນຫຼັງດັ່ງກ່າວແມ່ນໄດ້ຂາຍໃຫ້ ທ້າວ ທອງດຳ ປະກາຍແສງ ກ່ອນໜ້ານັ້ນແລ້ວ ຈຶ່ງມາເຮັດສັນຍາເຊົ່າກັບບໍລິສັດໂດຍບໍລິສັດບໍ່ຮູ້ວ່າເຮືອນດັ່ງກ່າວໄດ້ຂາຍແລ້ວ. ອີງຕາມມາດຕາ 5 ຂໍ້ 3 ແລະ ມາດຕາ 20 ຂໍ້ 3 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ເມື່ອສານພິຈາລະນາແລ້ວ ເຫັນວ່າ ສັນຍາດັ່ງກ່າວແມ່ນເຮັດຂຶ້ນໂດຍບໍ່ຖືກຕ້ອງຕາມຫຼັກການຂອງການເຮັດສັນຍາ ຈຶ່ງເຫັນຄວນໃຫ້ ນາງ ຄຳຫຼ້າ ຂາວດີ (ຈຳເລີຍທີ 1) ຮັບຜິດຊອບໃຊ້ແທນເງິນຈຳນວນ 12.000 ໂດລາສະຫະລັດ ຄືນໃຫ້ແກ່ບໍລິສັດ (ໂຈດ);

ເຫັນວ່າ: ຄ່າປ່ວຍການຊັບ ແລະ ດອກເບ້ຍຕາມກົດໝາຍທີ່ບໍລິສັດໄດ້ຮ້ອງຂໍຜ່ານມາ ແຕ່ໃນທີ່ປະຊຸມສານ ໂຈດບໍ່ໄດ້ຮ້ອງຂໍເອົານຳຈຳເລີຍແລ້ວ ສານຈຶ່ງບໍ່ນຳມາພິຈາລະນາ, ເຫັນຄວນໃຫ້ແລ້ວໄປ;

ເຫັນວ່າ: ທ້າວ ທຸມແພງ ສັນຕິສຸກ ຕາງໜ້າ ນາງ ຄຳຫຼ້າ ຂາວດີ ໄດ້ສະເໜີວ່າ ການທີ່ບໍລິສັດມາຮ້ອງຟ້ອງທວງເອົາເງິນຄ່າເຊົ່າເຮືອນຄືນນັ້ນ ນາງ ຄຳຫຼ້າ ຂາວດີ ບໍ່ໄດ້ເອົາ ແລະ ກໍບໍ່ໄດ້ລະເມີດສັນຍາ, ເມື່ອສານພິຈາລະນາແລ້ວເຫັນວ່າ ເປັນການກ່າວອ້າງທີ່ບໍ່ມີເຫດຜົນ ເນື່ອງຈາກວ່າໃນການເຮັດສັນຍາເຊົ່າແມ່ນ ນາງ ຄຳຫຼ້າ ຂາວດີ ແລະ ບໍລິສັດເປັນຄົນເຮັດສັນຍາຮ່ວມກັນ ແລະສັນຍາດັ່ງກ່າວກໍເຮັດຂຶ້ນໂດຍບໍ່ຖືກຕ້ອງຕາມຫຼັກການຂອງສັນຍາຕາມທີ່ໄດ້ກ່າວມາໃນພາກວິນິດໄສຂ້າງເທິງນັ້ນ. ສະນັ້ນ, ສານຈຶ່ງບໍ່ພິຈາລະນາຕາມການກ່າວອ້າງຂອງ ທ້າວ ທຸມແພງ ສັນຕິສຸກ ຕາງໜ້າ ນາງ ຄຳຫຼ້າ ຂາວດີ (ຈຳເລີຍທີ 1);

ເຫັນວ່າ ຈຳເລີຍທີ 1 ເປັນຝ່າຍເສຍຄະດີ ສານຈຶ່ງເຫັນຄວນໃຫ້ຜູ້ກ່ຽວຮັບຜິດຊອບເສຍຄ່າອາກອນຂອງລັດຈຳນວນ 2% ຂອງມູນຄ່າການຮ້ອງຟ້ອງ, ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆໃນເວລາຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

Copyright by JICA

ເຫັນວ່າ ໂຈດໄດ້ນຳເງິນມາວາງສານຈຳນວນ 200.000 ກີບ ແລະ ຄ່າເສື້ອປົກສຳນວນຄະດີ ຈຳນວນ 35.000 ກີບ ແມ່ນສານໄດ້ໃຊ້ຈ່າຍເຂົ້າໃນການດຳເນີນຄະດີໝົດແລ້ວ ຄື ສົ່ງໝາຍຮຽກ 6 ຄັ້ງ ເທົ່າກັບຈຳນວນ 120.000 ກີບ, ອັດສຳເນົາເອກະສານ 7 ຊຸດ ເທົ່າກັບຈຳນວນ 80.000 ກີບ ຈຶ່ງເຫັນຄວນໃຫ້ຈຳເລີຍທີ 1 ໃຊ້ແທນຄືນແກ່ໂຈດ;

ເຫັນຕາມມາດຕາ 5 ຂໍ້ 3 ແລະ 20 ຂໍ້ 3 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາສະບັບປັບປຸງ ປີ 2008, ມາດຕາ 217, 249, 262 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012, ມາດຕາ 18, 19, 23 ແລະ 26 ຂອງກົດ ໝາຍວ່າດ້ວຍຄ່າທຳ ນຽມສານ ປີ 2006.

**ດ້ວຍເຫດນີ້**

ຈຶ່ງໄດ້ຕັດສິນຕໍ່ໜ້າປະຊາຊົນໃນສະຖານແພ່ງເປັນຂັ້ນຕົ້ນ ໂດຍຊ້ອງໜ້າ ໂຈດ ແລະ ພວກຈຳເລີຍ.

ບອກວ່າ ຄຳຮ້ອງຟ້ອງສະບັບລົງວັນທີ 15 ພະຈິກ 2012 ຂອງ ໂຈດ ມີເຫດຜົນ;

ໃຫ້ ນາງ ຄຳຫຼ້າ ຂາວດີ (ຈຳເລີຍທີ 1) ຮັບຜິດຊອບໃຊ້ແທນຄ່າເຊົ່າເຮືອນຈຳນວນ 12.000 ໂດລາສະຫະລັດ ໃຫ້ແກ່ໂຈດ.

ໃຫ້ ນາງ ຄຳຫຼ້າ ຂາວດີ ຈຳເລີຍທີ 1 ຮັບຜິດຊອບເສຍເງິນຄ່າອາກອນຂອງລັດຈຳນວນ 2% ຂອງມູນຄ່າການຮ້ອງຟ້ອງ;

ໃຫ້ ນາງ ຄຳຫຼ້າ ຂາວດີ (ຈຳເລີຍທີ 1) ທົດແທນເງິນວາງສານຈຳນວນ 200.000 ກີບ ແລະ ຄ່າເສື້ອປົກສຳນວນຈຳນວນ 35.000 ກີບ ຄືນແກ່ໂຈດ ພ້ອມທັງໃຫ້ຈຳເລີຍຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆໃນເວລາຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

ໄດ້ບອກ ໂຈດ, ພວກຈຳເລີຍ ແລະ ໄອຍະການປະຊາຊົນ ຊາບແລ້ວ ຖ້າຝ່າຍໃດບໍ່ພໍໃຈຕໍ່ຄຳຕັດສິນສະບັບນີ້ ມີສິດຂໍອຸທອນ, ສະເໜີຄັດຄ້ານ ໄດ້ພາຍໃນກຳນົດຊາວວັນ ນັບແຕ່ວັນລົງ ຄຳຕັດສິນນີ້ເປັນຕົ້ນໄປ.

**ປະທານຄະນະສານ**




ຈັນນະຄອນ ທອງປັນຍາ

**ຈ່າສານ**




ດອກໄມ້ ຈັນມະນີ

Copyright by JICA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ....................
ສານປະຊາຊົນ........... ເລກທີ ......./ຂຕ......
ຄະນະສານ........... ລົງວັນທີ....../...../.........

# ຄຳຕັດສິນຄະດີ.......

## ຄະນະສານ.......ຂອງສານປະຊາຊົນ..................

## ຊຶ່ງປະກອບດ້ວຍ:

ທ່ານ .................................. ປະທານ
ທ່ານ .................................. ຄະນະ
ທ່ານ .................................. ຄະນະ
ນັ່ງພ້ອມດ້ວຍ ທ່ານ .................................. ຈ່າສານ
ໂດຍຊ້ອງໜ້າ ທ່ານ ........................... ໄອຍະການປະຊາຊົນ...............

ໄດ້ເປີດປະຊຸມສານຂຶ້ນໃນວັນທີ ......./...../........., ເວລາ ..........., ຢູ່ທີ່ຫ້ອງປະຊຸມສານຂອງສານປະຊາຊົນ.............ເພື່ອພິຈາລະນາຄະດີ.........ເລກທີ....../ຂຕ...., ລົງວັນທີ...ເດືອນ....ປີ...

## ລະຫວ່າງ

ຂ້າພະເຈົ້າ ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ.... , ອາຊີບ.......... ເຮືອນເລກທີ..... , ໜ່ວຍ........, ບ້ານ.........., ເມືອງ............., ແຂວງ.........................ໂຈດ

ຂ້າພະເຈົ້າ ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ.... , ອາຊີບ.......... ເຮືອນເລກທີ........., ໜ່ວຍ......., ບ້ານ.........., ເມືອງ...., ແຂວງ.......... ເປັນຜູ້ຕາງໜ້າໂຈດ.

ຂ້າພະເຈົ້າ ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ.... , ອາຊີບ.......... ເຮືອນເລກທີ........, ໜ່ວຍ........., ບ້ານ.........., ເມືອງ............., ແຂວງ.....................ຈຳເລີຍ

ຂ້າພະເຈົ້າ ທ້າວ/ນາງ ........................ອາຍຸ........ ປີ, ສັນຊາດ.... , ອາຊີບ.......... ເຮືອນເລກທີ........., ໜ່ວຍ....., ບ້ານ.........., ເມືອງ...., ແຂວງ.......... ເປັນຜູ້ຕາງໜ້າຈຳເລີຍ;

**ກ່ຽວເລື່ອງ: .....................................**

Copyright by JICA

## ສານ

ໃນນາມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

ໂດຍອີງຕາມໜ້າທີ່ແລະສິດອຳນາດຂອງສານຕາມກົດໝາຍວ່າດ້ວຍສານປະຊາຊົນແຫ່ງ ສປປ ລາວ;

ໄດ້ແຈ້ງລາຍຊື່ຄະນະສານ, ຈ່າສານ ແລະ ຄະດີນຳອອກມາພິຈາລະນາໃຫ້ພວກໂຈດ ແລະ ພວກຈຳເລີຍ ຊາບແລ້ວ;

ໄດ້ແຈ້ງສິດໃນການຄ້ານຕົວຄະນະສານ ຫຼື ບຸກຄົນໃດໜຶ່ງໃນຄະນະສານ ແລະ ຈ່າສານ ໃຫ້ໂຈດ ແລະ ພວກຈຳເລີຍ ຊາບແລ້ວ;

ໄດ້ແຈ້ງສິດໃນການຕໍ່ສູ້ຄະດີໃຫ້ພວກໂຈດ, ພວກຈຳເລີຍ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີຊາບແລ້ວ;

ໄດ້ຟັງຄຳໃຫ້ການຂອງພວກໂຈດ ແລະ ພວກຈຳເລີຍ ໃນທີ່ປະຊຸມສານແລ້ວ;

ໄດ້ຟັງຄຳຖະແຫຼງຂອງທະນາຍຄວາມໂຈດ ແລະ ຈຳເລີຍແລ້ວ;

ໄດ້ຟັງຄຳເຫັນສຸດທ້າຍຂອງຄູ່ຄວາມແລ້ວ;

ໄດ້ຟັງຄຳຖະແຫຼງຂອງຫົວໜ້າອົງການໄອຍະການປະຊາຊົນແລ້ວ.

## ເນື້ອຄະດີ

....................................................................................................................

....................................................................................................................

....................................................................................................................

## ວິນິດໄສ

ຜ່ານການຄົ້ນຄວ້າບັນດາເອກະສານ, ຂໍ້ມູນຫຼັກຖານຕ່າງໆ ທີ່ມີຢູ່ໃນສຳນວນຄະດີ ພ້ອມທັງການໄຕ່ສວນໃນທີ່ປະຊຸມສານແລ້ວ.

ເຫັນວ່າ ..........................................................................................

....................................................................................................................

ເຫັນວ່າ ..........................................................................................

....................................................................................................................

ເຫັນວ່າ ..........................................................................................

....................................................................................................................

ເຫັນວ່າ ..........................................................................................

....................................................................................................................

ເຫັນວ່າ ..........................................................................................

....................................................................................................................

Copyright by JICA

ເຫັນຕາມ...........................................................................................................
.........................................................................................................
.........................................................................................................
.........................................................................................................

**ດ້ວຍເຫດນີ້**

ຈຶ່ງໄດ້ຕັດສິນຕໍ່ໜ້າປະຊາຊົນໃນສະຖານແພ່ງເປັນຂັ້ນຕົ້ນ ໂດຍຊ້ອງໜ້າ ໂຈດ ແລະ ພວກຈຳເລີຍ.

ບອກວ່າ ຄຳຮ້ອງຟ້ອງສະບັບລົງວັນທີ ......./......./...... ຂອງໂຈດ ມີເຫດຜົນ, ມີເຫດຜົນບາງສ່ວນ ຫຼືບໍ່ມີເຫດຜົນທັງໝົດ;

..............................................................................................................
.........................................................................................................

ໄດ້ບອກ ໂຈດ, ພວກຈຳເລີຍ ແລະ ໄອຍະການປະຊາຊົນ ຊາບແລ້ວ ຖ້າຝ່າຍໃດບໍ່ພໍໃຈຕໍ່ຄຳຕັດສິນສະບັບນີ້ ມີສິດຂໍອຸທອນ, ສະເໜີຄັດຄ້ານ ໄດ້ພາຍໃນກຳນົດຊາວວັນ ນັບແຕ່ວັນລົງຄຳຕັດສິນນີ້ເປັນຕົ້ນໄປ.

.........................................................................................................
.........................................................................................................
.........................................................................................................

**ປະທານຄະນະສານ** **ຈ່າສານ**

Copyright by JICA

Copyright by JICA

# ແຜນວາດການສະຫຼູບເຫດການ



ສໍານວນຄະດີ ແພ່ງ ສໍາລັບ ນັກສຶກສາ ແລະ ນັກຝຶກອົບຮົມ ກົດໝາຍ

Civil Mock Case file for Legal Education and Training

ໄດ້ຮັບການຊ່ວຍເຫຼືອ ທາງດ້ານວິຊາການ

ແລະ ການພິມ ຈາກ ອົງການຮ່ວມມືສາກົນຍີ່ປຸ່ນ (JICA)

**ສໍາລັບແຈກຢາຍ ຫ້າມ ຊື້ - ຂາຍ**

ພິມຄັ້ງທີ 1

100 ຊຸດ ທີ່ ໂຮງພິມເທບປັນຍາ ນະຄອນຫຼວງວຽງຈັນ, ເມສາ 2018

**JICA Project for Human Resource Development in the Legal sector**

Tel: 021-254307   Fax: 021-254308

**Japan International Cooperation Agency (JICA) Laos Office**

2nd Floor, Sacombank Building, 044 Haengboun Rd, Ban Haisok,

Chanthabouly District, Vientiane Capital, Lao P.D.R

Copyright by JICA

Supported by:

Copyright by JICA